ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກະຊວງແຜນການ ແລະ ການລົງທຶນ

ອົງການຮ່ວມມືສາກົນຍີ່ປຸ່ນ ປະຈຳລາວ (JICA)

**ການຮ່ວມມືທາງດ້ານວິຊາການ ຂອງ ອົງການໄຈກາ**

**ສປປ ລາວ**

**ໂຄງການສົ່ງເສີມຄວາມສາມາດທາງດ້ານການຄຸ້ມຄອງໂຄງການລົງທຶນຂອງລັດ**
**(PCAP2)**

# ບົດລາຍງານການສຳເລັດໂຄງການ

**ສິງຫາ, 2011**

**ບໍລິສັດ ໄອຊີເນັດ ຈຳກັດ**

# ສາລະບານ

ອັກສອນຫຍໍ້ ...... vii

ຄຳນຳ ...... viii

ບົດຂັດຫຍໍ້ ...... ix

1. ຂໍ້ມູນພື້ນຖານຂອງໂຄງການ ...... 1
   1.1. ຂໍ້ມູນພື້ນຖານ ...... 1
   1.2. ຂັ້ນຕອນການສ້າງໂຄງການ ...... 2

2. ການອອກແບບໂຄງການ ...... 3
   2.1. ຂໍ້ມູນພື້ນຖານຂອງໂຄງການ ...... 3
   2.2. ຈຸດປະສົງ ແລະ ເປົ້າໝາຍໂດຍລວມຂອງໂຄງການ ...... 4
   1. ຜົນໄດ້ຮັບ ...... 7
   2. ວຽກງານຕ່າງໆ ...... 13
   3. ປັດໄຈນຳເຂົ້າ ...... 17

3. ຜົນສຳເລັດຂອງບັນດາກິດຈະກຳ ແລະ ຜົນໄດ້ຮັບຂອງໂຄງການ ...... 19
   3.1. ຜົນໄດ້ຮັບ 1 ...... 19
   3.2 ຜົນໄດ້ຮັບ 2 ...... 27
   3.3 ຜົນໄດ້ຮັບ 3 ...... 30
   3.4 ຜົນໄດ້ຮັບ 4 ...... 31
   3.5 ການປະຊຸມຄະນະກຳມະການປະສານງານຮ່ວມ ແລະ ການສຳມະນາ ...... 40

4. ຜົນສຳເລັດຂອງເປົ້າໝາຍໂຄງການ ...... 48

5. ຜົນຂອງບົດປະເມີນຜົນສຸດທ້າຍ ...... 50

6. ຄຳແນະນຳໂດຍຊ່ຽວຊານຂອງໂຄງການ ...... 53

## ຮູບບັນດາກິດຈະກຳຕ່າງໆຂອງ ໂຄງການພີແຄັບ 2 (PCAP2)





ກອງປະຊຸມການປະເມີນຜົນຂອງການປະເມີນທີ່ແຂວງອຸດົມໄຊ, ເດືອນມິຖຸນາ 2008





ກອງປະຊຸມການປະເມີນຜົນຂອງການປະເມີນທີ່ ກະຊວງໂຍທາ ແລະຂົນສົ່ງ, ເດືອນກໍລະກົດ 2008





ການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນລັດ, ເດືອນທັນວາ 2008



ການລົງສໍາພາດທີ່ ແຂວງ ສາລະວັນ, ເດືອນທັນວາ 2008



ການປະເມີນຜົນໄລຍະກາງຂອງອົງການ JICA, ເດືອນທັນວາ 2009






ກອງປະຊຸມຄະນະປະສານງານຮ່ວມຄັ້ງທີ 3 (3rd JCC), ເດືອນສິງຫາ 2009



ກອງປະຊຸມ JCC ຄັ້ງທີ 4, ເດືອນມີນາ 2010




ກອງປະຊຸມ JCC ຄັ້ງທີ 5, ເດືອນສິງຫາ 2010





ການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນ ລັດທີ່ແຂວງຜົ້ງສາລີ, ເດືອນມັງກອນ 2010

ການຝຶກອົບຮົມການຄຸ້ມຄອງທາງດ້ານການ ເງິນສຳລັບຂັ້ນສູນກາງ, ເດືອນມັງກອນ 2010





ການຝຶກອົບຄູຝຶກ (TOT) ຂອງກະຊວງແຜນການ ແລະ ການລົງທຶນ, 2010





ການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນລັດຂັ້ນກະຊວງ, ເດືອນກຸມພາ 2010






ກອງປະຊຸມ JCC ຄັ້ງທີ 6, ເດືອນ ກໍລະກົດ 2010





ການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນລັດທີ່ນະຄອນຫຼວງວຽງຈັນ, ເດືອນພະຈິກ 2010






ການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນລັດທີ່ນະຄອນຫຼວງວຽງຈັນ, ເດືອນພະຈິກ 2010



ການຝຶກອົບຮົມໃຫ້ແກ່ບັນດາເຈົ້າຂອງໂຄງການຢູ່ບັນດາແຂວງ, ເດືອນທັນວາ2010



ການປະເມີນຜົນຕອນທ້າຍໂຄງການຂອງອົງການ ໄຈກາ, ເດືອນມີນາ 2011



ບັນດາປື້ມຄູ່ມື ແລະ ປື້ມບົດແນະນຳ

# ອັກສອນຫຍໍ້

| | |
|---|---|
| DPI | ພະແນກແຜນການ ແລະ ການລົງທຶນແຂວງ |
| GoL | ລັດຖະບານ ສປປ ລາວ |
| LDC | ບັນດາປະເທດດ້ອຍພັດທະນາ |
| JICA | ອົງການເພື່ອການຮ່ວມມືສາກົນຍີ່ປຸ່ນ |
| JCC | ຄະນະກຳການປະສານງານຮ່ວມ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| MPI-DIC | ກົມຮ່ວມມືສາກົນ, MPI |
| MPI-DOE | ກົມປະເມີນຜົນ, MPI |
| MPI-DOP | ກົມແຜນການ, MPI |
| MPI-DoOP | ກົມຈັດຕັ້ງພະນັກງານ |
| NSEDP | ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ |
| ODA | ການຊ່ວຍເຫລືອລ້າເພື່ອການພັດທະນາຢ່າງເປັນທາງການ |
| OJT | ການຝຶກອົບຮົມກັບທີ່ |
| PDM | ຕາຕະລາງອອກແບບໂຄງການ |
| PCAP1 | ໂຄງການສ້າງຂີດຄວາມສາມາດໃນການຄຸ້ມຄອງ PIP |
| PCAP2 | ໂຄງການເສີມຂະຫຍາຍຂີດຄວາມສາມາດໃນການຄຸ້ມຄອງ PIP |
| PIP | ແຜນງົບການລົງທຶນຂອງລັດ |
| PO | ເຈົ້າຂອງໂຄງການ |
| POT | ແຜນງົບສະແດງວັດຖຸປະສົງ |
| TOT | ຝຶກອົບຮົມຂອງຜູ້ຈັດຝຶກອົບ |

## ຄຳນຳ

ບົດລາຍງານນີ້ສະແດງໃຫ້ເຫັນຂັ້ນຕອນການວາງແຜນ, ບັນດາກິດຈະກຳທີ່ໄດ້ຮັບການຈັດຕັ້ງ ແລະ ຜົນສຳເລັດຂອງຜົນໄດ້ຮັບ ແລະ ເປົ້າໝາຍໂຄງການ ເພື່ອອົງການຮ່ວມມືສາກົນຂອງຍີ່ປຸ່ນ (JICA) ແຜນການຮ່ວມມືດ້ານເຕັກນິກ; ໂຄງການຍົກລະດັບຄວາມສາມາດ ໃນການຄຸ້ມຄອງການລົງທຶນຂອງລັດ (PCAP2). ບົດລາຍງານນີ້ໄດ້ຖືກຂຽນຂຶ້ນມາເປັນພາສາອັງກິດ ແລະຖືກແປເປັນພາສາລາວ ແລະ ພາສາຍີ່ປຸ່ນ.

ແຜນງານການຄຸ້ມຄອງການລົງທຶນຂອງລັດ ໄດ້ຮັບການຈັດຕັ້ງປະຕິບັດພາຍໃຕ້ວັດຖຸປະສົງຂອງ ການປັບປຸງການປະຕິບັດໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ (MPI), ພະແນກແຜນການ ແລະ ການລົງທຶນແຂວງ (ພຜທ), ແລະ ອົງການຈັດຕັ້ງຂັ້ນແຂວງທີ່ຢູ່ພາຍໃຕ້ການຊີ້ນຳຂອງ ກະຊວງ ຜທ; ໂດຍຜ່ານການປະເມີນຜົນໃໝ່, ຂັ້ນຕອນການຄວບຄຸມ ແລະ ປະເມີນຜົນ ພາຍໃຕ້ງົບປະມານທີ່ໄດ້ຮັບການຈັດແບ່ງໃຫ້ ເພື່ອໃຊ້ຈ່າຍໃນອົງການຈັດຕັ້ງ. ໂຄງການດັ່ງກ່າວນັ້ນໄດ້ເລີ່ມຕົ້ນໃນເດືອນມີນາ 2008 ແລະ ໄດ້ສຳເລັດໃນເດືອນສິງຫາ 2011.

ສາມອົງການຈັດຕັ້ງຂອງ ກະຊວງ ຜທ ປະກອບມີ ກົມປະເມີນຜົນ (ຜທກປຜ), ກົມແຜນການ (ຜທກຜກ), ແລະ ກົມຮ່ວມມືກັບສາກົນ (ຜທກຣສ) ໄດ້ຖືກມອບໝາຍໃຫ້ດຳເນີນການຮ່ວມມືດ້ານວິຊາການ (ເປັນຄູ່ຮ່ວມງານ) ກັບ ໂຄງການ PCAP2. ຊ່ຽວຊານຈຳ ນວນໜຶ່ງຈາກ ບໍລິສັດທີ່ປຶກສາ ICNet ຈຳກັດ, ປະເທດຍີ່ປຸ່ນໄດ້ຖືກສົ່ງມາປະຈຳໂຄງການ PCAP2.

# ບົດສັງລວມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ຕັ້ງເປົ້າຫລຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ ພາຍໃນປີ 2020. ລັດຖະບານລາວ (ລບ) ພະຍາຍາມບັນລຸເປົ້າໝາຍນີ້ໂດຍຜ່ານແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ (NSEDP), ທີ່ໄດ້ຮັບການປັບປຸງຄືນໃນທຸກໆ 5 ປີ. ປະຈຸບັນ ປະເທດລາວກຳລັງຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີເຈັດ, ພາຍໃນໄລຍະເວລາແຕ່ປີ 2011 ເຖິງ 2015. ແຜນງານການລົງທຶນຂອງລັດ (PIP) ແມ່ນລະບົບການລົງທຶນຂອງລັດທີ່ຄົບຖ້ວນ ຊຶ່ງຖືກຄຸ້ມຄອງໂດຍລັດຖະບານລາວ, ແລະ ຖືວ່າເປັນເຄື່ອງມືທີ່ສຳຄັນໃນການປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ NSEDP.

ກະຊວງແຜນການ ແລະ ການລົງທຶນ (ຜທ) ມີຄວາມຮັບຜິດຊອບ ແລະ ສິດອຳນາດໂດຍລວມໃນການຄຸ້ມຄອງລະບົບໂຄງການແຜນງານການລົງທຶນຂອງລັດ PIP. ເນື່ອງຈາກວ່າ ໄດ້ມີຫລາຍບັນຫາທີ່ຖືກເລັງເຫັນໃນການຄຸ້ມຄອງໂຄງການ PIP, ລັດຖະບານລາວໄດ້ຮຽກຮ້ອງໃຫ້ມີການຮ່ວມມືດ້ານວິຊາການຈາກລັດຖະບານຍີ່ປຸ່ນ, ສະນັ້ນ ອົງການຮ່ວມມືສາກົນຂອງຍີ່ປຸ່ນ (ອົງການໄຈກາ) ແລະ ຜທ ໄດ້ເຫັນດີ ແລະ ໄດ້ເຊັນຂໍ້ຕົກລົງເພື່ອຈັດຕັ້ງໂຄງການ ເພື່ອສ້າງຂີດຄວາມສາມາດໃນການຄຸ້ມຄອງແຜນວຽກການລົງທຶນຂອງລັດ (PCAP1) ໃນເດືອນພະຈິກ 2004. PCAP1 ໄດ້ສິ້ນສຸດລົງຢ່າງປະສົບຜົນສຳເລັດໃນເດືອນຕຸລາ 2007, ແລະ ລັດຖະບານລາວໄດ້ຂໍໃຫ້ລັດຖະບານຍີ່ປຸ່ນໃຫ້ການຊ່ວຍເຫລືອໂດຍສືບຕໍ່ໄລຍະເວລາຂອງການຮ່ວມມືດ້ານວິຊາການ. ລັດຖະບານຍີ່ປຸ່ນເຫັນເຖິງຄວາມຈຳເປັນຂອງການຮ່ວມມື ຈຶ່ງໄດ້ຕັດສິນໃຈສືບຕໍ່ໃຫ້ການຊ່ວຍເຫລືອແກ່ ສປປ ລາວ ໂດຍຜ່ານໂຄງການເພື່ອເສີມສ້າງຂີດຄວາມສາມາດຂອງການຄຸ້ມຄອງແຜນວຽກການລົງທຶນຂອງລັດ (PCAP2).

ໂຄງການ PCAP2 ໄດ້ຖືກຈັດຕັ້ງປະຕິບັດນັບແຕ່ເດືອນມີນາ 2008 ເຖິງ ເດືອນສິງຫາ 2011, ມີສາມກົມພາຍໃນ ກະຊວງ ຜທ ທີ່ໄດ້ຖືກມອບໝາຍໃຫ້ເຮັດວຽກຮ່ວມກັບໂຄງການດັ່ງກ່າວ ໂດຍປະກອບມີກົມປະເມີນຜົນ (ຜທກປຜ), ກົມແຜນການ (ຜທກຜກ), ແລະ ກົມຮ່ວມມືກັບສາກົນ (ຜທກຮສ). ພາຍໃຕ້ເປົ້າໝາຍຂອງໂຄງງການ ກະຊວງ ຜທ ແລະ ກົມແຜນການ ແລະ ການລົງທຶນ *(ກຜລ)* ເປັນຜູ້ດຳເນີນໂຄງການ *PIP* ໂດຍຜ່ານການປະເມີນຜົນແບບໃໝ່, ຂັ້ນຕອນການຄວບຄຸມ ແລະ ປະເມີນຜົນ ພາຍໃນເພດານງົບປະມານທີ່ເຄັ່ງຄັດ ແລະ ນຳສະເໜີຕໍ່ສະພາແຫ່ງຊາດເພື່ອການອະນຸມັດ, ໂຄງການດັ່ງກ່າວໄດ້ປະກອບດ້ວຍສີ່ຜົນໄດ້ຮັບທີ່ຄາດຫວັງໄວ້ ດັ່ງຕໍ່ໄປນີ້;

ຜົນໄດ້ຮັບທີ *1:* ພະນັກງານວິຊາການຂອງກຜລທີ່ເຮັດວຽກຢູ່ທຸກແຂວງ ແລະ ພະນັກງານຂອງກົມແຜນການຂອງທຸກກະຊວງ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ມີຄວາມຮູ້ ແລະ ທັກສະ ພື້ນຖານ ແລະ ທົ່ວໄປ ກ່ຽວກັບການຄຸ້ມຄອງໂຄງການ PIP.

ຜົນໄດ້ຮັບທີ *2:* ລະບຽບຫລັກການກ່ຽວກັບການເງິນໄດ້ຖືກນຳສະເໜີ ແລະ ຖືກທັນເປັນສະຖາບັນ ໃນການຄຸ້ມຄອງໂຄງການ

ຜົນໄດ້ຮັບທີ *3:* *ຂອບວຽກດ້ານນິຕິກຳຂອງການຄຸ້ມຄອງໂຄງການ* PIP ໃຫ້ມີປະສິດທິ ພາບ ແລະ ປະສິດທິຜົນ ແມ່ນໄດ້ຮັບການພັດທະນາ ແລະ ຮັດແໜ້ນ

ຜົນໄດ້ຮັບທີ *4:* ພະນັກງານຂອງກະຊວງ ຜທ, ພະນັກງານຂອງກຜລ ຢູ່ທຸກແຂວງ ແລະ ພະນັກງານຂອງກົມແຜນການຂອງທຸກກະຊວງ ໄດ້ຮັບການຍົກລະດັບຄວາມຮູ້ ແລະ ທັດສະດ້ານການຄຸ້ມຄອງໂຄງການ PIP ສຳລັບ ຄູ່ຮ່ວມຄຸ້ມຄອງກອງທຶນການຊ່ວຍເຫລືອທາງການເພື່ອການພັດທະນາ (ODA), ການຄຸ້ມຄອງ ໂຄງການ PIP ໃນຂັ້ນເມືອງ ແລະ ແຜນງານຂະແໜງການ.

ໂຄງການດັ່ງກ່າວໄດ້ຖືກດຳເນີນການແບບຮອບຄອບເພື່ອໃຫ້ສອດຄ່ອງກັບບັນດາກິດຈະກຳຂອງສີ່ຜົນໄດ້ຮັບ ຢ່າງມີປະສິດທິພາບ ແລະ ປະສິດທິຜົນທີ່ສຸດ. ພ້ອມກັນນັ້ນ ໂຄງການດັ່ງກ່າວຍັງໄດ້ມີຄວາມລະມັດລະວັງ ເພື່ອໃຫ້ສອດຄ່ອງກັບແຜນງົບປະມານປະຈຳປີຂອງລັດຖະບານ ສຳລັບແຜນງານການລົງທຶນຂອງລັດ, ເນື່ອງຈາກວ່າ ກຳນົດໝາຍ ແລະ ຜົນການປະຕິບັດງານຂອງພວກເຂົາແມ່ນ ພົວພັນຢ່າງຫລວງຫລາຍຕໍ່ບັນດາກິດຈະກຳຂອງໂຄງການດັ່ງກ່າວ. ພ້ອມກັນນັ້ນ ໂຄງການດັ່ງກ່າວຍັງໄດ້ສ້າງມາດຕະການທີ່ຍືນຍົງ ເພື່ອວ່າ ຜທ ແລະ ກຜລ ຈະຍັງຄົງປະຕິບັດຕາມໄດ້ ພາຍຫລັງທີ່ໂຄງການສິ້ນສຸດລົງ.

PCAP2 ສຳເລັດບັນດາກິດຈະກຳ ໄປພ້ອມກັບແຜນການທີ່ລະບຸໄວ້ໃນຕາຕະລາງ ການອອກແບບໂຄງການ, ແລະ ບັນລຸໄດ້ຕົວຊີ້ວັດຂອງຜົນໄດ້ຮັບທັງສີ່ເກືອບທັງໝົດ. ເນື້ອໃນຂອງບັນດາກິດຈະກຳໄດ້ຖືກຈັດຕັ້ງໂດຍຜົນໄດ້ຮັບ ໄປພ້ອມກັບ ລະດັບຂອງການບັນລຸຜົນສຳເລັດ ຊຶ່ງສະແດງໃຫ້ເຫັນດັ່ງຕໍ່ໄປນີ້:

| |
|---|
| [ຜົນໄດ້ຮັບທີ 1]<br>ໂຄງການດັ່ງກ່າວໄດ້ນຳໄປສູ່ການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP ປະຈຳປີ ແລະ ຈັດຝຶກອົບຮົມໃນເວລາກຳລັງປະຕິບັດໜ້າທີ່ (OJT) ໂດຍແນ່ໃສ່ອົງການຈັດຕັ້ງທີ່ກ່ຽວຂ້ອງກັບການຄຸ້ມຄອງ PIP ຈາກປີທີສອງ ຫາ ປີທີສີ່ຂອງແຜນວຽກການລົງທຶນຂອງລັດ. ດັ່ງນັ້ນ, ປະຈຸບັນ ພະນັກງານຂັ້ນແຂວງແມ່ນສາມາດເຮັດການຄຸ້ມຄອງແຜນວຽກການລົງທຶນຂອງລັດໄດ້ດີ, ຊຶ່ງມັນໄດ້ບົ່ງບອກວ່າ ນຶ່ງໃນສອງຕົວຊີ້ວັດແມ່ນບັນລຸຜົນສຳເລັດຢ່າງເຕັມສ່ວນ.<br><br>ສຳລັບ ພະນັກງານຢູ່ໃນກົມແຜນການຂອງອົງການຈັດຕັ້ງລັດ, ພະນັກງານຈາກເຈັດກະຊວງຫລັກໄດ້ຮັບການຝຶກອົບຮົມ, ແລະ ສາມກະຊວງແມ່ນສາມາດໃຫ້ຜົນຕອບແທນ. ສະນັ້ນ, ຕົວຊີ້ວັດທີສອງແມ່ນສາມາດບັນລຸໄດ້ບາງສ່ວນ. |
| [ຜົນໄດ້ຮັບທີ 2]<br>ໂຄງການດັ່ງກ່າວໄດ້ສ້າງວິທີການເພື່ອການຄຸ້ມຄອງງົບປະມານຂອງແຜນງານການລົງທຶນຂອງລັດ ແລະ ການຄຸ້ມຄອງການເງິນ, ແລະ ໄດ້ນຳເອົາພວກມັນຮວມເຂົ້າໃນຄູ່ມືການໃຊ້ ແລະ ປຶ້ມຄູ່ມື. ການຝຶກອົບຮົມການຄຸ້ມຄອງການເງິນຂອງ PIP ແລະ ການປະຊຸມສຳມະນາ ໄດ້ຖືກຈັດຂຶ້ນພາຍໃນໄລຍະຂອງການຈັດຕັ້ງປະຕິບັດໂຄງການ. ດັ່ງນັ້ນ, ສອງໃນສາມຕົວຊີ້ວັດໄດ້ສະແດງໃຫ້ເຫັນການບັນລຸຜົນສຳເລັດຢ່າງເຕັມສ່ວນ.<br><br>ຕົວຊີ້ວັດທີສາມ; ຜທ ແລະ ກຜລ ພັດທະນາ ແລະ ສ້າງຕັ້ງ ຂະບວນການປະເມີນງົບປະມານ, ການຈຳກັດຈຳນວນເງິນສະ ໜັບສະໜູນພາຍໃນໃຫ້ແກ່ໂຄງການ *PIP* ແລະ ໂຄງການໂອດີເອ ພາຍໃນເພດານງົບປະມານປະຈຳປີ, ແລະ ການວາງແຜນການນຳໃຊ້ຕາຕະລາງງົບປະມານ ເພື່ອການຄາດຄະເນ ແລະ ຕັ້ງເພດານ*; ບໍ່ສາມາດບັນລຸຜົນໄດ້ຢ່າງເຕັມສ່ວນ*. ເຖິງວ່າ ຜທ ແລະ ກຜລ ໄດ້ຮັບຄວາມຮູ້ກ່ຽວກັບເຄື່ອງມືຄຸ້ມຄອງການເງິນຂອງ PIP, ການຈັດຕັ້ງປະຕິບັດຢ່າງເຕັມສ່ວນຂອງເຄື່ອງມືເຫລົ່ານີ້ໃນຂະບວນການ |

| |
|---|
| ສ້າງງົບປະມານແມ່ນບໍ່ໄດ້ຮັບການສ້າງຕັ້ງຂຶ້ນ ຍ້ອນວ່າ ມັນບໍ່ໄດ້ຖືກອະນຸມັດ ຫລື ຖືກຊີ້ແນະຢ່າງເໝາະສົມໂດຍຜທ. |
| [ຜົນໄດ້ຮັບທີ 3]<br>ໂຄງການດັ່ງກ່າວໄດ້ສະໜັບສະໜູນໃນການໃຫ້ຄໍາແນະນໍາດ້ານເຕັກນິກໃນລະຫວ່າງການສ້າງກົດໝາຍລົງທຶນຂອງລັດ ທີ່ໄດ້ອອກເປັນກົດໝາຍໃນເດືອນທັນວາ 2009. ໂຄງການດັ່ງກ່າວຍັງໄດ້ສະໜັບສະໜູນຫລາຍຂຶ້ນໃນການເຜີຍແຜ່ກົດໝາຍດັ່ງກ່າວໃນຂອບເຂດທົ່ວປະເທດ ໂດຍຜ່ານການແຈກຢາຍປຶ້ມຄູ່ມື ແລະ ການຈັດຝຶກອົບຮົມ. ການກໍານົດການຈັດຕັ້ງປະຕິບັດດໍາລັດວ່າດ້ວຍກົດໝາຍແມ່ນກໍາລັງດໍາເນີນການຢູ່. ດັ່ງນັ້ນ, ມັນຖືກຄາດຫວັງໄວ້ວ່າ ບັນດາຕົວຊີ້ວັດແມ່ນສາມາດບັນລຸໄດ້ໃນເວລາສິ້ນສຸດໂຄງການດັ່ງກ່າວ. |
| [ຜົນໄດ້ຮັບທີ 4]<br>ທັງສາມອົງປະກອບຍ່ອຍຂອງຜົນໄດ້ຮັບນີ້; ການຄຸ້ມຄອງທຶນສົມທົບ ODA, ການຄຸ້ມຄອງ PIP ຂັ້ນເມືອງ ແລະ ການຄຸ້ມຄອງແຜນງານຂະແໜງການ ແມ່ນໄດ້ຖືກພັດທະນາຂຶ້ນໂດຍປະສົບຜົນສໍາເລັດ, ແລະ ຂີດຄວາມສາມາດຂອງພະນັກງານແມ່ນໄດ້ຖືກພັດທະນາຂຶ້ນໂດຍຜ່ານການຈັດຝຶກອົບຮົມ. ພະນັກງານຈໍານວນນຶ່ງທີ່ສາມາດຄຸ້ມຄອງ PIP ໃນ ກຜລ ແມ່ນໄດ້ບັນລຸເປົ້າໝາຍ, ແຕ່ຍັງມີພະນັກງານຈໍານວນນຶ່ງທີ່ເຮັດວຽກໃນອົງການຈັດຕັ້ງຂອງລັດຂັ້ນສູນກາງຍັງມີຄວາມສາມາດທີ່ບໍ່ພຽງພໍ, ດັ່ງນັ້ນ ນຶ່ງໃນສາມຕົວຊີ້ວັດແມ່ນບໍ່ໄດ້ບັນລຸຜົນຢ່າງເຕັມສ່ວນ. ອີກສອງຕົວຊີ້ວັດແມ່ນໄດ້ບັນລຸຜົນຢ່າງເຕັມສ່ວນ. |

ໃນຫ້າຕົວຊີ້ວັດຂອງເປົ້າໝາຍໂຄງການ, ນຶ່ງຕົວຊີ້ວັດໄດ້ຊີ້ໃຫ້ເຫັນຜົນສໍາເລັດຢ່າງຈະແຈ້ງ ໃນຂະນະທີ່ອີກສີ່ຕົວຊີ້ວັດບັນລຸເປົ້າໝາຍໄດ້ບາງສ່ວນ. ເຖິງຢ່າງໃດກໍຕາມ, ເນື່ອງຈາກວ່າຜົນໄດ້ຮັບທັງສີ່ໄດ້ບັນລຸເປົ້າໝາຍຂອງພວກມັນເກືອບທັງໝົດ, PCAP2 ໄດ້ມີຄວາມຄືບໜ້າທີ່ຈະບັນລຸເປົ້າໝາຍໂຄງການໃນລະດັບທີ່ໜ້າພໍໃຈ, ເຖິງວ່າ ຈະບໍ່ບັນລຸທັງໝົດ.

ບົດປະເມີນຜົນຂັ້ນສຸດທ້າຍໄດ້ຖືກດໍາເນີນໃນເດືອນມິຖຸນາກໍລະກົດ 2011,

ຊ່ຽວຊານຍີ່ປຸ່ນໄດ້ໃຫ້ຄໍາແນະນໍາຕໍ່ໄປນີ້ ເພື່ອການພັດທະນາຢ່າງຕໍ່ເນື່ອງໃນຂົງເຂດຂອງການຄຸ້ມຄອງ PIP ໄປພ້ອມກັບ ການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານທີ່ມີສ່ວນຮ່ວມໃນວຽກງານນີ້;

- ✧ ການອະນຸມັດ ແລະ ການກະຈາຍຂອງດໍາລັດຈັດຕັ້ງປະຕິບັດກົດໝາຍລົງຂອງລັດ
- ✧ ສືບຕໍ່ແຈ້ງການແຈະນໍາກ່ຽວກັບການຄຸ້ມຄອງ PIP ຈາກກະຊວງຜທ ໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ
- ✧ ມີການປັບປຸງຫລາຍຂຶ້ນກ່ຽວກັບການປະກາດການຈັດສັນງົບປະມານ PIP
- ✧ ມີການປັບປຸງຫລາຍຂຶ້ນກ່ຽວກັບການຄຸ້ມຄອງການເງິນຂອງ PIP
- ✧ ມີການປັບປຸງຫລາຍຂຶ້ນໃນການຄຸ້ມຄອງ ໂຄງການ PIP ຂັ້ນເມືອງ
- ✧ ມີການປັບປຸງຫລາຍຂຶ້ນໃນໂຄງການທຶນສົມທົບ ODA
- ✧ ມີການປັບປຸງຫລາຍຂຶ້ນໃນແຜນວຽກການຄຸ້ມຄອງ

# 1. ຂໍ້ມູນພື້ນຖານຂອງໂຄງການ

## 1.1. ຂໍ້ມູນພື້ນຖານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ວາງຄາດໝາຍຫລຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ (LDC) ໃນປີ 2020. ລັດຖະບານລາວ (GoL) ພະຍາຍາມບັນລຸຄາດ ໝາຍນີ້ໂດຍຜ່ານແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ (NSEDP) ທີ່ໄດ້ຖືກປັບປຸງຄືນໃໝ່ໃນທຸກໆ 5 ປີ. ປະຈຸບັນ ທັງປະເທດກຳລັງຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ສັງຄົມຄັ້ງທີເຈັດ, ໃນໄລຍະເວລາແຕ່ປີ 2011 ຫາ 2015.

ແຜນວຽກການລົງທຶນຂອງລັດ (PIP) ແມ່ນລະບົບການລົງທຶນຂອງລັດທີ່ຄົບຖ້ວນ ຊຶ່ງຖືກຄຸ້ມຄອງໂດຍ GoL, ແລະ ຖືວ່າເປັນເຄື່ອງມືອັນສຳຄັນໃນການຈັດຕັ້ງ NSEDP. PIP ປະກອບດ້ວຍໂຄງການລົງທຶນຂອງລັດທີ່ໄດ້ຮັບທຶນສະໜັບສະໜູນພາຍໃນ, ເຊັ່ນດຽວກັບ ບັນດາໂຄງການ ແລະ ລະບົບ ພາຍໃຕ້ການຊ່ວຍເຫລືອຢ່າງເປັນທາງການເພື່ອການພັດທະນາ (ODA). ໃນປະຈຸບັນ, ຫລາຍກວ່າ 3,000 ໂຄງການລົງທຶນຂອງລັດພາຍໃຕ້ PIP ແມ່ນໄດ້ຖືກຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

ກະຊວງແຜນການ ແລະ ການລົງທຶນ (MPI) ມີຄວາມຮັບຜິດຊອບ ແລະ ສິດອຳນາດໂດຍລວມໃນການຄຸ້ມຄອງລະບົບ PIP. ພາຍໃຕ້ລະບົບນີ້, ໜ້າທີ່ຫລັກຂອງກະຊວງ ແລະ ອົງການຈັດຕັ້ງທີ່ຢູ່ພາຍໃຕ້ການຊີ້ນຳຢູ່ບັນດາແຂວງ ແລະ ເມືອງ ແມ່ນ ເພື່ອດຳເນີນການປະເມີນຜົນໂຄງການສຳລັບໂຄງການ PIP ແລະ ຢັ້ງຢືນຄວາມມີເຫດຜົນຂອງພວກມັນກ່ຽວກັບແຕ່ລະຂະແໜງການ. ພ້ອມກັນນັ້ນ ພວກເຂົາຍັງດຳເນີນການຄວບຄຸມ ແລະ ປະເມີນຜົນ ໃນແຕ່ລະໄລຍະ ເພື່ອໃຫ້ການຊີ້ທາງ ແລະ ໃຫ້ຄຳແນະນຳ ແກ່ຫ້ອງການຈັດຕັ້ງປະຕິບັດຂອງພວກເຂົາ ກ່ຽວກັບການຄຸ້ມຄອງໂຄງການ PIP.

ເຖິງຢ່າງໃດກໍຕາມ, ມີຫລາຍບັນຫາໄດ້ຖືກແນມເຫັນໃນການຄຸ້ມຄອງໂຄງການ PIP. ຫລາຍໂຄງການ PIP ທີ່ໄດ້ຮັບງົບປະມານພາຍໃນ ຍັງຂາດການວາງແຜນ ແລະ ຈັດຕັ້ງປະຕິບັດທີ່ເໝາະສົມ. ມັນຍັງບໍ່ຈະແຈ້ງວ່າ ໂຄງການ PIP ເຄີຍໄດ້ປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍຂອງ NSEDP ຫລືບໍ່. GoL ໄດ້ຄາດເດົາວ່ານຶ່ງໃນເຫດຜົນເຫລົ່ານັ້ນແມ່ນ ເນື່ອງມາຈາກ ການຂາດວິທີການຊີ້ແນະ ແລະ ຂາດຂີດຄວາມສາມາດຢູ່ໃນ MPI ແລະ ອົງການຈັດຕັ້ງຂັ້ນແຂວງທີ່ຢູ່ພາຍໃຕ້ການຊີ້ນຳຂອງ MPI, ກົມແຜນການ ແລະ ການລົງທຶນ (DPI).

ພາຍໃຕ້ເງື່ອນໄຂເຫລົ່ານັ້ນ, GoL ໄດ້ຂໍໃຫ້ລັດຖະບານຍີ່ປຸ່ນໃຫ້ການຮ່ວມມືດ້ານເຕັກນິກ. ອົງການຮ່ວມມືສາກົນຂອງຍີ່ປຸ່ນ (JICA) ແລະ MPI ໄດ້ຕົກລົງ ແລະ ເຊັ່ນຂໍ້ຕົກລົງ ເພື່ອດໍາເນີນໂຄງການສ້າງຂີດຄວາມສາມາດໃນການຄຸ້ມຄອງ PIP (PCAP1) ໃນເດືອນພະຈິກ 2004.

PCAP1 ໄດ້ຖືກຈັດຕັ້ງປະຕິບັດນັບແຕ່ເດືອນພະຈິກ 2004 ສໍາລັບສາມປີ, ໂດຍມີເປົ້າໝາຍເພື່ອປັບປຸງລະບົບຂອງການປະເມີນ, ການຄວບຄຸມ ແລະ ການປະເມີນຜົນສໍາລັບໂຄງການ PIP. PCAP1 ແລະ MPI ໄດ້ຮ່ວມກັນສ້າງຄູ່ມືນໍາໃຊ້ໂຄງການ ແລະ ປື້ມແນະນໍາຫລາຍຊຸດທີ່ໄດ້ຮວມເອົາເຄື່ອງມືການປະເມີນຜົນໂຄງການໃນຂົງເຂດຂອງການວິໄຈວຽກງານການເງິນ, ສະພາບແວດລ້ອມ ແລະ ສັງຄົມ. ພ້ອມກັນນັ້ນ PCAP1 ຍັງໄດ້ສ້າງຮູບແບບການສ້າງຂີດຄວາມສາມາດແບບຄົບຖ້ວນໃຫ້ແກ່ MPI ແລະ DPIs, ແລະ ໄດ້ດໍາເນີນການຖ່າຍທອດວິຊາການ ເພື່ອການເຜີຍແຜ່ຢູ່ໃນສາມແຂວງທີ່ມີການຕິດຕາມຄື: ອຸດົມໄຊ, ຄໍາມ່ວນ ແລະ ສາລະວັນ. ດັ່ງນັ້ນ, PCAP1 ໄດ້ປະສົບຜົນສໍາເລັດໃນການພັດທະນາຮູບແບບການສ້າງຂີດຄວາມສາມາດທີ່ແທດເໝາະທີ່ສຸດກັບ MPI ແລະ DPIs ໃນເວລາທີ່ໂຄງການດັ່ງກ່າວສິ້ນສຸດໃນເດືອນຕຸລາ 2007.

ໃນການປະເມີນຜົນ PCAP1 ຂັ້ນສຸດທ້າຍ, ໃນຂະນະທີ່ຢືນຢັນຜົນສໍາເລັດຂອງ PCAP1 ໃນລະດັບສູງ , ມັນໄດ້ຖືກແນະນໍາວ່າ ລະບົບການປະເມີນ, ການຄວບຄຸມ ແລະ ການປະເມີນຜົນ ຄວນຖືກປັບປຸງ, ຖືກເຜີຍແຜ່ ແລະ ຖືກສ້າງເປັນສະຖາບັນ ໃນຂັ້ນຕໍ່ໄປ ໃນທົ່ວປະເທດ ແລະ ທົ່ວອົງກອນລັດ. ພ້ອມກັນນັ້ນ, ຄວນມີການພັດທະນາຂອບວຽກດ້ານນິຕິກໍາ ແລະ ງົບປະມານ ເພື່ອໃຫ້ມີການຄຸ້ມຄອງ PIP ດີຂື້ນກວ່າເກົ່າ. ບົນພື້ນຖານຂອງຄໍາແນະນໍາເຫລົ່ານີ້, GoL ໄດ້ຂໍໃຫ້ລັດຖະບານຍີ່ປຸ່ນໃຫ້ການຊ່ວຍເຫລືອພ້ອມກັບໄລຍະຂອງການຮ່ວມມືດ້ານວິຊາການໃໝ່. ລັດຖະບານຍີ່ປຸ່ນ ໂດຍຮັບຮູ້ເຖິງຄວາມຈໍາເປັນຂອງການຮ່ວມມື ໄດ້ຕັດສິນໃຈສືບຕໍ່ໃຫ້ການຊ່ວຍເຫລືອແກ່ ສປປ ລາວ ໂດຍຜ່ານໄລຍະທີສອງ ພາຍຫລັງການສິ້ນສຸດຂອງໂຄງການ PCAP1.

### 1.2. ຂັ້ນຕອນການສ້າງໂຄງການ

ໃນມູມມອງຂອງໂຄງການໃໝ່ ຫລັງຈາກ PCAP1, ການປະເມີນຜົນທີ່ບໍ່ລວມເຫດການກ່ອນໜ້ານີ້ໄດ້ຖືກດໍາເນີນໃນເດືອນກັນຍາ 2007 ໂດຍມີວັດຖຸປະສົງກ່າວເຖິງລາຍລະອຽດຂອງການອອກແບບໂຄງການດັ່ງກ່າວ ກັບ MPI, DPIs ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ. ທີມງານເຮັດການສຶກສາໄດ້ສ້າງຮ່າງຕາຕະລາງອອກແບບໂຄງການ (PDM) ສໍາລັບ ໂຄງການໃໝ່ ຊຶ່ງປະກອບດ້ວຍ ຈຸດປະສົງຂອງໂຄງການ, ເປົ້າໝາຍລວມ, ສິ່ງຜົນໄດ້ຮັບ ແລະ ກິດຈະກໍາທີ່ກ່ຽວຂ້ອງຂອງພວກມັນ ແລະ ການສະໜັບສະໜູນທີ່ຈໍາເປັນເພື່ອການບັນລຸຜົນສໍາເລັດ. ບົດສຶກສາດັ່ງກ່າວໄດ້ສະຫລຸບວ່າ ເປົ້າໝາຍຂອງໂຄງການໃໝ່ນັ້ນແມ່ນເພື່ອ, ກ) ປັບປຸງ ແລະ ດັດແປງເພີ່ມຕື່ມ ວິທີການ ແລະ ເຄື່ອງມືຂອງການຄຸ້ມຄອງ PIP ໂດຍການແກ້ໄຂຄູ່ມືນໍາໃຊ້ ແລະ ປື້ມຄູ່ມື ທີ່ໄດ້ຖືກສ້າງຂຶ້ນໃນ PCAP1, ຂ) ເຜີຍແຜ່ຂັ້ນຕອນ, ວິທີການ ແລະ ເຄື່ອງມື ທີ່ໄດ້ມາດຖານສໍາລັບການບໍລິຫານຄຸ້ມຄອງ PIP ໃນທົ່ວປະເທດ, ແລະ ເພື່ອ ຄ) ສະໜັບສະໜູນຂອບວຽກນິຕິກໍາຂອງໂຄງການ ໂດຍລວມເອົາການຕີພິມກົດໝາຍການລົງທຶນຂອງລັດອອກມາ. ໂຄງການໃໝ່ມີຊື່ເອີ້ນ

ວ່າ ໂຄງການເສີມສ້າງຂີດຄວາມສາມາດຂອງການຄຸ້ມຄອງ PIP (PCAP2). ຮ່າງ PDM ໄດ້ຄັດຕິດໃນບົດບັນທຶກກອງປະຊຸມທີ່ໄດ້ເຊັນໃນ (ວັນທີ) ຊຶ່ງປຽບເໝືອບົດສະຫລຸບຂອງການປະເມີນຜົນ.

ການຈັດຕັ້ງປະຕິບັດ PCAP2 ແມ່ນໄດ້ຕົກລົງເຫັນດີຢ່າງເປັນທາງການລະຫວ່າງຫ້ອງການ JICA ຢູ່ ສປປ ລາວ ແລະ MPI ໂດຍມີຕົວແທນຂອງທັງສອງຝ່າຍເຊັນລົງນາມ ໃນບົດບັນທຶກການປຶກສາຫາລືກ່ຽວກັບໂຄງການດັ່ງກ່າວໃນ (ວັນທີ) ເດືອນກຸມພາ, 2008. PDM ໄດ້ຖືກຄັດຕິດເປັນການອອກແບບໂຄງການທີ່ໄດ້ຮັບການເຫັນດີເປັນເອກະພາບ ຊຶ່ງຄາດວ່າຈະບັນລຸຜົນສຳເລັດໃນເວລາສິ້ນສຸດໂຄງການ.

## 2. ການອອກແບບໂຄງການ

ພາຍຫຼັງທີ່ ອົງການ JICA ໄດ້ຍື່ນປະມູນຕາມຂັ້ນຕອນເປັນທາງການແລ້ວ, ICNet Limited ໄດ້ຮັບການມອບໝາຍໃຫ້ດຳເນີນການທາງດ້ານເຕັກນິກຊ່ຽວຊານ ແລະ ການຄຸ້ມຄອງຈັດການຂອງໂຄງການ PCAP2 ໃນນາມເປັນທີມງານຊ່ຽວຊານຂອງ JICA. ICNet ສະເໜີຮ່າງແຜນການດຳເນີນງານໃນເວລາເລີ່ມຕົ້ນ, ຊຶ່ງໄດ້ສ້າງຂຶ້ນເພື່ອໃຫ້ບັນລຸຈຸດປະສົງ ແລະ ຜົນທີ່ໄດ້ຮັບຂອງໂຄງການຕາມທີ່ລະບຸໄວ້ໃນ PDM.

PDM ໄດ້ຮັບການປັບປຸງຄັ້ງໜຶ່ງໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ, ພາຍຫຼັງທີ່ໄດ້ຮັບການອະນຸມັດ ຈາກຄະນະກຳມະການປະສານງານຮ່ວມມື (JCC) ໃນກອງປະຊຸມ JCC ຄັ້ງທີສອງ ຊຶ່ງຈັດຂຶ້ນໃນວັນທີ 10 ມີນາ, 2009. ແຜນການດຳເນີນງານ ໄດ້ມີການປັບປຸງເລັກໜ້ອຍເລື້ອຍມາໃນລະຫວ່າງ ການຈັດຕັ້ງປະຕິບັດໂຄງການ, ແລະ ກໍໄດ້ລາຍງານທີ່ກອງປະຊຸມຕ່າງໆຂອງ JCC ແລະ ກໍໄດ້ລາຍງານທຸກຄັ້ງທີ່ມີການປັບປຸງປ່ຽນແປງ. PDM ສະບັບຫຼ້າສຸດ (ເອກະສານຊ້ອນທ້າຍ 1) ແລະ ແຜນການດຳເນີນງານ (ເອກະສານຊ້ອນທ້າຍ 2) ແມ່ນໄດ້ຄັດຕິດມາພ້ອມນີ້.

ພາກຍ່ອຍຕ່າງໆຕໍ່ໄປນີ້ແມ່ນ ອະທິບາຍ ໂຄງສ້າງເນື້ອໃນຂອງ PCAP2 ໂດຍອີງໃສ່ PDM ແລະ ເນື້ອໃນຂອງແຜນການດຳເນີນງານ.

### 2.1. ຂໍ້ມູນພື້ນຖານຂອງໂຄງການ

ຕໍ່ໄປນີ້ ແມ່ນ ການອະທິບາຍ ກຸ່ມເປົ້າໝາຍທີ່ຕົກລົງກັນ, ເຂດເປົ້າໝາຍ ແລະ ໄລຍະເວລາຂອງການຮ່ວມມືສຳລັບ PCAP2;

| | |
|---|---|
| ກຸ່ມເປົ້າໝາຍ: | MPI-DOE, MPI-DOP, MPI-DIC, DPIs |
| ເຂດເປົ້າໝາຍ: | 16 ແຂວງ ແລະ ນະຄອນຫຼວງວຽງຈັນ (ທົ່ວປະເທດ), ລວມທັງ ອົງການຈັດຕັ້ງຂອງລັດຖະບານ |
| ໄລຍະເວລາຂອງໂຄງການ: | ມີນາ 2008 ເຖິງ ສິງຫາ 2011 (3 ປີ ແລະ 5 ເດືອນ) |

ສຳລັບກຸ່ມເປົ້າໝາຍທີ່ກ່າວມາຂ້າງເທິງ, ສາມາດແຍກອອກເປັນສ່ວນທີ່ເປັນກຸ່ມເປົ້າໝາຍທາງກົງ ແລະ ກຸ່ມເປົ້າໝາຍທາງອ້ອມ (ຫຼື ຜູ້ໄດ້ຮັບຜົນປະໂຫຍດ) ດັ່ງຕໍ່ໄປນີ້;

| | |
|---|---|
| ກຸ່ມເປົ້າໝາຍທາງກົງ (ອົງການຈັດຕັ້ງທີ່ເປັນຄູ່ຮ່ວມມື) | ພະນັກງານໃນ MPI-DOE, MPI-DOP, MPI-DIC |
| ກຸ່ມເປົ້າໝາຍທາງກົງ (ບັນດາກຸ່ມຄູເຝິກ) | DPIs, ພະນັກງານຂອງກົມແຜນການໃນອົງການຂອງລັດຖະບານ |
| ກຸ່ມເປົ້າໝາຍທາງອ້ອມ (ບັນດາກຸ່ມຜູ້ຖືກເຝິກ) | ພະນັກງານຂັ້ນແຂວງຂອງຂະແໜງການ ແລະ ບັນດາພະນັກງານໃນອົງການຈັດຕັ້ງຂອງລັດ ຊຶ່ງຖືກມອບໝາຍໃຫ້ເປັນເຈົ້າຂອງໂຄງ ການ (POs). |
| ກຸ່ມເປົ້າໝາຍທາງອ້ອມ | ພະນັກງານແຜນການຂັ້ນເມືອງ ຊຶ່ງໄດ້ຮັບຄຳແນະນຳຈາກ DPIs, ພະນັກງານຂັ້ນແຂວງຂອງຂະແໜງການ ແລະ ບັນດາພະນັກງານໃນອົງການຈັດຕັ້ງຂອງລັດ ຊຶ່ງບໍ່ໄດ້ຮັບການເຝິກອົບຮົມ. |
| ຜູ້ໄດ້ຮັບຜົນປະໂຫຍດ ສຸດທ້າຍ | ປະຊາຊົນທີ່ໄດ້ຮັບຜົນປະໂຫຍດຜ່ານບັນດາໂຄງການຂອງ PIP. |

## 2.2. ຈຸດປະສົງ ແລະ ເປົ້າໝາຍໂດຍລວມຂອງໂຄງການ

ຈຸດປະສົງ ແລະ ເປົ້າໝາຍໂດຍລວມຂອງ PCAP2 ແມ່ນດັ່ງຕໍ່ໄປນີ້:

### (1) ຈຸດປະສົງໂຄງການ

| |
|---|
| [ສະຫຼຸບຫຍໍ້]<br>MPI ແລະ DPIs ດຳເນີນຂັ້ນຕອນໂຄງການ PIP ຜ່ານການປະເມີນຄັ້ງໃໝ່, ການຕິດຕາມ ແລະ ຂັ້ນຕອນການປະເມີນຜົນພາຍໃຕ້ງົບປະມານຈຳກັດສູງສຸດ ແລະ ຍື່ນໄປຍັງສະພາແຫ່ງຊາດເພື່ອອະນຸມັດ. |
| [ຕົວຊີ້ວັດທີ່ຮັບຮອງແລ້ວຕາມວັດຖຸປະສົງ]<br>1. ຈຳນວນຕົວເລກຂອງໂຄງການ PIP ທີ່ໄດ້ຮັບເງິນຊ່ວຍເຫຼືອພາຍໃນ ແລະ ເງິນສົມທົບໂຄງການຊ່ວຍເຫຼືອລ້າ (ODA), ຊຶ່ງໄດ້ມີການຕີລາຄາ, ການຕິດຕາມກວດກາ ແລະ ການປະເມີນຜົນພາຍໃຕ້ງົບປະມານປະຈຳປີສູງສຸດ ພ້ອມກັບຕາຕະລາງການຈັດການງົບປະມານສະເພາະ, ເພີ່ມຂຶ້ນເປັນ 100% ພາຍຫຼັງສິ້ນສຸດໂຄງການ.<br>2. ລາຍງານທຸກໂຄງການ PIP ທີ່ໄດ້ຮັບເງິນຊ່ວຍເຫຼືອພາຍໃນສຳລັບແຕ່ລະໄລຍະ (ການວາງແຜນ / ການອະນຸມັດ, ການຕິດຕາມກວດກາ, ການປະເມີນຜົນ) ແມ່ນໄດ້ຮັບການປັບປຸງໃຫ້ດີຂຶ້ນ.<br>3. MPI ແລະ DPIs ສ້າງ ແລະ ນຳໃຊ້ງົບປະມານສູງສຸດ ທັງໃນຂັ້ນສູນກາງ ແລະ ຂັ້ນແຂວງພ້ອມກັນ ກັບກະຊວງການເງິນ ແລະ ພະແນກການເງິນແຂວງ.<br>4. ຈຳນວນ ແລະ ອັດຕາສ່ວນຂອງໜີ້ສິນໃນງົບປະມານ PIP ປະຈຳປີ ຫຼຸດລົງ.<br>5. MPI ພ້ອມກັບບັນດາກະຊວງການທີ່ກ່ຽວຂ້ອງພັດທະນາແຜນງານຂອງຂະແໜງຕົນ ພ້ອມທັງ ມີເປົ້າໝາຍທົ່ວພາກ, ເປົ້າໝາຍປະຈຳປີ ແລະ ການແຈກຢາຍບັນດາໂຄງການ PIP ທີ່ໄດ້ຮັບເງິນຊ່ວຍເຫຼືອພາຍໃນ ແລະ ໂຄງການຊ່ວຍເຫຼືອລ້າ (ODA) |

### (2) ເປົ້າໝາຍໂດຍລວມ

ຕໍ່ໄປນີ້ ຊີ້ໃຫ້ເຫັນບັນດາເປົ້າໝາຍໂດຍລວມ ແລະ ວັດຖຸປະສົງທີ່ໄດ້ຮັບຮອງເອົາຕົວຊີ້ວັດ ຊຶ່ງກຳນົດໄວ້ໃນເວລາເລີ່ມຕົ້ນໂຄງການ.

| |
|---|
| [ສະຫຼຸບຫຍໍ້]<br>ບັນດາຂະແໜງການຂັ້ນກະຊວງ ແລະ ຂັ້ນແຂວງ ຈັດຕັ້ງປະຕິບັດບັນດາໂຄງການ PIP ຢ່າງມີປະສິດທິຜົນ ແລະ ປະສິດທິພາບ ຕາມກຳນົດເວລາ ແລະ ອີງຕາມແຜນງົບປະມານພາຍໃຕ້ແຜນງານຍົກລະດັບຂອງຂະແໜງການ. |
| [ຕົວຊີ້ວັດທີ່ຮັບຮອງຕາມວັດຖຸປະສົງ]<br>1. ຫຼຸດຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIPທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການຊ່ວຍເຫຼືອລ້າ (ODA) ຊຶ່ງໄດ້ມີການຢຸດຊະງັກ ຫຼື ຄາດວ່າຈະຢຸດ ເນື່ອງຈາກເຫດຜົນທາງດ້ານງົບປະມານ.<br>2. ຫຼຸດຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIP ທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງບໍ່ໄດ້ຮັບການຈັດຕັ້ງປະຕິບັດສືບຕໍ່ທີ່ດີ, ຫຼື ບໍ່ມີການດຳເນີນການ ພາຍຫຼັງທີ່ໂຄງການສຳເລັດ.<br>3. ຫຼຸດຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIPທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ໂຄງການຊ່ວຍເຫຼືອລ້າ (ODA) ຊຶ່ງປະຕິບັດບໍ່ໄດ້ເຕັມທີ່.<br>4. ຫຼຸດຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIPທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ໂຄງການຊ່ວຍເຫຼືອລ້າ (ODA) ຊຶ່ງມີປະສົບການທີ່ມີການປ່ຽນແປງທີ່ບໍ່ຄາດຄິດກັບບັນດາບໍລິສັດທີ່ເຊັນສັນຍາກັນ.<br>5. ບັນດາຕົວຊີ້ວັດທີ່ເປັນເປົ້າໝາຍຂອງແຕ່ລະແຜນງານຂອງຂະແໜງການ ຈະໄດ້ຮັບການປັບປຸງໃຫ້ດີຂຶ້ນ. |

ຜ່ານບົດສຶກສາພື້ນຖານໃນຂັ້ນທຳອິດຂອງໂຄງການ, ໄດ້ພົບວ່າ ມີຄວາມຫຍຸ້ງຍາກຫຼາຍໃນການບັນລຸບັນດາຕົວຊີ້ວັດພື້ນຖານຂອງເປົ້າໝາຍ ໂດຍລວມຂອງໂຄງການທີ່ຍົກຂຶ້ນໃນກອງປະຊຸມ ຄັ້ງທຳອິດຂອງ PDM. ບາງຕົວຊີ້ວັດຍັງເຫັນວ່າ ບໍ່ເໝາະສົມສຳລັບການປະມານຜົນກະທົບທາງບວກຂອງໂຄງການພາຍຫຼັງສິ້ນສຸດໂຄງການແລ້ວ.

ສະນັ້ນ, ພາກສ່ວນໜຶ່ງຂອງໂຄງການ ແມ່ນສະເໜີ ບັນດາຕົວຊີ້ວັດທີ່ເປັນທາງເລືອກໃນກອງປະຊຸມ JCC ຄັ້ງທີສອງ ໃນວັນທີ 10 ມີນາ 2009. ຕໍ່ໄປນີ້ ຊີ້ໃຫ້ເຫັນເຖິງການປ່ຽນແປງ ທີ່ໄດ້ກຳນົດບັນດາຕົວຊີ້ວັດທີ່ໄດ້ຮັບຮອງຕາມວັດຖຸປະສົງສຳລັບເປົ້າໝາຍທົ່ວໄປ, ລວມທັງບັນດາເຫດຜົນ.

| | |
|---|---|
| ຕົວຊີ້ວັດເບື້ອງຕົ້ນ | 1 ຫຼຸດ ຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIP ທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງໄດ້ມີການຢຸດຊະງັກ ຫຼື ຄາດວ່າຈະຢຸດ ເນື່ອງຈາກເຫດຜົນທາງດ້ານງົບປະມານ. |
| ເຫດຜົນໃນການປ່ຽນແປງ | ອີງໃສ່ບົດສຶກສາພື້ນຖານສະແດງໃຫ້ເຫັນວ່າ ບໍ່ມີໂຄງການ PIP ທີ່ບໍ່ໄດ້ຢຸດຊະງັກ ຫຼື ຄາດວ່າຈະຢຸດເປັນທາງການ. ເນື່ອງຈາກວິທີການ ແລະ ຂັ້ນຕອນການຄຸ້ມຄອງຈັດການຂອງໂຄງການ ແມ່ນຍັງບໍ່ຈະແຈ້ງສຳລັບທຸກໂຄງການ, ສະຖານະພາບຂອງບາງໂຄງ ການຍັງບໍ່ຈະແຈ້ງ. ສະນັ້ນ, ເປັນການຍາກທີ່ຈະຕັດສິນວ່າ ໂຄງການເຫຼົ່ານີ້ ຖືວ່າ ພວມດຳເນີນການ, ຄາດວ່າຈະຢຸດ, ຫຼື ຢຸດຊະງັກ. ຜ່ານການບັນລຸຜົນສຳເລັດຕາມຈຸດປະສົງຂອງໂຄງການ, ສະຖານະພາບຂອງໂຄງການ PIP ເຫຼົ່ານີ້ ຈະມີຄວາມຈະແຈ້ງຂຶ້ນ. ບາງໂຄງການ ອາດສາມາດຈັດໝວດເປັນຢຸດຊະງັກ ຫຼື ຄາດວ່າຈະຢຸດ. ສະນັ້ນ, ຜົນກະທົບທາງບວກຂອງ PCAP2 ອາດຈະບໍ່ຈຳເປັນຕ້ອງໄດ້ຫຼຸດຈຳນວນ ຂອງບັນດາໂຄງການ PIP ທີ່ຢຸດຊະງັກ ຫຼື ຄາດວ່າຈະຢຸດ; ອາດຈະມີການເພີ່ມຂຶ້ນອີກ. ສະນັ້ນ, ຕົວຊີ້ວັດນີ້ ແມ່ນບໍ່ເໝາະສົມສຳລັບການວັດຜົນກະທົບທາງບວກຂອງ PCAP2. |

| | |
|---|---|
| ຕົວຊີ້ວັດປ່ຽນແປງໃໝ່ | 1. <u>ເພີ່ມ</u> ຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIP ທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງ<u>ສຳເລັດຜົນຕາມກຳນົດເວລາ.</u> |

| | |
|---|---|
| ຕົວຊີ້ວັດເບື້ອງຕົ້ນ | 2. ຫຼຸດຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIPທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງບໍ່ໄດ້ຮັບການຈັດຕັ້ງປະຕິບັດສືບຕໍ່ທີ່ດີ, ຫຼື ບໍ່ມີການດຳເນີນການ ພາຍຫຼັງທີ່ໂຄງການສຳເລັດ |
| ເຫດຜົນໃນການປ່ຽນແປງ | PCAP2 ໄດ້ແນະນຳຢ່າງໜັກແໜ້ນວ່າ POs ຄວນຍື່ນແຜນການບຳລຸງຮັກສາ ແລະ ແຜນດຳເນີນງານ ຂອງຜົນໄດ້ຮັບຈາກໂຄງການ PIP ທີ່ສຳເລັດຜົນ ໃນລະຫວ່າງໄລຍະຂອງການ ວາງແຜນ, ເພື່ອຮັບປະກັນນຳໃຊ້ທີ່ມີປະສິດທິຜົນພາຍຫຼັງສຳເລັດຜົນແລ້ວ. ຍັງໄດ້ມີການຮຽກຮ້ອງ ໃຫ້ປັບປຸງແຜນການບຳລຸງຮັກສາ ແລະ ແຜນດຳເນີນງານໃຫ້ທັນກັບສະພາບການໃນເວລາຂອງ ການປະເມີນຜົນການສິ້ນສຸດໂຄງການ. ຜ່ານການສ້າງຕັ້ງບັນດາຂັ້ນຕອນເຫຼົ່ານີ້, ຕົວຊີ້ວັດ ສາມາດຖືໄດ້ວ່າກ່ຽວຂ້ອງກັບການວັດຜົນກະທົບຂອງ PCAP2. ເຖິງຢ່າງໃດກໍຕາມ, ເນື່ອງຈາກຈຳນວນຂອງບັນດາໂຄງການ PIP ມີຫຼາຍຊຶ່ງຕ້ອງໄດ້ປະຕິບັດຕາມຂັ້ນຕອນເຫຼົ່ານີ້ ນອກຈາກບາງໂຄງການທີ່ບໍ່ປະຕິບັດຕາມ, ໄດ້ມີການຕັດສິນໃນການວັດແທກ ຈຳນວນຂອງໂຄງການທີ່ໄດ້ນຳໃຊ້ຂັ້ນຕອນເຫຼົ່ານີ້. |
| ຕົວຊີ້ວັດທີ່ປ່ຽນແປງໃໝ່ | 2.<u>ເພີ່ມ</u> ຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIP ທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງ<u>ສຳເລັດຜົນຕາມກຳນົດເວລາ.</u> |

| | |
|---|---|
| ຕົວຊີ້ວັດເບື້ອງຕົ້ນ | 3. ຫຼຸດຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIPທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງປະຕິບັດບໍ່ໄດ້ເຕັມທີ່. |
| ເຫດຜົນໃນການປ່ຽນແປງ | PCAP2 ໃຫ້ຄຳເຫັນຢ່າງໜັກແໜ້ນວ່າ Pos ຄວນລະບຸຜູ້ໄດ້ຮັບຜົນປະໂຫຍດໃນຂັ້ນຕອນການວາງແຜນໂຄງການ; ສະນັ້ນ, ຜົນກະທົບທີ່ເໝາະສົມສາມາດຄາດການໄດ້ຜ່ານຜົນທີ່ເກີດຂຶ້ນໃນເວລາໂຄງການສຳເລັດ. ເຖິງຢ່າງໃດກໍຕາມ, ເນື່ອງຈາກວ່າ ບັນດາໂຄງການ PIP ໃນປະຈຸບັນ ບໍ່ໄດ້ລະບຸລາຍລະອຽດຂອງຜູ້ໄດ້ຮັບຜົນປະໂຫຍດ ແລະ ລະດັບຂອງຜົນປະໂຫຍດທີ່ໄດ້ຮັບ, ມັນເປັນການຍາກໃນການລະບຸ ມາດຕະຖານພື້ນຖານຂອງໂຄງການ ທີ່ຖືວ່າ ເປັນ "ການປະຕິບັດບໍ່ເຕັມທີ່". ສະນັ້ນ, ບັນດາຕົວຊີ້ວັດ ຕ້ອງວັດແທກເປັນໃນທາງບວກ. |
| ຕົວຊີ້ວັດທີ່ປ່ຽນແປງໃໝ່ | 3. <u>ເພີ່ມ</u> ຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIPທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງ <u>ຖືກນຳໃຊ້ ຫຼື ດຳເນີນການຕາມແຜນທີ່ວາງໄວ້ໃນເບື້ອງຕົ້ນ.</u> |

| | |
|---|---|
| ຕົວຊີ້ວັດເບື້ອງຕົ້ນ | 4. ຫຼຸດຈຳນວນ ແລະ ອັດຕາສ່ວນຂອງບັນດາໂຄງການ PIPທີ່ໄດ້ຮັບເງິນຊ່ວຍເຫຼືອຈາກພາຍໃນ ແລະ ບັນດາໂຄງການທີ່ໄດ້ຮັບເງິນຊ່ວຍເຫຼືອລ້າ (ODA) ຊຶ່ງມີປະສົບການທີ່ມີການປ່ຽນແປງທີ່ບໍ່ຄາດຄິດ ກັບບັນດາບໍລິສັດທີ່ເຊັນສັນຍາກັນ. |
| ເຫດຜົນໃນການປ່ຽນແປງ | ເນື່ອງຈາກເປັນບັນດາປັດໄຈພາຍນອກເຊັ່ນ ການຄຸ້ມຄອງຈັດການສະຖານະການຂອງ ບັນດາບໍລິສັດທີ່ເຊັນສັນຍາ ແລະ ການຈັດສັນງົບປະມານທີ່ຈຳກັດຂອງງົບປະມານໂຄງການ PIP ຊຶ່ງມີຜົນຢ່າງໃຫຍ່ຫຼວງຕໍ່ກັບຕົວຊີ້ວັດນີ້, PCAP2 ພິຈາລະນາວ່າ ຕົວຊີ້ວັດນີ້ ບໍ່ເໝາະສົມ ໃນການກຳນົດຜົນກະທົບຂອງໂຄງການ. |
| ຕົວຊີ້ວັດທີ່ປ່ຽນແປງໃໝ່ | ລົບລ້າງ |

| | |
|---|---|
| ຕົວຊີ້ວັດເບື້ອງຕົ້ນ | 5. ຕົວຊີ້ວັດເປົ້າໝາຍໃນແຕ່ລະແຜນງານຂອງຂະແໜງການຈະໄດ້ຮັບການປັບປຸງໃຫ້ດີຂຶ້ນ. |
| ເຫດຜົນໃນການປ່ຽນແປງ | ແຜນງານຂອງຂະແໜງການ ແລະ ຕົວຊີ້ວັດເປົ້າໝາຍຂອງພວກເຂົາ ແມ່ນກຳນົດໄວ້ ຜ່ານວິທີການ ແລະ ເຄື່ອງມືທີ່ PCAP2 ພັດທະນາຂຶ້ນ. ສະນັ້ນ, ບໍ່ມີການກຳນົດ ເປັນມາດຕະຖານພື້ນຖານ. PCAP2 ຍັງພິຈາລະນາວ່າ ຕົວຊີ້ວັດ SEDP ຈະສາມາດນຳໃຊ້ ເປັນຕົວຊີ້ວັດທີ່ເປັນທາງເລືອກຫຼື ບໍ່? |
| ຕົວຊີ້ວັດທີ່ປ່ຽນແປງໃໝ່ | 5.ໃນບັນດາຂະແໜງການ ແລະ ແຂວງ, ຕົວຊີ້ວັດເປົ້າໝາຍແມ່ນຖືກນຳໃຊ້ ເປັນ ຂໍ້ເງື່ອນໄຂການຄັດເລືອກໂຄງການ PIP. |

1. ຜົນໄດ້ຮັບ

ຕໍ່ໄປນີ້ ແມ່ນ ສີ່ ຜົນໄດ້ຮັບທີ່ຕັ້ງໄວ້ເປັນເຄື່ອງມືວັດແທກ ເພື່ອບັນລຸຕາມຈຸດປະສົງຂອງໂຄງການ.

(1) ຜົນໄດ້ຮັບ 1

| |
|---|
| [ຜົນໄດ້ຮັບ 1 ສະຫຼຸບຫຍໍ້]<br>ພະນັກງານ ຂອງ DPI ຂອງທຸກແຂວງ ແລະ ພະນັກງານຂອງກົມແຜນການຂອງທຸກກະຊວງ ແລະ ອົງການອື່ນໆທີ່ກ່ຽວຂ້ອງ ໄດ້ຮັບຄວາມຮູ້ ແລະ ທັກສະກ່ຽວກັບການຄຸ້ມຄອງຈັດການໂຄງການ PIP ທີ່ເປັນພື້ນຖານ ແລະ ເນື້ອໃນໂດຍລວມ. |
| [ບັນດາຕົວຊີ້ວັດທີ່ຮັບຮອງຕາມຈຸດປະສົງ]<br>1. ພະນັກງານ DPI ຫຼາຍກວ່າ 5 ທ່ານ ໃນແຕ່ລະແຂວງ ມີຄວາມສາມາດໃນການຄຸ້ມຄອງຈັດການ ໂຄງການ PIP ໂດຍອີງຕາມເອກະສານອະທິບາຍ ແລະ ປຶ້ມຄູ່ມືທີ່ມີໃນປະຈຸບັນ.<br>2. ພະນັກງານຂອງກົມແຜນການ ຫຼາຍກວ່າ 5 ທ່ານໃນແຕ່ລະກະຊວງ ຫຼື ອົງການລັດຖະບານທີ່ກ່ຽວຂ້ອງ ແມ່ນສາມາດໃນການຄຸ້ມຄອງຈັດການ ໂຄງການ PIP ໂດຍອີງຕາມຄູ່ມືແນະນຳ ແລະ ປຶ້ມຄູ່ມືທີ່ມີໃນປະຈຸບັນ. |

PCAP1 ສຸມໃສ່ການພັດທະນາສ້າງມາດຕະຖານພື້ນຖານ ສຳລັບການຄຸ້ມຄອງຈັດການໂຄງການ PIP, ແລະ ດຳເນີນການເຝິກອົບຮົມສຳລັບສາມແຂວງຈຸດສຸມໃນການຕິດຕາມກວດກາ. ສິ່ງນີ້ໝາຍຄວາມວ່າ 14 ແຂວງ ແລະ ບັນດາອົງການຂອງລັດຂັ້ນສູນກາງ ຍັງຈຳເປັນຕ້ອງໄດ້ລວມເອົາເຂົ້າດ້ວຍ. ໃນຂະນະທີ່ PCAP1 ແມ່ນປະສົບຜົນສຳເລັດໃນການຍົກລະດັບຄວາມຮູ້ ແລະ ທັກສະຂອງບຸກຄະລາກອນທີ່ຄຸ້ມຄອງຈັດການ PIP ຜ່ານການເຝິກອົບຮົມ, PCAP2 ສຸມໃສ່ເຮັດໃຫ້ຜູ້ທີ່ໄດ້ຮັບເຝິກອົບຮົມໄດ້ນຳໃຊ້ ຄວາມຮູ້ ແລະ ທັກສະທີ່ໄດ້ຮັບ ເຂົ້າໃນການປະຕິບັດວຽກງານປະຈຳຂອງຕົນ. MPI ມີພາລະບົດບາດຕົ້ນຕໍໃນການສະໜອງການເຝິກອົບຮົມທົ່ວປະເທດ, ແຕ່ຍັງຕ້ອງການການສະໜັບສະໜູນເພື່ອພັດທະນາລະບົບ ການເຝິກອົບຮົມທີ່ສາມາດເຮັດໃຫ້ເກີດການເຝິກອົບຮົມທີ່ຕໍ່ເນື່ອງພາຍໃຕ້ຊັບພະຍາກອນທີ່ຈຳກັດໄດ້. ຜົນໄດ້ຮັບ 1 ມີຈຸດມຸ່ງໝາຍ ເພື່ອສ້າງຕັ້ງລະບົບການຄຸ້ມຄອງຈັດການ PIP ທົ່ວປະເທດ ຜ່ານ ການເຝິກອົບຮົມເປັນລະບົບ ແລະ ການເຝິກອົບຮົມແບບເຮັດວຽກໄປພ້ອມ (OJT).

(2) ຜົນໄດ້ຮັບ 2

| |
|---|
| [ຜົນໄດ້ຮັບ 2 ສະຫຼຸບຫຍໍ້]<br>ວິໄນທາງການເງິນ ແມ່ນໄດ້ນຳສະເໜີ ແລະ ນຳໃຊ້ເຂົ້າໃນອົງການ ກ່ຽວກັບການຄຸ້ມຄອງຈັດການໂຄງການ PIP. |
| [ຕົວຊີ້ວັດທີ່ໄດ້ຮັບຮອງຕາມວັດຖຸປະສົງ] |

| |
|---|
| 1. "ຄູ່ມືສຳລັບການຄຸ້ມຄອງຈັດການໂຄງການ PIP" ແລະ ປື້ມຄູ່ມື ແມ່ນໄດ້ຮັບການຍົກລະດັບ ແລະ ພັດທະນາ ເພື່ອກວມເອົາການຄຸ້ມຄອງບໍລິຫານ ແລະ ການວາງແຜນງົບປະມານໂຄງການ PIP. ເອກະສານຄູ່ມືແນະນຳ ແລະ ປື້ມຄູ່ມື ໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ແຈກຢາຍໃຫ້ກັບບຸກຄະລາກອນຂອງພາກລັດທີ່ກ່ຽວຂ້ອງທັງໝົດ.<br>2. ພະນັກງານ MPI ຫຼາຍກວ່າ 2 ທ່ານ ແລະ ພະນັກງານຂອງກົມແຜນການ ຫຼາຍກວ່າ 5 ທ່ານໃນແຕ່ລະແຂວງ, ກະຊວງ ແລະ ອົງການຂອງລັດທີ່ກ່ຽວຂ້ອງອື່ນໆ ສາມາດຄຸ້ມຄອງຈັດການໂຄງການ PIP ໂດຍອີງຕາມເອກະສານຄູ່ມືແນະນຳ ແລະ ປື້ມຄູ່ມືທີ່ພັດທະນາ ແລະ ຍົກລະດັບ ແລະ ການເຝິກອົບຮົມບັນດາພະນັກງານຂັ້ນເມືອງ ແລະ ຂັ້ນແຂວງທີ່ກ່ຽວຂ້ອງ.<br>3. MPI ແລະ DPI ພັດທະນາ ແລະ ສ້າງຕັ້ງຂັ້ນຕອນຂອງການຄາດຄະເນ ງົບປະມານ, ການຈຳກັດ ຈຳນວນເງິນສະໜັບໜູນໂຄງການ PIP ທີ່ໄດ້ຮັບເງິນຈາກພາຍໃນ ແລະ ໂຄງການຊ່ວຍເຫຼືອລ້າ (ODA) ພາຍໃຕ້ເພດານສູງສຸດຂອງງົບປະມານປະຈຳປີ, ແລະ ການວາງແຜນການບໍລິຫານງົບປະມານຕາມກຳນົດເວລາ ເພື່ອຄາດຄະເນ ແລະ ກຳນົດເພດານງົບປະມານ. |

ມາດຕະຖານພື້ນຖານ ແລະ ວິທີການຂອງການຄຸ້ມຄອງຈັດການ PIP ໄດ້ມີການພັດທະນາເປັນກ້າວໆມາ, ແຕ່ ວິທີການຂອງການຈັດສັນງົບປະມານປະຈຳປີຂອງ PIP ຍັງບໍ່ທັນໄດ້ມີການຄອບຄຸມເທື່ອ. MPI ມີໜ້າທີ່ຮັບຜິດຊອບໃນການຈັດສັນງົບປະມານຈາກພາຍໃນຂອງ PIP ໃຫ້ກັບທຸກແຂວງ ແລະ ອົງການລັດຖະບານຂັ້ນສູນກາງ. ແຕ່ ເນື່ອງຈາກວ່າ ວິທີການຂອງການຈັດສັນງົບປະມານບໍ່ຈະແຈ້ງ, ການລ່າຊ້າໃນການປະກາດແຈ້ງການ ເປັນເລື່ອງປົກກະຕິ. ພ້ອມນັ້ນ, MPI ມີຄວາມຫຍຸ້ງຍາກໃນການໃຫ້ຄຳອະທິບາຍທີ່ພຽງພໍເໝາະສົມ ໃຫ້ກັບທຸກແຂວງ ແລະ ບັນດາອົງການລັດຖະບານທີ່ກ່ຽວຂ້ອງໃນລະຫວ່າງການເຈລະຈາກ່ຽວກັບງົບປະມານ.ສະນັ້ນ, ວິທີການ ແລະ ຂັ້ນຕອນທີ່ເປັນມາດຕະຖານຕໍ່ກັບການຈັດສັນງົບປະມານປະຈຳປີຂອງ PIP ໄປຍັງເຂດຕ່າງໆ ແມ່ນຈະໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ທຸກປີ, ປະມານ 10-15% ຂອງງົບປະມານພາຍໃນທີ່ຈັດສັນໃຫ້ກັບ PIP ແມ່ນສຳລັບການຈ່າຍຄືນໜີ້ສິນ. ໃນຫຼາຍກໍລະນີສ່ວນໃຫຍ່, ໜີ້ສິນເກີດຈາກ ຂາດການຄຸ້ມຄອງຈັດການດ້ານການເງິນຂອງໂຄງການ, ການຈ່າຍເງິນໂຄງການເກີນງົບປະມານ, ຊ່ອງວ່າງລະຫວ່າງງົບປະມານ ກັບ ການໃຊ້ຈ່າຍ, ແລະ ການໃຊ້ຈ່າຍໂດຍບໍ່ໄດ້ຮັບອະນຸມັດ. ສະນັ້ນ, ການຈ່າຍງົບປະມານ ແລະ ລະບົບການຄຸ້ມຄອງຈັດການດ້ານການເງິນຂອງ PIP ທີ່ຕ້ອງໃນນຳໃຊ້ກັບແຕ່ລະໂຄງການ PIP ຕ້ອງໄດ້ພັດທະນາສ້າງຂຶ້ນ. PCAP2 ຈະພັດທະນາສ້າງຂັ້ນຕອນ ແລະ ວິທີການທີເປັນມາດຕະຖານຂອງການຈ່າຍເງິນງົບປະມານທີ່ດີ ແລະ ການຄຸ້ມຄອງຈັດການທາງດ້ານການເງິນສຳລັບແຕ່ລະ ໂຄງການ PIP.

(3) ຜົນໄດ້ຮັບ 3

| |
|---|
| [ຜົນໄດ້ຮັບ 3 ສະຫຼຸບຫຍໍ້]<br>ຂອບວຽກດ້ານນິຕິກຳຂອງການຄຸ້ມຄອງຈັດການ ໂຄງການ PIP ທີ່ມີປະສິດທິພາບ ແລະ ປະສິດທິຜົນ ໄດ້ຮັບການພັດທະນາສ້າງຂຶ້ນ ແລະ ປັບປຸງໃຫ້ເຂັ້ມແຂງ. |
| [ຕົວຊີ້ວັດທີ່ໄດ້ຮັບຮອງຕາມວັດຖຸປະສົງ]<br>1. ກົດໝາຍການຄຸ້ມຄອງໂຄງການ PIP ແລະ ບັນດາດຳລັດອື່ນໆທີ່ກ່ຽວຂ້ອງສະເພາະ ໄດ້ມີການຮ່າງ, ຍື່ນ ແລະ ໄດ້ຮັບຮອງອະນຸມັດຈາກສະພາແຫ່ງຊາດ.<br>2. ກົດໝາຍການຄຸ້ມຄອງ ໂຄງການ PIP ແລະ ບັນດາດຳລັດທີ່ກ່ຽວຂ້ອງ ລະບຸບັນດາອົງການທີ່ຮັບຜິດຊອບ ແລະ ຂັ້ນຕອນ |

| |
|---|
| ທາງດ້ານນິຕິກຳ ໃນການທົບທວນ, ປ່ຽນແປງ, ໂຈະໄວ້ ຫຼື ຢຸດຕິ ບັນດາໂຄງການ PIP ລວມທັງໂຄງການຊ່ວຍເຫຼືອລ້າ (ODA) ແລະ ການປັບໃໝໃສ່ໂທດບັນດາອົງການທີ່ກ່ຽວຂ້ອງ ແລະ ຄູ່ສັນຍາ.<br>3. ກົດໝາຍການຄຸ້ມຄອງໂຄງການ PIP ແລະ ບັນດາດຳລັດທີ່ກ່ຽວຂ້ອງ ລວມທັງ ເອກະສານແນະນຳ ແລະ ປື້ມຄູ່ມືທີ່ອະນຸມັດແລ້ວ ຊຶ່ງໄດ້ຮັບການພັດທະນາ ແລະ ປັບປຸງໃນໂຄງການ, ແມ່ນຖືກນຳໃຊ້ ເປັນເຄື່ອງມືການຄຸ້ມຄອງໂຄງການ PIP ທີ່ເປັນມາດຕະຖານ ແລະ ແຈກຢາຍໄປທົ່ວປະເທດ. |

ດຳລັດນາຍົກລັດຖະມົນຕີເລກທີ 58 ອອກໃນເດືອນ ມິຖຸນາ 2002, ເປັນຂອບວຽກທາງດ້ານນິຕິກຳທີ່ມີປະສິດທິຜົນສຳລັບການຄຸ້ມຄອງໂຄງການ PIP ໃນເວລາທີ່ PCAP2 ເລີ່ມຕົ້ນ. ສະພາແຫ່ງຊາດ ໄດ້ແນະນຳກະຊວງ ຜລ ເພື່ອປັບປຸງ ແລະ ຍົກລະດັບດຳລັດສະບັບນີ້ໃຫ້ເປັນກົດໝາຍການລົງທຶນຂອງລັດ. PCAP2 ແມ່ນໃຫ້ຄຳແນະນຳດ້ານເຕັກນິກວິຊາການ ເພື່ອຮັບປະກັນວ່າ ເນື້ອໃນຂອງກົດໝາຍ ແມ່ນສອດຄ່ອງກັບຂັ້ນຕອນ ແລະ ວິທີການ ທີ່ PCAP2 ພັດທະນາສ້າງຂຶ້ນ.

(4) ຜົນໄດ້ຮັບ 4

| [ຜົນໄດ້ຮັບ 4 ສະຫຼຸບຫຍໍ້] |
|---|
| ບັນດາພະນັກງານ MPI, ພະນັກງານຂອງ DPI ຂອງທຸກແຂວງ ແລະ ພະນັກງານຂອງກົມແຜນການຂອງທຸກກະຊວງ ໄດ້ຍົກລະດັບຄວາມຮູ້ ແລະ ທັກດ້ານການຄຸ້ມຄອງຈັດການ ໂຄງການ PIP ສຳລັບການຄຸ້ມຄອງຈັດການເງິນທຶນສົມທົບເງິນຊ່ວຍເຫຼືອລ້າຂອງຜູ້ໃຫ້ທຶນ, ການຄຸ້ມຄອງຈັດການໂຄງການ PIP ຂັ້ນເມືອງ ແລະ ແຜນງານຂອງຂະແໜງການຕ່າງໆ. |
| [ຕົວຊີ້ວັດທີ່ໄດ້ຮັບຮອງຕາມວັດຖຸປະສົງ]<br>1. "ຄູ່ມືແນະນຳສຳລັບການຄຸ້ມຄອງຈັດການໂຄງການ PIP" ແລະ ປື້ມຄູ່ມື ແມ່ນໄດ້ຮັບການຍົກລະດັບ ແລະ ພັດທະນາສ້າງຂຶ້ນ ເພື່ອກວມເອົາບັນຫາ ການຄຸ້ມຄອງທຶນສົມທົບ (ODA) ແລະ ການຄຸ້ມຄອງໂຄງການ PIP ຂັ້ນເມືອງ. ຄູ່ມື ແລະ ປື້ມແນະນຳໄດ້ຮັບການຮັບຮອງອະນຸມັດ ແລະ ແຈກຢາຍໃຫ້ກັບບຸກຄະລາກອນລັດທີ່ກ່ຽວຂ້ອງທຸກພາກສ່ວນ.<br>2. ""ຄູ່ມືແນະນຳສຳລັບການຄຸ້ມຄອງຈັດການແຜນງານຂອງ PIP" ໄດ້ຮັບການຍົກລະດັບ, ອະນຸມັດຮັບຮອງ ແລະ ແຈກຢາຍໃຫ້ກັບບຸກຄະລາກອນລັດທີ່ກ່ຽວຂ້ອງກັບການຄຸ້ມຄອງໂຄງການ PIP.<br>3. ພະນັກງານຂອງ MPI ເກີນກວ່າ 20 ຄົນ ແລະ ພະນັກງານຂອງກົມແຜນການ 5 ທ່ານໃນແຕ່ລະແຂວງ, ກະຊວງ ແລະ ອົງການຂອງລັດທີ່ກ່ຽວຂ້ອງ ມີຄວາມສາມາດໃນການຄຸ້ມຄອງໂຄງການ PIP ອີງຕາມຄູ່ມືແນະນຳ ແລະ ຄູ່ມື ທີ່ພັດທະນາ ແລະ ຍົກລະດັບໃໝ່, ແລະ ການເຝິກອົບຮົມໃຫ້ກັບພະນັກງານລັດຂັ້ນເມືອງ ແລະ ຂັ້ນແຂວງ. |

ຜົນໄດ້ຮັບ 4 ມີສີ່ສ່ວນປະກອບຍ່ອຍ: 1) ເພື່ອພັດທະນາວິທີການ, ເຄື່ອງມື ແລະ ການເຝິກອົບຮົມສຳລັບ *ການຄຸ້ມຄອງທຶນສົມທົບເຂົ້າໃນໂຄງການຊ່ວຍເຫຼືອລ້າ (ODA)* ; 2) ເພື່ອພັດທະນາວິທີການ, ເຄື່ອງມື ແລະ ການເຝິກອົບຮົມສຳລັບ *ການຄຸ້ມຄອງໂຄງການ PIP ຂັ້ນເມືອງ*; ແລະ 3) ເພື່ອພັດທະນາວິທີການ, ເຄື່ອງມື ແລະ ການເຝິກອົບຮົມສຳລັບ*ການຄຸ້ມຄອງແຜນງານ*.

ວິທີການ ແລະ ເຄື່ອງມືສຳລັບ ແຕ່ລະອົງປະກອບຈະສຳເລັດ ແລະ ລະບຸໄວ້ໃນພາກທີ່ເໝາະສົມໃນບົດຄູ່ມືແນະນຳ ແລະ ປື້ມຄູ່ມືຂອງ PCAP2. ບົດຄູ່ມືແນະນຳສອງຫົວ ແລະ ປື້ມແນະນຳ ຫ້າຫົວ ແມ່ນຈາກ PCAP2. ບົດແນະນຳສອງສະບັບ ແລະ ປື້ມຄູ່ມືສອງສະບັບ ໄດ້ຮັບການທົບທວນຄືນຈາກຜົນໄດ້ຮັບຂອງ PCAP1.

| ຊື່ | ລາຍລະອຽດລາຍການ |
|---|---|
| ປື້ມຄູ່ມືການຄຸ້ມຄອງໂຄງການ PIP (ຄູ່ມືໂຄງການ) | ຄູ່ມືແນະນຳວິທີການຄຸ້ມຄອງສຳລັບແຕ່ລະໂຄງການ PIP. ເນື້ອໃນລວມມີການດຳເນີນງານກ່ຽວກັບການຄຸ້ມຄອງໂຄງການ, ວິທີການ ແລະ ເຄື່ອງມືສຳລັບການປະເມີນໂຄງການ, ການຕິດຕາກວດກາ ແລະ ການປະເມີນຜົນ, ການວິເຄາະດ້ານສິ່ງແວດ ລ້ອມ / ສັງຄົມ, ການວິເຄາະດ້ານເສດຖະກິດ / ການເງິນ. DVD ທີ່ອະທິບາຍກ່ຽວກັບເນື້ອໃນຂອງຄູ່ມືແນະນຳ ແລະ ເຄື່ອງມືໃນຮູບແບບຮ່າງເປົ່າໃນຄັດຕິດມາພ້ອມນີ້.<br>< ເນື້ອໃນປັບປຸງໃໝ່ ><br>ຄຽງຄູ່ກັບການດັດສົມເນື້ອໃນທີ່ມີຢູ່ໃນປະຈຸບັນ, ສະບັບປັບປຸງໃໝ່ຈະລວມເອົາບັນດາເນື້ອໃນຕໍ່ໄປນີ້ເຂົ້ານຳ:<br>➢ ການຄຸ້ມຄອງທາງດ້ານການເງິນ ແລະ ການຈ່າຍເງິນງົບປະມານຂອງໂຄງການ PIP<br>➢ ການຄຸ້ມຄອງເງິນສົມທົບເຂົ້າໃນໂຄງການຊ່ວຍເຫຼືອລ້າ (ODA)<br>➢ ການຄຸ້ມຄອງໂຄງການ PIP ຂັ້ນເມືອງ |
| ຄູ່ມືສຳລັບການຄຸ້ມຄອງແຜນງານ PIP (ຄູ່ມືແຜນງານ) | ຄູ່ມືລວມເອົາວິທີການສຳລັບການຄຸ້ມຄອງໂຄງການ PIP ຈາກມຸມມອງຂອງແຜນງານຂອງຂະແໜງການ. ເນື້ອໃນລວມມີ ວິທີການຂອງການພັດທາແຜນງານຂອງຂະແໜງການຜ່ານ ແນວທາງທີ່ເປັນຕັກກະ, ຕາມລຳດັບວັນເດືອນປີ ແລະ ຕາມສະພາບພູມີສາດ. ຈຸດມຸ່ງໝາຍ ເພື່ອ MPIDoP, DPI ແລະ ກົມແຜນການຂອງກະຊວງ.<br>< ເນື້ອໃນປັບປຸງໃໝ່ ><br>➢ ການພັດທະນາແຜນງານຂອງຂະແໜງການຜ່ານ ແຜນປະຕິບັດງານ.<br>➢ ການຈັດສັນງົບປະມານຂອງໂຄງການ PIP. |
| ປື້ມແນະນຳສຳລັບ DPI | ປື້ມຄູ່ມືອອກແບບເພື່ອພະນັກງານ DPI ຕາມໜ້າທີ່ວຽກສະເພາະຂອງພວກເຂົາສຳລັບການຄຸ້ມຄອງ ໂຄງການ PIP ອີງຕາມຂັ້ນຕອນງົບປະມານປະຈຳປີຂອງ PIP. ເນື້ອໃນລວມມີ ການຂີດແບ່ງວຽກໃນ MPI, DPI ແລະ ເຈົ້າຂອງໂຄງການ (PO), ແລະ ບັນດາວິທີການ ແລະ ເຄື່ອງມືສຳລັບການປະເມີນ ແລະ ການຕິດຕາມແບບລາຍໄຕມາດ.<br>< ເນື້ອໃນປັບປຸງໃໝ່ ><br>➢ ການຄຸ້ມຄອງແຜນງານຂອງຂະແໜງການ ຂັ້ນແຂວງ.<br>➢ ການຄຸ້ມຄອງທາງດ້ານການເງິນ ແລະ ການໃຊ້ຈ່າຍງົບປະມານໂຄງການ PIP<br>➢ ການຄຸ້ມຄອງທຶນສົມທົບເຂົ້າໃນໂຄງການຊ່ວຍເຫຼືອລ້າ (ODA)<br>➢ ການຄຸ້ມຄອງໂຄງການ PIP ຂັ້ນເມືອງ |
| ປື້ມແນະນຳສຳລັບເຈົ້າຂອງໂຄງການ[1] | ປື້ມຄູ່ມືອອກແບບສຳລັບເຈົ້າຂອງໂຄງການຊຶ່ງກ່ຽວຂ້ອງກັບໜ້າທີ່ວຽກສະເພາະຂອງພວກເຂົາໃນການຄຸ້ມຄອງໂຄງການ PIP ອີງຕາມຂັ້ນຕອນງົບປະມານ |

[1] ເຈົ້າຂອງໂຄງການ (PO): ພະນັກງານລັດທີ່ຮັບຜິດຊອບໃນການຊີ້ນຳບາງໂຄງການ PIP ສະເພາະໃດໜຶ່ງ. ໂດຍປົກກະຕິແລ້ວ, ພະນັກງານວິຊາການຂອງກົມໃນແຕ່ລະກະຊວງ ແລະ ແຂວງ ທີ່ຮັບຜິດຊອບໂຄງການ PIP ທີ່ຖືກແຕ່ງຕັ້ງ. PO ແມ່ນຮັບຜິດຊອບ ສຳລັບການຂໍງົບປະມານຂອງ ໂຄງການ PIP, ຕິດຕາມກວດກາ ເພື່ອຮັບປະກັນຜົນສຳເລັດຂອງໂຄງການ, ແລະ ການມອບຄວາມຮັບຜິດຊອບໃຫ້ກັບບຸກຄົນທີ່ຮັບຜິດຊອບໃນການດຳເນີນງານພາຍຫຼັງທີ່ໂຄງການສຳເລັດ.

| | |
|---|---|
| | ປະຈຳປີຂອງໂຄງການ PIP, ແລະ ຕາມທັດສະນະກ່ຽວກັບວັດຖະຈັກໂຄງການ. ເນື້ອໃນລວມມີ ການສ້າງບົດສະເໜີກ່ຽວກັບໂຄງການ ແລະ ການລາຍງານຄວາມຄືບໜ້າຂອງໂຄງການ, ການຕິດຕາມກວດກາ, ແລະ ການມອບຮັບໂຄງການໃຫ້ກັບອີງການດຳເນີນງານພາຍຫຼັງສຳເລັດ.<br>< ເນື້ອໃນປັບປຸງໃໝ່ ><br>➢ ການຄຸ້ມຄອງທາງດ້ານການເງິນ ແລະ ການໃຊ້ຈ່າຍງົບປະມານໂຄງການ PIP<br>➢ ການຄຸ້ມຄອງເງິນທຶນຊ່ວຍເຫຼືອລ້າ (ODA) ຂອງຜູ້ໃຫ້ທຶນ<br>➢ ການຄຸ້ມຄອງໂຄງການ PIP ຂັ້ນເມືອງ |

ປື້ມແນະນຳສາມສະບັບ ໄດ້ຮັບການພັດທະນາປັບປຸງໃໝ່ໃນລະຫວ່າງ PCAP2.

| ຊື່ | ລາຍການ |
|---|---|
| ປື້ມແນະນຳສຳລັບ MPI | ປື້ມຄູ່ມືອອກແບບເພື່ອພະນັກງານ MPI ອີງຕາມໜ້າທີ່ວຽກຮັບຜິດຊອບສະເພາະຂອງພວກເຂົາສຳລັບໂຄງການ ແລະ ການຄຸ້ມຄອງແຜນງານຂອງ PIP ສຳລັບສາມກົມ; MPI-DOE, MPI-DOP ແລະ MPI-DIC; ຊຶ່ງກ່ຽວຂ້ອງກັບການຄຸ້ມຄອງໂຄງການ PIP.<br>ພາກສຳລັບ MPI-DOP, ເນັ້ນໜັກບັນຫາຈາກມຸມມອງກ່ຽວກັບຂັ້ນຕອນຂອງແຜນຫ້າປີ ແລະ ບົນພື້ນຖານແຜນປະຈຳປີ. ເນື້ອໃນລວມມີ ການຄຸ້ມຄອງແຜນງານ, ການຈັດສັນງົບປະມານ PIP ແລະ ການຄຸ້ມຄອງໂຄງການ PIP ໂດຍລວມ.<br><br>ພາກສຳລັບ MPI-DOE ລວມມີ ບັນຫາຈາກມຸມມອງກ່ຽວກັບຂັ້ນຕອນຂອງງົບປະມານປະຈຳປີຂອງໂຄງການ PIP ແລະ ວັດຖະຈັກຂອງໂຄງການ ລວມທັງວິທີການກ່ຽວກັບຂໍ້ແນະນຳການຄຸ້ມຄອງໂຄງການ PIP, ການວິເຄາະລາຍການງົບປະມານຂອງ PIP, ການປະເມີນສຳລັບໂຄງການ PIP ຂະໜາດໃຫຍ່ ແລະ ຂະໜາດກາງ, ການຄຸ້ມຄອງລາຍຈ່າຍຂອງໂຄງການ.<br><br>ພາກສຳລັບໜ້າທີ່ສະເພາະຂອງ MPI-DIC ສຳລັບໂຄງການເງິນຊ່ວຍເຫຼືອລ້າ (ODA) ຂອງຜູ້ໃຫ້ທຶນ ໂດຍອີງຕາມຂັ້ນຕອນງົບປະມານປະຈຳປີຂອງ PIP ແລະ ຈຸດມຸມມອງກ່ຽວກັບວັດຖະຈັກຂອງໂຄງການ. ເນື້ອໃນລວມມີ ການຕິດຕາມກວດກາ ແລະ ການແບ່ງປັນຂໍ້ມູນຂອງບັນດາໂຄງການຊ່ວຍເຫຼືອລ້າ (ODA), ວິທີການຈັດສັນງົບປະມານເງິນທຶນຂອງຜູ້ໃຫ້ທຶນ. |
| ປື້ມແນະນຳສຳລັບກົມແຜນການຂອງກະຊວງຕ່າງໆ | ປື້ມແນະນຳອອກແບບສຳລັບພະນັກງານຂອງກົມແຜນການຂອງກະຊວງຕ່າງໆຂັ້ນສູນກາງ ອີງຕາມໜ້າທີ່ວຽກສະເພາະຂອງພວກເຂົາສຳລັບການຄຸ້ມຄອງແຜນງານ ແລະ ໂຄງການ PIP ຕາມທັດສະນະກ່ຽວຂ້ອງກັບຂັ້ນຕອນຂອງແຜນຫ້າປີ, ບົນພື້ນຖານແຜນປະຈຳປີ ແລະ ວັດຖະຈັກຂອງໂຄງການ. ເນື້ອໃນລວມມີ ການປະເມີນໂຄງການPIP, ການຄຸ້ມຄອງເງິນທຶນສົມທົບເຂົ້າໃນໂຄງການຊ່ວຍເຫຼືອລ້າ (ODA), ການຄຸ້ມຄອງລາຍຈ່າຍງົບປະມານຂອງໂຄງການ PIP, ການຄຸ້ມຄອງແຜນງານ, ແລະ ການຈັດສັນງົບປະມານຂອງໂຄງການ PIP. |

| | |
|---|---|
| ປື້ມແນະນຳສຳລັບການຄຸ້ມຄອງ ໂຄງການ PIP ຂັ້ນເມືອງ | ປື້ມແນະນຳອອກແບບເພື່ອພະນັກງານແຜນການຂັ້ນເມືອງ ອີງຕາມໜ້າທີ່ວຽກສະເພາະຂອງພວກເຂົາສຳລັບການຄຸ້ມຄອງໂຄງການ PIP ຈາກບັນດາມຸມມອງທີ່ກ່ຽວຂ້ອງກັບຂັ້ນຕອນຂອງພື້ນຖານການວາງແຜນປະຈຳປີ ແລະ ວັດຖະຈັກຂອງໂຄງການ. ເນື້ອໃນ ລວມມີ ການວາງແຜນ ແລະ ການຮ່າງບົດສະເໜີຂອງໂຄງການ PIP, ແລະ ການຮ່າງບົດລາຍງານຄວາມຄືບໜ້າຂອງໂຄງການ ຜ່ານການກວດກາຕິດຕາມໂຄງການ. |

ການເຝິກອົບຮົມແຕ່ລະອົງປະກອບ ແມ່ນລວມເຂົ້າໄວ້ໃນແຜນງານການເຝິກອົບຮົມຂອງ PCAP2. ບົດສຶກສາທີ່ຮັບຮອງແລ້ວ ແລະ ການສຳມະນາວິຊາການ ແມ່ນໄດ້ດຳເນີນການຄຽງຄູ່ກັບການເຝິກອົບຮົມ. ວິທີການ, ເຄື່ອງມື ແລະ ການເຝິກອົບຮົມ ແມ່ນໄດ້ທົບທວນອີງຕາມຄວາມຈຳເປັນຕົວຈິງ, ໂດຍອີງໃສ່ຄຳຄິດເຫັນທີ່ໄດ້ຮັບຈາກບົດສຶກສາ ແລະ ການສຳມະນາວິຊາການ.

ຕໍ່ໄປນີ້ແມ່ນສະແດງໃຫ້ເຫັນສາມອົງປະກອບຍ່ອຍຂອງຜົນໄດ້ຮັບນີ້

1) ການຄຸ້ມຄອງເງິນທຶນສົມທົບເຂົ້າໃນໂຄງການຊ່ວຍເຫຼືອລ້າ (ODA)

PCAP2 ຈະພັດທະນາຂັ້ນຕອນທີ່ເປັນມາດຕະຖານຂອງການເລືອກ ແລະ ການຈັດສັນງົບປະມານຂອງໂຄງການ PIP ທີ່ໄດ້ຮັບເງິນຈາກພາຍໃນທີ່ເປັນເງິນທຶນສົມທົບ (ຫຼື ເງິນງົບປະມານແຫ່ງຊາດທີ່ປະກອບສ່ວນ) ເຂົ້າໃນໂຄງການຊ່ວຍເຫຼືອລ້າ (ODA). ທຳອິດ, ຂັ້ນຕອນທີ່ເປັນມາດຕະຖານໃນປະຈຸບັນຂອງການຄຸ້ມຄອງໂຄງການ ODA ແມ່ນ ໄດ້ສຶກສາ, ພ້ອມກັບວິທີການ ກ່ຽວກັບການຈັດສັນເງິນທຶນສົມທົບຈາກງົບປະມານແຫ່ງຊາດສຳລັບໂຄງການ PIP ທີ່ໄດ້ຮັບເງິນຈາກພາຍໃນ. PCAP2 ຈະສຶກສາລະບົບການຄຸ້ມຄອງໂຄງການ ODA ໃນປະຈຸບັນທີ່ໄດ້ນຳໃຊ້ໂດຍ MPI-DIC. ນີ້ກໍ່ເພື່ອຫຼີກລ່ຽງຄວາມຊ້ຳຊ້ອນທີ່ບໍ່ຈຳເປັນຂອງລະບົບ ແລະ ວິທີການຕ່າງໆທີ່ໄດ້ນຳໃຊ້ໂດຍ MPI-DOP ແລະ MPI-DOE ໃນປະຈຸບັນ, ຕໍ່ກັບພາກສ່ວນທີ່ນຳໃຊ້ໂດຍ MPI-DIC.

ວິທີການຕ່າງໆຂອງການຄຸ້ມຄອງເງິນທຶນຊ່ວຍເຫຼືອລ້າ ODA ທີ່ເປັນເງິນສົມທົບ ແລະ ການຈັດສັນງົບປະມານຂອງເງິນດັ່ງກ່າວ ຕ້ອງເປັນອິດສະຫຼະຈາກການຄຸ້ມຄອງໂຄງການ PIP ທີ່ໄດ້ຮັບເງິນຈາກພາຍໃນ ແລະ ການຈັດສັນງົບປະມານສຳລັບເຫດຜົນຕໍ່ໄປນີ້. ການສະເໜີນະໂຍບາຍຂອງລັດຖະບານສະແດງໃຫ້ເຫັນວ່າເງິນສົມທົບ ໂຄງການ ODA ນັ້ນ ຕ້ອງມີບຸລິມະສິດສູງກວ່າ ເມື່ອທຽບກັບການຮ້ອງຂໍງົບປະມານ ສຳລັບໂຄງການ PIP ທີ່ໄດ້ຮັບເງິນຈາກພາຍໃນ. ເຖິງຢ່າງໃດກໍຕາມ, ເນື່ອງຈາກວ່າ ເງິນທຶນແມ່ນມາຈາກແຫຼ່ງທຶນດຽວກັນ, ມັນເປັນສິ່ງຫຍຸ້ງຍາກ ໃນກຳນົດຄວາມສົມດຸນຂອງບຸລິມະສິດທີ່ເໝາະສົມລະຫວ່າງໂຄງການ PIP ທີ່ຮັບເງິນຈາກພາຍໃນ ແລະ ເງິນທຶນສົມທົບໂຄງການຊ່ວຍເຫຼືອລ້າ (ODA). ພ້ອມນັ້ນ, ໂຄງການ ODA ສ່ວນໃຫຍ່ ມີການຈັດຕັ້ງລະບົບການຕິດຕາມກວດກາ ແລະ ການປະເມີນຜົນທີ່ສາມາດຮັບຮອງຄວາມມີປະສິດທິພາບ. ດັ່ງນັ້ນຈະເປັນການຍາກທີ່ຈະປຽບທຽບໂຄງການ ODA ກັບໂຄງການ PIP ທີ່ໄດ້ຮັບເງິນຈາກພາຍໃນໂດຍກົງ. ສະນັ້ນ, ຈຶ່ງມີຄວາມຈຳເປັນໃນການແຍກເງື່ອນໄຂໃນການຈັດສັນ ສຳລັບເງິນສົມທົບໂຄງການຊ່ວຍເຫຼືອລ້າ ແລະ ໂຄງການ PIP ທີ່ຮັບເງິນພາຍໃນ. ເພາະວ່າ

MPI-DIC ແມ່ນມີໜ້າທີ່ສໍາລັບການຄຸ້ມຄອງໂຄງການ ODA, ການຝຶກອົບຮົມຂອງຜູ້ຝຶກອົບຮົບທີ່ ມີສັກກະຍະພາບຈະຕ້ອງດໍາເນີນໂດຍກົງຕໍ່ພະນັກງານຂອງ MPI-DIC. ໄລຍະການຝຶກອົບຮົມຂອງແຕ່ລະສ່ວນປະກອບແມ່ນປະກອບໃນໂຄງການຂອງການຝຶກອົບຮົມ. ການສຶກສາ ແລະ ການສໍາມະນາໃນພາກປະຕິບັດທີ່ຖືກຕ້ອງແມ່ນໄດ້ດໍາເນີນຕາມການຝຶກອົບຮົມ. ວິທີການ, ເຄື່ອງມື ແລະ ໄລຍະການຝຶກອົບຮົມແມ່ນຈະ ປ່ຽນແປງຂຶ້ນກັບຄວາມຈໍາເປັນ, ອີງໃສ່ຄໍາຄິດເຫັນທີ່ໄດ້ຮັບຜ່ານການສຶກສາ ແລະ ການສໍາມະນາໃນພາກປະຕິບັດ.

2) ການຄຸ້ມຄອງໂຄງການ PIP ຂັ້ນເມືອງ

PCAP2 ຈະພັດທະນາຂັ້ນຕອນທີ່ເປັນມາດຕະຖານລວມມີວິທີການ ແລະ ເຄື່ອງມືຕ່າງໆເພື່ອການຄຸ້ມຄອງໂຄງການ PIP ຂັ້ນເມືອງ. ສ່ວນໃຫຍ່ຂອງໂຄງການ PIP ເຫຼົ່ານີ້ແມ່ນໄດ້ຈັດຕັ້ງປະຕິບັດໃນເມືອງທີ່ຂາດຂໍ້ມູນສະເພາະອັນຈໍາເປັນເພື່ອຮັບປະກັນຄວາມມີປະສິດທິພາບ ແລະ ປະສິດທິຜົນ. PCAP2 ຈະພັດທະນາຮູບແບບການລາຍງານ, ຈາກນັ້ນ, ພະນັກງານໃນລະດັບເມືອງແມ່ນສາມາດປະກອບເອກະສານໃຫ້ສໍາເລັດແລະ ຂໍງົບປະມານຂອງໂຄງການ PIP. ສໍາລັບ DPIs, PCAP2 ຈະພັດທະນາຮ່າງເອກະສານການປະເມີນທີ່ເໝາະສົມ ກັບຂັ້ນເມືອງ ແລະ ຕາມສະພາບເງື່ອນໄຂຂອງພວກເຂົາ.

PCAP2 ຈະພັດທະນາໂຄງການຝຶກອົບຮົມສໍາລັບການຄວບຄຸມ PIP ໃນຂັ້ນເມືອງເຊັ່ນກັນ. ລາຍການນີ້ແມ່ນໄດ້ແນໃສ່ສໍາລັບ DPIs ເພື່ອສະໜອງການຝຶກອົບຮົມໃນລະດັບເມືອງ. PCAP2 ຈະບໍ່ໄດ້ດໍາເນີນການຝຶກອົບຮົມໂດຍກົງໃນລະດັບເມືອງ ແຕ່ຈະດໍາເນີນການຝຶກອົບຮົມໃຫ້ຄູຝຶກອົບຮົມທີ່ເປັນ ພະນັກງານຂອງ DPI, ໃນການສອນພວກເຂົາໃຫ້ຮູ້ເຖິງຈະນໍາໃຊ້ຫຼັກສູດການຝຶກອົບຮົມແນວໃດ.

3) ການຄຸ້ມຄອງແຜນງານ

ວຽກງານຫຼັກຂອງການຄຸ້ມຄອງແຜນງານ ຫຼື ການພັດທະນາແຜນງານຂອງຂະແໜງການ, ແມ່ນເພື່ອສຶກສາຄວາມເປັນໄປໄດ້ໃນການດັດສົມຂອງການຄຸ້ມຄອງແຜນງານທີ່ໄດ້ສ້າງຂຶ້ນຂອງ PCAP1 ຕາມແຜນການປະຕິບັດງານຂອງໂຄງການ PIP ທີ່ໄດ້ປະກາດໂດຍ GoL. ຫຼັງຈາກການສຶກສາເນື້ອໃນຂອງແຜນປະຕິບັດງານ, ແຜນງານທົດລອງ /ແຜນງານຍ່ອຍ ຈະໄດ້ຖືກເລືອກ, ແລະ ວິທີການ ແລະ ເຄື່ອງມືໃນການຄຸ້ມຄອງແຜນງານ PCAP1 ແມ່ນໄດ້ຖືກ ນໍາໃຊ້ໃນແຜນງານທົດລອງນັ້ນ ເພື່ອສ້າງຕັ້ງແບບຈໍາລອງແຜນງານຂອງຂະແໜງການ. ເຄື່ອງມືຕ່າງໆເຊັ່ນ: ໂຄງສ້າງແບບຫງ່າໄມ້ທີ່ເປັນວັດຖຸປະສົງຂອງແຜນງານ (POT), ແຜນວາດລໍາດັບໄລຍະເວລາ ແລະ ການສ້າງແຜນທີ່ແມ່ນໄດ້ຮັບການທົດສອບເພື່ອເບິ່ງວ່າຖ້າວ່າພວກມັນເໝາະສົມກັບແຜນງານ/ແຜນງານຍ່ອຍ ຫຼື ບໍ່. ການປັບປຸງ ຫຼື ການປ່ຽນແປງແມ່ນຈະໄດ້ຮັບການພິຈາລະນາເມື່ອ ມີຄວາມຈໍາເປັນ.

2. ວຽກງານຕ່າງໆ

ເນື່ອງຈາກວ່າ PCAP2 ມີຜົນໄດ້ຮັບສີ່ຢ່າງ, ຫຼາຍກິດຈະກໍາແມ່ນໄດ້ດໍາເນີນໃນເວລາດຽວກັນ. ດັ່ງນັ້ນ, ໂຄງການແມ່ນໄດ້ລະມັດລະວັງ ໃນການຈັດລຽງໃຫ້ສອດຄ່ອງກັບກິດຈະກໍາຕ່າງໆ ໃນທາງທາງທີ່ມີ

ປະສິດທິພາບ ແລະ ປະສິດທິຜົນທີ່ສຸດ. ເຊັ່ນດຽວກັນ, ໂຄງການແມ່ນໄດ້ລະມັດລະວັງເພື່ອໃຫ້ສອດຄ່ອງກັບກຳນົດເວລາງົບປະມານປະຈຳປີຂອງໂຄງການ PIP ຂອງລັດຖະບານ, ເພາະວ່າ ກຳນົດເວລາ ແລະ ການຜົນການດຳເນີນງານ ແມ່ນກ່ຽວຂ້ອງກັບບັນດາກິດຈະກຳຂອງໂຄງການຢ່າງຫຼວງຫຼາຍ. ໂຄງການຍັງໄດ້ຜະສົມຜະສານມາດຕະການທີ່ຍືນຍົງຕ່າງໆ ເພື່ອວ່າ MPI ແລະ DPIs ຈະຍັງຄົງປະຕິບັດຕາມ ເມື່ອໂຄງການສິ້ນສຸດລົງ. ຕໍ່ໄປນີ້ແມ່ນສະແດງໃຫ້ເຫັນຮູບພາບອະທິບາຍແຜນກິດຈະກຳລວມຂອງ PCAP2

ຕາຕະລາງ 1 ແຜນກິດຈະກຳລວມຂອງ PCAP2



ກິດຈະກຳສະເພາະຕໍ່ໄປນີ້ ໂດຍຜົນໄດ້ຮັບທີ່ວາງແຜນໄວ້;

[ກິດຈະກຳສຳລັບຜົນໄດ້ຮັບ 1]
1) ການຝຶກອົບຮົມໜ້າວຽກ (OJT) ໃຫ້ກັບ MPI.
2) ການຕີລາຄາຂອງການປະເມີນຜົນແຕ່ລະໂຄງການ PIP, ການຕິດຕາມກວດກາ ແລະ ການຕີລາຄາຜົນທີ່ເກີດຂື້ນ.
3) ໃຫ້ຄຳຄິດເຫັນກ່ຽວກັບການຕີລາຄາຜົນທີ່ເກີດຂຶ້ນຂອງ OJT ໃຫ້ກັບສາມແຂວງທີ່ຕິດຕາມຂອງ PCAP1.
4) ພັດທະນາຫຼັກສູດການເຝິກອົບຮົມຂອງປີໜ້າ.
5) ເຝິກອົບຮົມໃຫ້ຄູເຝິກ
6) ການຈັດຕັ້ງປະຕິບັດການເຝິກອົບຮົມ ພາກສ່ວນ I ສຳລັບບັນດາກະຊວງ ແລະ ແຂວງ.
7) OJT ໃຫ້ກັບ MPI, ບັນດາແຂວງ ແລະ ກະຊວງຕ່າງໆ.
8) ການຕີລາຄາຂອງການປະເມີນຜົນແຕ່ລະໂຄງການ PIP, ການຕິດຕາມກວດກາ ແລະ ການຕີລາຄາຜົນທີ່ເກີດຂຶ້ນ.
9) ການໃຫ້ຄຳຄິດເຫັນຕໍ່ກັບການຕີລາຄາຜົນທີ່ເກີດຂຶ້ນຈາກ OJT ແກ່ບັນດາກະຊວງ ແລະ ແຂວງຕ່າງໆ.
10) ພັດທະນາສ້າງຫຼັກສູດການເຝິກອົບຮົມສຳລັບປີໜ້າ
11) ເຝິກອົບຮົມໃຫ້ຄູເຝິກ
12) ການຈັດຕັ້ງປະຕິບັດການເຝິກອົບຮົມ ພາກສ່ວນ II ສຳລັບບັນດາກະຊວງ ແລະ ແຂວງ.
13) OJT ໃຫ້ກັບ MPI, ບັນດາແຂວງ ແລະ ກະຊວງຕ່າງໆ.
14) ການຕີລາຄາຂອງການປະເມີນຜົນແຕ່ລະໂຄງການ PIP, ການຕິດຕາມກວດກາ ແລະ ການຕີລາຄາຜົນທີ່ເກີດຂຶ້ນ.
15) ການໃຫ້ຄຳຄິດເຫັນຕໍ່ກັບການຕີລາຄາຜົນທີ່ເກີດຂຶ້ນຈາກ OJT ແກ່ບັນດາກະຊວງ ແລະ ແຂວງຕ່າງໆ.
16) ພັດທະນາສ້າງຫຼັກສູດການເຝິກອົບຮົມສຳລັບປີໜ້າ
17) ເຝິກອົບຮົມໃຫ້ຄູເຝິກ
18) ການຈັດຕັ້ງປະຕິບັດການເຝິກອົບຮົມ ພາກສ່ວນ II ສຳລັບບັນດາກະຊວງ ແລະ ແຂວງ.
19) OJT ໃຫ້ກັບ MPI, ບັນດາແຂວງ ແລະ ກະຊວງຕ່າງໆ.
20) ການຕີລາຄາຂອງການປະເມີນຜົນແຕ່ລະໂຄງການ PIP, ການຕິດຕາມກວດກາ ແລະ ການຕີລາຄາຜົນທີ່ເກີດຂຶ້ນ.
21) ການໃຫ້ຄຳຄິດເຫັນຕໍ່ກັບການຕີລາຄາຜົນທີ່ເກີດຂຶ້ນຈາກ OJT ແກ່ບັນດາກະຊວງ ແລະ ແຂວງຕ່າງໆ.
22) ການເຝິກອົບຮົມໃຫ້ເປັນລະດັບສະຖາບັນ

ໜ້າວຽກຕົ້ນຕໍຂອງຜົນໄດ້ຮັບ 1 ແມ່ນໄດ້ຈັດຕັ້ງປະຕິບັດການເຝິກອົບຮົມ. ໄດ້ມີການວາງແຜນການເຝິກອົບຮົມແບບວຽນຮອບສາມຄັ້ງຕໍ່ປີ. ການເຝິກອົບຮົມປະຈຳປີເຫຼົ່ານີ້ ແລະ ການເຝິກງານແບບປະຕິບັດວຽກຕົວຈິງ (OJT) ແມ່ນກ່ຽວຂ້ອງກັນຢ່າງໃກ້ຊິດກັບ ຂັ້ນຕອນການສ້າງງົບປະມານປະຈຳປີຂອງໂຄງການ PIP ເພື່ອຮັບປະກັນວ່າ ເນື້ອໃນຂອງການເຝິກອົບຮົມ ແມ່ນໄດ້ມີການນຳໃຊ້ຕົວຈິງ.

[ບັນດາກິດຈະກຳຜົນໄດ້ຮັບ 2]
(1) ບັນດາກິດຈະກຳທີ່ກ່ຽວຂ້ອງກັບການຈັດສັນງົບປະມານຂອງໂຄງການ PIP
   1) ການສຶກສາກ່ຽວກັບ ລະບົບການຈັດສັນງົບປະມານໃນປະຈຸບັນຂອງໂຄງການ PIP.
   2) ການວິເຄາະບັນຫາໃນປະຈຸບັນໃນການຈັດສັນງົບປະມານຂອງໂຄງການ PIP.
   3) ພັດທະນາມາດຕະຖານສະບັບປັບປຸງ ແລະ ບັນຈຸເຂົ້າໃນປຶດຄູ່ມືແນະນຳ ແລະ ປື້ມຄູ່ມື.
   4) ພັດທະນາສ້າງເນື້ອໃນຂອງການເຝິກອົບຮົມ
   5) ການເຝິກອົບຮົມໃຫ້ຄູເຝິກ
   6) ຮັບຮອງເອົາມາດຕະຖານສະບັບປັບປຸງ.
   7) ຮັບຮອງເອົາການເຝິກອົບຮົມ.
(2) ບັນດາກິດຈະກຳທີ່ກ່ຽວຂ້ອງກັບການຄຸ້ມຄອງດ້ານການເງິນຂອງໂຄງການ PIP.

1) ສຶກສາກ່ຽວກັບການຄຸ້ມຄອງທາງດ້ານການເງິນ ແລະ ການໃຊ້ຈ່າຍເງິນໂຄງການ PIP ທີ່ນຳໃຊ້ໃນປະຈຸບັນ.
2) ວິເຄາະບັນຫາຂອງການຈ່າຍງົບປະມານຂອງໂຄງການ PIP ໃນປະຈຸບັນ.
8) ພັດທະນາມາດຕະຖານສະບັບປັບປຸງ ແລະ ບັນຈຸເຂົ້າໃນປຶດຄູ່ມືແນະນຳ ແລະ ປຶ້ມຄູ່ມື.
3) ພັດທະນາສ້າງເນື້ອໃນຂອງການເຝິກອົບຮົມ.
4) ການເຝິກອົບຮົມໃຫ້ຄູເຝິກ.
5) ຮັບຮອງເອົາມາດຕະຖານສະບັບປັບປຸງ.
6) ຮັບຮອງເອົາການເຝິກອົບຮົມ

ໃນຂັ້ນຕອນການວາງແຜນ, ບັນດາກິດຈະກຳສຳລັບ ຜົນໄດ້ຮັບ 2 ໄດ້ແຍກອອກເປັນອົງປະກອບຍ່ອຍສອງສ່ວນ; ການຈັດສັນງົບປະມານປະຈຳປີຂອງໂຄງການ PIP ແລະ ການຄຸ້ມຄອງດ້ານການເງິນຂອງ PIP. ໃນຂະນະທີ່ ເຄື່ອງມື ແລະ ວິທີການໄດ້ຮັບການພັດທະນາສ້າງຂຶ້ນ, ອົງປະກອບຍ່ອຍສອງສ່ວນແມ່ນຖືກລວມເຂົ້າກັນ, ສະນັ້ນ, ວິໄນທາງການເງິນໂດຍລວມ ແມ່ນສາມາດບັນລຸໄດ້.

[ບັນດາກິດຈະກຳສຳລັບ ຜົນໄດ້ຮັບ 3]
1) ການໃຫ້ຄຳແນະນຳປຶກສາ ກ່ຽວກັບການຮ່າງກົດໝາຍວ່າດ້ວຍການລົງທຶນຂອງລັດ.
2) ການເຝິກອົບຮົມໃນປະເທດທີສາມທີ່ ຫວຽດນາມ
3) ສືບຕໍ່ການໃຫ້ຄຳແນະນຳປຶກສາກ່ຽວກັບການຮ່າງກົດໝາຍວ່າດ້ວຍການລົງທຶນຂອງລັດ ທີ່ມີໃນປະຈຸບັນ.
4) ໃຫ້ຄຳແນະນຳປຶກສາໃນການອອກດຳລັດຈັດຕັ້ງປະຕິບັດ ແລະ/ຫຼື ຂໍ້ກຳນົດຕ່າງໆ.
5) ຕິດຕາມກວດກາການບັງຄັບໃຊ້ກົດໝາຍວ່າດ້ວຍການລົງທຶນຂອງລັດ

ບັນດາກິດຈະກຳສຳລັບ ຜົນໄດ້ຮັບ 3 ແມ່ນສຸມໃສ່ການສະໜັບສະໜູນການພັດທະນາ ແລະ ການແຜ່ຂະຫຍາຍຂອງກົດໝາຍການລົງທຶນຂອງລັດ ແລະ ດຳລັດການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ.

[ບັນດາກິດຈະກຳສຳລັບ ຜົນໄດ້ຮັບ 4]
(1) ການຄຸ້ມຄອງເງິນທຶນສົມທົບ ໂຄງການຊ່ວຍເຫຼືອລ້າ (ODA)
1) ສຶກສາກ່ຽວກັບການຄຸ້ມຄອງໂຄງການຊ່ວຍເຫຼືອລ້າໃນປະຈຸບັນ.
2) ວິເຄາະກ່ຽວກັບບັນຫາໃນປະຈຸບັນກ່ຽວກັບການຄຸ້ມຄອງເງິນທຶນຊ່ວຍເຫຼືອລ້າຂອງຜູ້ໃຫ້ທຶນ.
3) ການພັດທະນາ ວິທີການ ແລະ ລະບຸໄວ້ໃນປຶດຄູ່ມືແນະນຳ ແລະ ປຶ້ມຄູ່ມື.
4) ການພັດທະນາເນື້ອໃນຂອງການເຝິກອົບຮົບ.
5) ການເຝິກອົບຮົມໃຫ້ຄູເຝິກ.
6) ການຮັບຮອງເອົາວິທີການ ແລະ ການເຝິກອົບຮົມ.
7) ການເຝິກອົບຮົມໃນປະເທດທີສາມ
8) ການຮັບຮອງເອົາວິທີການ
9) ການຮັບຮອງເອົາການເຝິກອົບຮົມ.
(2) ການຄຸ້ມຄອງໂຄງການ PIP ຂັ້ນເມືອງ
1) ສຶກສາກ່ຽວກັບການເຂົ້າອອກຂອງວຽກ ແລະ ລະດັບຄວາມສາມາດຂອງຫ້ອງການແຜນການຂັ້ນເມືອງ.
2) ວິເຄາະກ່ຽວກັບການແບ່ງວຽກທີ່ເໝາະສົມລະຫວ່າງ DPI ແລະ ຫ້ອງການແຜນການຂັ້ນເມືອງ.
3) ການພັດທະນາວິທີການ ແລະ ເຄື່ອງມື ແລະ ລະບຸໄວ້ໃນປຶດຄູ່ມືແນະນຳ ແລະ ປຶ້ມຄູ່ມື.
4) ການພັດທະນາຫຼັກສູດການເຝິກອົບຮົມ ແລະ ເນື້ອໃນກ່ຽວກັບການເຝິກຄູເຝິກ.
5) ການເຝິກອົບຮົມໃຫ້ຄູເຝິກໃນ MPIDOE.

| |
|---|
| 6) ການຮັບຮອງຂັ້ນຕອນ, ວິທີການ, ເຄື່ອງມື ແລະ ການເຝິກອົບຮົມ. |
| (3) ການຄຸ້ມຄອງແຜນງານຂອງຂະແໜງການ |
| 1) ທົບທວນປັບປຸງແຜນປະຕິບັດງານ |
| 2) ການກະກຽມຮ່າງແຜນງານຕົວຢ່າງ |
| 3) ການຮ່າງແຜນງານຕົວຢ່າງ |
| 4) ການທົບທວນປັບປຸງຄູ່ມືແນະນຳແຜນງານ |
| 5) ການພັດທະນາສ້າງເນື້ອໃນຂອງການເຝິກອົບຮົມ |
| 6) ການເຝິກອົບຮົມໃຫ້ຄູເຝິກ |
| 7) ການຮັບຮອງວິທີການ ແລະ ການເຝິກອົບຮົມ |
| 8) ການຮັບຮອງວິທີການ ແລະ ການເຝິກອົບຮົມ |
| 9) ການເຝິກອົບຮົມທີ່ປະເທດທີສາມ |

ກິດຈະກຳຂອງຜົນໄດ້ຮັບ 4 ລວມມີສາມອົງປະກອບຍ່ອຍ: ການຄຸ້ມຄອງທຶນສົມທົບ ODA, ການຄຸ້ມຄອງ ໂຄງການ PIP ໃນຂັ້ນເມືອງ ແລະ ການຄຸ້ມຄອງແຜນງານ; ດັ່ງທີ່ລະບຸໄວ້ໃນເປົ້າໝາຍຂອງຜົນໄດ້ຮັບ 4. ເນື່ອງຈາກວ່າແຕ່ລະຫົວຂໍ້ນັ້ນ ມີຄວາມແຕກຕ່າງກັນ, ຈຶ່ງເຮັດໃຫ້ກິດຈະກຳ ແຕກຕ່າງກັນອອກໄປ ເຖິງແມ່ນວ່າຈະໄດ້ລວບລວມເອົາບັນຫາກິດຈະກຳດັ່ງກ່າວເຂົ້າໄວ້ໃນການສ້າງຄູ່ມືການຄຸ້ມຄອງໂຄງການ/ປື້ມແນະນຳ ແລະ ການຝຶກອົບຮົມກໍຕາມ.

## 3. ປັດໄຈນຳເຂົ້າ

ການກຳນົດປັດໄຈນຳເຂົ້າພາຍໃນ MPI ແລະ JICA ໄດ້ລະບຸໄວ້ໃນບົດບັນທຶກການພົບປະໃນເບື້ອງຕົ້ນ. ໃນນີ້, ທັງສອງພາກສ່ວນ ໄດ້ປັບປຸງປັດໄຈນຳເຂົ້າເລັກນ້ອຍ ແລະ ຕົກລົງເຫັນດີໃນເວລາປຶກສາຫາລື. ດັ່ງນັ້ນ, ບໍ່ມີພາກສ່ວນໃດຕ້ອງການຍົກເລີກ ຫຼື ເລື່ອນເວລາການຈັດຕັ້ງປະຕິບັດໂຄງການອອກໄປ. ເຖິງຢ່າງໃດກໍຕາມ, ບໍ່ມີການຮ່ວມກັນອອກຄ່າໃຊ້ຈ່າຍຈັດຝຶກອົບຮົມ ຕາມທີ່ໄດ້ຕົກລົງກັນໃນບົດບັນທຶກແຕ່ຢ່າງໃດ.

ຕາຕະລາງລຸ່ມນີ້ ສະແດງໃຫ້ເຫັນກ່ຽວກັບປັດໄຈນຳເຂົ້າຂອງໂຄງການ PCAP2 ຂອງສອງພາກສ່ວນ;

(1) ການຈັດຕັ້ງໂຄງການ

1) ຝ່າຍລາວ

| | |
|---|---|
| ຜູ້ອຳນວຍການໂຄງການ | ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍວ່າການ, ກະຊວງແຜນການ ແລະ ການລົງທຶນ |
| ຜູ້ຈັດການໂຄງການ | ທ່ານ ວິໄຊ ຊາວວັນນາ, ຫົວໜ້າກົມ DOE (ມີນາ 2008 ເຖິງ ມິຖຸນາ 2010) |
| | ທ່ານ ບຸນປອນ ສີສຸລາດ, ຫົວໜ້າກົມ DOE (ກໍລະກົດ 2010 ເຖິງ ມິຖຸນາ 2011) |
| | ທ່ານ ຂັນຄຳ ແສງອາໄພ, ຮັກສາການຫົວໜ້າພະແນກ, DOE (ກໍລະກົດ 2011 ເຖິງ ສິງຫາ 2011) |

| | |
|---|---|
| ຜູ້ຈັດການຮ່ວມ | ທ່ານ ອຸ່ນເຮືອນ ຈິດທະພົງ, ຮອງຫົວໜ້າກົມ DOP |
| ຜູ້ຈັດການຮ່ວມ | ທ່ານ ທຸມພັນ ສຸກປະສິດ, ຮອງຫົວໜ້າກົມ DIC |
| ພະນັກງານກ່ຽວຂ້ອງ | ໄດ້ຈັດພະນັກງານເຮັດວຽກຊົ່ວຄາວຈາກ MPI-DOE, MPI-DOP, MPI-DIC ໂດຍຜ່ານຄະນະກຳມະການຈັດຕັ້ງປະຕິບັດໂຄງການ ຊີ້ນຳໂດຍຜູ້ຈັດການໂຄງການ ແລະ ອະນຸມັດໂດຍຜູ້ອຳນວຍການໂຄງການ. |

2) ຝ່າຍຍີ່ປຸ່ນ ມອບໝາຍໂດຍ JICA ໃຫ້ບໍລິສັດ ICNet ຈຳກັດ

| | |
|---|---|
| ຫົວໜ້າທີ່ປຶກສາ | ທ່ານ ອິຊິໂລະ ໂອກຸມາ, ທີ່ປຶກສາອາວຸໂສ, ບໍລິສັດ ICNet ຈຳກັດ |
| ຜູ້ບໍລິຫານໂຄງການ | ທ່ານ ຮິໂລມິ ໂອຊາດາ, ທີ່ປຶກສາອາວຸໂສ, ບໍລິສັດ ICNet ຈຳກັດ |
| ພະແນກການເງິນ | ທ່ານ ອະສຸຊິ ໂຕກຸລະ , ທີ່ປຶກສາອາວຸໂສ, ບໍລິສັດ ICNet ຈຳກັດ |
| ພະແນກບັນຊີ | ທ່ານ ຮິໂລຟູມິ ອາຊິຕະ, ທີ່ປຶກສາອາວຸໂສ, ສະຖາບັນຄົ້ນຄວ້າເສດຖະກິດຍີ່ປຸ່ນ |
| ພະແນກພັດທະນາການຝຶກອົບຮົມ | ທ່ານ ນາງ ໂຕໂມ ໄທລະ, ທີ່ປຶກສາອາວຸໂສ, ບໍລິສັດ ICNet ຈຳກັດ |
| ຜູ້ປະສານງານໂຄງການ | ພະນັກງານຈາກ ບໍລິສັດ ICNet ຈຳກັດ |

## (2) ພະນັກງານອື່ນໆ ຈ້າງໂດຍ JICA

- ✧ ທີ່ປຶກສາຝ່າຍລາວເພື່ອຊ່ວຍຊ່ຽວຊານຍີ່ປຸ່ນ
- ✧ ພະນັກງານບໍລິຫານ ແລະ ພະນັກງານປະຈຳຫ້ອງການ
- ✧ ພະນັກງານຂັບລົດ

## (3) ການກະກຽມອຸປະກອນໂດຍ JICA

- ✧ ອຸປະກອນຮັບໃຊ້ຫ້ອງການ ແລະ ເຄື່ອງມືຈຳເປັນສຳລັບການຝຶກອົບຮົມ
- ✧ ລົດໂຄງການ/ລົດຕູ້

## (4) ການກະກຽມສິ່ງອຳນວຍຄວາມສະດວກອື່ນໆໂດຍ MPI

- ✧ ເຄື່ອງໃຊ້ຫ້ອງການ, ຫ້ອງປະຊຸມ, ຫ້ອງຝຶກອົບຮົມ
- ✧ ຄ່າທຳນຽມດ້ານການບໍລິຫານ (ຄ່ານ້ຳ, ຄ່າໄຟຟ້າ)

## (5) ຄ່າໃຊ້ຈ່າຍຮ່ວມກັນອື່ນໆ

- ✧ ເງິນເດືອນພະນັກງານຊົ່ວຄາວ, ລັດຖະບານເປັນຄົນຈ່າຍຕາມລະບຽບການ
- ✧ ຄ່າໃຊ້ຈ່າຍໃນການຈັດຝຶກອົບຮົມສຳລັບພາກ II ຈະໄດ້ອອກຮ່ວມກັນ ລະຫວ່າງ MPI (33%) ແລະ JICA (67%).
- ✧ ຄ່າໃຊ້ຈ່າຍໃນການຈັດຝຶກອົບຮົມສຳລັບພາກ III ຈະໄດ້ອອກຮ່ວມກັນ ລະຫວ່າງ MPI (67%) ແລະ JICA (33%).
- ✧ ການອອກຄ່າໃຊ້ຈ່າຍອື່ນໆຮ່ວມກັນ ຕາມທີ່ໄດ້ຕົກລົງກັນໄວ້.

## (6) ການກະກຽມຝຶກອົບຮົມຢູ່ປະເທດທີສາມໂດຍ JICA

ການຝຶກອົບຮົມຢູ່ປະເທດທີສາມ ໄດ້ຂຶ້ນແຜນຝຶກອົບຮົມທີ່ປະເທດຫວຽດນາມ ເປັນຈຳນວນສາມຄັ້ງ. ເຖິງຢ່າງໃດກໍຕາມ, ເນື່ອງ

| |
|---|
| ຈາກມີການປຸ່ງນແປງໃຫ້ແທດເໝາະກັບສະພາບຄວາມຈຳເປັນຕົວຈິງ, ຈຶ່ງໄດ້ຈັດຝຶກອົບຮົມທີ່ປະເທດຫວຽດນາມພຽງແຕ່ຄັ້ງດຽວ ແລະ ສ່ວນທີ່ເຫຼືອແມ່ນຈັດຢູ່ມາເລເຊຍ. |

3. ຜົນສຳເລັດຂອງບັນດາກິດຈະກຳ ແລະ ຜົນໄດ້ຮັບຂອງໂຄງການ

ໂຄງການ PCAP2 ສາມາດດຳເນີນການຈັດຕັ້ງປະຕິບັດໂຄງການຕາມກິດຈະກຳທີ່ວາງໄວ້ ໄປຄຽງຄູ່ກັບແຜນດຳເນີນງານທີ່ລະບຸໄວ້ໃນ PDM ແລະ ສ່ວນໃຫ່ຍສາມາດສຳເລັດຜົນ ຕາມຕົວຊີ້ວັດຂອງຜົນໄດ້ຮັບ 4 ຢ່າງ. ລາຍລະອຽດຂອງບັນດາກິດຈະກຳທີ່ປະກອບເປັນຜົນໄດ້ຮັບ ແບະ ລະດັບຂອງຜົນສຳເລັດ ໄດ້ລະບຸໄວ້ໃນພາກຫຍ່ອຍ ດັ່ງລຸ່ມນີ້:

3.1. ຜົນໄດ້ຮັບ 1

(1) ຜົນສຳເລັດຂອງຜົນໄດ້ຮັບ 1
ໂຄງການ PCAP2 ໄດ້ຈັດຝຶກອົບຮົມປະຈຳປີກ່ຽວກັບການຄຸ້ມຄອງ PIP ແລະ OJT ໂດຍແນໃສ່ອົງການຈັດຕັ້ງກ່ຽວຂ້ອງ ຊຶ່ງແຕ່ລະປີຈະດຳເນີນການຝຶກອົບຮົມນັບຈາກປີທີສອງ ຈົນເຖິງປີສຸດທ້າຍຂອງໂຄງການ PCAP2. ດັ່ງນັ້ນ, ພະນັກງານ 485 ຄົນຈາກ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນໄດ້ສຳເລັດການຝຶກອົບຮົມດ້ານການບໍລິຫານຄຸ້ມຄອງ PIP ຢ່າງສົມບູນໃນເວລາໂຄງການສິ້ນສຸດລົງ. ນອກຈາກນີ້, ຍັງໄດ້ຈັດຝຶກອົບຮົມ ໃຫ້ແກ່ແກ່ພະນັກງານຈຳນວນ 6 ຄົນຈາກ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ເພື່ອໃຫ້ເປັນຄູຝຶກກ່ຽວກັບການຄຸ້ມຄອງ PIP ອີກດ້ວຍ. ປະຈຸບັນເຫັນວ່າ DPI ນະຄອນຫຼວງວຽງຈັນ ແລະ 16 ແຂວງ ມີຄວາມສາມາດປະເມີນ ແລະ ຕິດຕາມໂຄງການ PIP ຕາມປື້ມແນະນຳ ແລະ ຄູ່ມືການຄຸ້ມຄອງໂຄງການ. ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ຕົວຊີ້ວັດ 1.1 ໄດ້ຮັບຜົນສຳເລັດຢ່າງສົມບູນ.

ສຳລັບບັນດາກົມແຜນການທີ່ຢູ່ໃນຂັ້ນສູນກາງ ແລະ ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງອື່ນໆ, ມີພະນັກງານປະມານ 153 ຄົນ ໄດ້ຮັບການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP ຈົນເຖິງເວລາໂຄງການສິ້ນສຸດລົງ. ນອກນີ້, ຍັງມີພະນັກງານຈຳນວນ 5 ຄົນ ຈາກກົມແຜນການຂອງແຕ່ລະກະຊວງ[2] ກໍໄດ້ຮັບການຝຶກອົບຮົມໃຫ້ເປັນຄູຝຶກກ່ຽວກັບການບໍລິຫານຄຸ້ມຄອງ PIP[3]. ໃນນີ້ 3 ໃນ 8 ກະຊວງຫຼັກ ມີຄວາມສາມາດປະເມີນ ແລະ ຕິດຕາມໂຄງການ PIP ໃນລະດັບໜຶ່ງ ຕາມປື້ມຄູ່ມືການນຳໃຊ້ໂຄງການ ແລະ ປື້ມຄູ່ມື ທີ່ມີຢູ່ປະຈຸບັນ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າຕົວຊີ້ວັດ 1.2 ໄດ້ຮັບຜົນສຳເລັດສ່ວນໜຶ່ງ. ເບິ່ງລາຍລະອຽດເພີ່ມເຕີມກ່ຽວກັບລະດັບຜົນສຳເລັດຂອງຕົວຊີ້ວັດ ໃນຕາຕະລາງ 2.

[2] MPI ຖືວ່າ 8 ກະຊວງຕໍ່ໄປນີ້ເປັນກະຊວງຫຼັກ; MOAF, MPWT, MOEM, MIC, MOE, MOH, MOLS ແລະ MOIC.

[3] ບໍ່ລວມເອົາ MOH ເນື່ອງຈາກວ່າບໍ່ໄດ້ເຂົ້າຮ່ວມ TOT ກ່ຽວກັບການບໍລິຫານຄຸ້ມຄອງ PIP

ຕາຕະລາງ 2 ຜົນສຳເລັດຂອງຕົວຊີ້ວັດຂອງຜົນໄດ້ຮັບ 1

<table>
<tr><th>ຕົວຊີ້ວັດ</th><th>ລະດັບຜົນສຳເລັດ</th></tr>
<tr><td>1.1 ພະນັກງານຂອງ DPI ຫຼາຍກວ່າ 5 ແຫ່ງ ໃນແຕ່ລະແຂວງ ສາມາດ ບໍລິຫານໂຄງການ PIP ຕາມປຶ້ມແນະນຳ ແລະ ຄູ່ມືການຄຸ້ມຄອງໂຄງການ ທີ່ມີຢູ່ໃນປະຈຸບັນ.</td><td>1) ພະນັກງານທັງໝົດຈາກ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ສຳເລັດການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP ຕາມປຶ້ມແນະນຳ ແລະ ຄູ່ມືການຄຸ້ມຄອງໂຄງການທີ່ມີຢູ່ໃນປະຈຸບັນ ດັ່ງລຸ່ມນີ້:
<table>
<tr><th>ໄລຍະເວລາຂອງໂຄງການ</th><th>ການຝຶກອົບຮົມ</th><th>ຈຳນວນຜູ້ເຂົ້າຮ່ວມຈາກ DPI ຂັ້ນແຂວງ</th><th>ຈຳນວນຜູ້ເຂົ້າຮ່ວມໂດຍສະເລ່ຍຕໍ່ແຂວງ</th></tr>
<tr><td>ປີທີ 2</td><td>ການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP</td><td>ພະນັກງານ 178 ຄົນ (ຈາກ 13 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ບໍ່ລວມເອົາ 3 ແຂວງ ທີ່ເປັນຜູ້ຕິດຕາມການຝຶກອົບຮົມ)</td><td>12.7 ຄົນ</td></tr>
<tr><td>ປີທີ 3</td><td>ການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP</td><td>ພະນັກງານ 204 ຄົນ (ຈາກ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ)</td><td>12.0 ຄົນ</td></tr>
<tr><td>ປີທີ 4</td><td>TOT ກ່ຽວກັບການຄຸ້ມຄອງ PIP</td><td>ພະນັກງານ 103 ຄົນ (ຈາກ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ)</td><td>6.0 ຄົນ</td></tr>
<tr><td colspan="2">ລວມທັງໝົດ</td><td>485 ຄົນ</td><td></td></tr>
</table>
2) ພະນັກງານຈຳນວນທັງໝົດ 103 ຄົນ ຈາກ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ (ປະມານ 6 ຄົນ ຕໍ່ແຂວງ) ສຳເລັດ ການຝຶກອົບຮົມ ເພື່ອເປັນຄູຝຶກກ່ຽວກັບການຄຸ້ມຄອງ PIP.<br>
3) 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ໄດ້ຮັບປຶ້ມຄູ່ມື OJT ຈັດທຳໂດຍ MPI ແລະ ໄດ້ແນະນຳການດຳເນີນງານຕົວຈິງກ່ຽວກັບການຄຸ້ມຄອງ PIP.<br>
4) 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ປະເມີນ ແລະ ຕິດຕາມໂຄງການ PIP ໂດຍຜ່ານການນຳໃຊ້ໃບປະເມີນໂຄງການແບບງ່າຍດາຍ (SPAS) ຕາມປຶ້ມແນະນຳ ແລະ ຄູ່ມືການຄຸ້ມຄອງໂຄງການທີ່ມີຢູ່ໃນປະຈຸບັນ.</td></tr>
<tr><td>1.1 ພະນັກງານ ຂອງກົມແຜນການ ຫຼາຍກວ່າ 5 ແຫ່ງ ໃນແຕ່ລະກະຊວງ ຫຼື ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງອື່ນໆ ສາມາດບໍ ຄຸ້ມຄອງ PIP ຕາມປຶ້ມແນະນຳ ແລະ ຄູ່ມືການ</td><td>1) ພະນັກງານຈາກກົມຜົນການໃນສູນກາງ/ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງອື່ນໆ ສຳເລັດການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP ຕາມປຶ້ມແນະນຳ ແລະ ຄູ່ມືການຄຸ້ມຄອງໂຄງການທີ່ມີຢູ່ໃນປະຈຸບັນດັ່ງນີ້:
<table>
<tr><th>ໄລຍະເວລາຂອງໂຄງການ</th><th>ການຝຶກອົບຮົມ</th><th>ຈຳນວນຜູ້ເຂົ້າຮ່ວມຈາກກົມແຜນການຂອງແຕ່ລະກະຊວງ</th><th>ຈຳນວນສະເລ່ຍຂອງຜູ້ເຂົ້າຮ່ວມ ຕໍ່ກະຊວງ</th></tr>
</table></td></tr>
</table>

ນຳໃຊ້ໂຄງການ.

| | | | |
|---|---|---|---|
| ປີທີ 2 | ການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP | 18 ຄົນ (ຈາກ 34 ອົງການ) | 1.9 ຄົນ |
| ປີທີ 3 | ການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP | 100 ຄົນ * (ຈາກ 41 ອົງການ) | 2.4 ຄົນ |
| ປີທີ 4 | TOT ກ່ຽວກັບ ການຄຸ້ມຄອງ PIP | 35 ຄົນ (ຈາກ 7 ກະຊວງຫຼັກ) | 5.0 ຄົນ |
| | ລວມທັງໝົດ | 153 ຄົນ | |

* ລວມທັງເຈົ້າຂອງໂຄງການ PIP

2) ຈຳນວນພະນັກງານທັງໝົດ 35 ຄົນ ຈາກກົມແຜນການໃນ 7 ກະຊວງຫຼັກ (ສະເລ່ຍ 5 ຄົນຕໍ່ກະຊວງ) ໄດ້ສຳເລັດການຝຶກອົບຮົມ ເພື່ອເປັນຄູຝຶກກ່ຽວກັບການຄຸ້ມຄອງ PIP.
3) 8 ກະຊວງຫຼັກ ໄດ້ຮັບປຶ້ມຄູ່ມື OJT ຊຶ່ງຈັດທຳໂດຍ MPI ແລະ ໄດ້ແນະນຳການດຳເນີນງານຕົວຈິງກ່ຽວກັບການຄຸ້ມຄອງ PIP.
4) ບັນດາກົມແຜນການຂອງກະຊວງ MOAF, MIC, and MOIC ປະເມີນ ແລະ ຕິດຕາມໂຄງການ PIP ໄດ້ໃນລະດັບໜຶ່ງ ໂດຍຜ່ານການນຳໃຊ້ໃບປະເມີນໂຄງການແບບງ່າຍດາຍ (SPAS) ຕາມປຶ້ມແນະນຳ ແລະ ຄູ່ມືການຄຸ້ມຄອງໂຄງການທີ່ມີຢູ່ໃນປະຈຸບັນ.

(2) ການທົບທວນການຈັດຕັ້ງປະຕິບັດໂຄງການໂດຍລວມ

ໂຄງການ PCAP2 ໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳທີ່ກ່ຽວຂ້ອງກັບຜົນໄດ້ຮັບ 1 ຕາມຮອບວຽນລຸ່ມນີ້. ໂຄງການ ໄດ້ໝູນໃຊ້ຮອບວຽນການດຳເນີນໂຄງການຊຶ່ງປະກອບມີ: ການວາງແຜນ-ການດຳເນີນການ-ການຕິດຕາມ-ການປະກອບຄຳເຫັນ ເພື່ອສ້າງທັກສະດ້ານການຄຸ້ມຄອງ PIP ໃຫ້ສາມາດນຳໃຊ້ໄດ້ໃນທາງປະຕິບັດ ພາຍໃນອົງການກ່ຽວຂ້ອງອື່ນໆ (ເບິ່ງຮູບ 1).




**ຮູບ 1 ຮອບວຽນຂອງ ການວາງແຜນ-ການດຳເນີນການ-ການຕິດຕາມ-ການປະກອບຄຳເຫັນ**

ຂັ້ນຕອນທຳອິດ, ເປັນຂັ້ນຕອນການວາງແຜນ, ພັດທະນາຫຼັກສູດການຝຶກອົບຮົມ ໂດຍອີງໃສ່ຄວາມຕ້ອງການດ້ານການຝຶກອົບຮົມ ແລະ ດຳເນີນການຝຶກຄູຝຶກ. ຂັ້ນຕອນທີສອງ ແມ່ນຂັ້ນຕອນຂອງການດຳເນີນການ, ດຳເນີນການຝຶກອົບຮົມ ແລະ ໝູນໃຊ້ທັກສະທີ່ໄດ້ຮັບຈາກການເຮັດວຽກຕົວຈິງໂດຍຜ່ານ OJT. ໃນນີ້, ການຝຶກອົບຮົມ ແມ່ນການເຂົ້າຮ່ວມຟັງບັນຍາຍໃນຫ້ອງຮຽນ ໂດຍສຸມໃສ່ຄວາມຮູ້ພື້ນຖານທີ່ໄດ້ຮຽນມາ, ແຕ່ OJT ແມ່ນສຸມໃສ່ການນຳໃຊ້ຄວາມຮູ້ທີ່ໄດ້ຮັບຈາກການເຮັດວຽກປະຈຳວັນໃນຕົວຈິງ. ຂັ້ນຕອນທີສາມ, ການຕິດຕາມ, ຕິດຕາມ ແລະ ກວດກາການຝຶກອົບຮົມ ພ້ອມທັງ OJT, ຫຼັງຈາກນັ້ນ ກໍປະເມີນຄຸນນະພາບຂອງແຜນກິດຈະກຳປະຈຳປີ PIP ແລະ ປະເມີນຜົນໄດ້ຮັບຂອງ OJT ຂອງແຕ່ລະໂຄງການ PIP. ຂັ້ນຕອນທີສີ່, ເປັນຂັ້ນຕອນການປະກອບຄຳເຫັນ, ພັດທະນາຫຼັກສູດ ແລະ ເຄື່ອງມືການຝຶກອົບຮົມເພີ່ມເຕີມ ໂດຍນຳໃຊ້ບົດຮຽນທີ່ຖອດຖອນໄດ້ຈາກການຕິດຕາມ ແລະ ປະເມີນຜົນຂອງໂຄງການທີ່ຜ່ານ

ມາ. ໂຄງການ PCAP2, ໂດຍຜ່ານໄລຍະການຈັດຕັ້ງປະຕິບັດໂຄງການ, ໄດ້ນຳໃຊ້ຮອບວຽນການຈັດຕັ້ງປະຕິບັດໂຄງການຄື: ການວາງແຜນ-ການດຳເນີນການ-ການປະເມີນຜົນ-ການປະກອບຄຳເຫັນ ເປັນຈຳນວນສາມຄັ້ງ ເພື່ອສ້າງທັກສະດ້ານການຄຸ້ມຄອງ PIP ໃຫ້ສາມາດນຳໃຊ້ເຂົ້າໃນການເຮັດວຽກປະຈຳວັນໄດ້.

ຂັ້ນຕອນການຝຶກອົບຮົມຂອງໂຄງການ PCAP2 ໄດ້ຖືກອອກແບບເປັນ 3 ຂັ້ນຕອນ ເພື່ອເຮັດໃຫ້ພະນັກງານກ່ຽວຂ້ອງ ສາມາດຮຽນຮູ້ກ່ຽວກັບຄວາມຮູ້ພື້ນຖານທີ່ຈຳເປັນ, ເຄື່ອງມື ແລະ ວິທີການຕ່າງໆ ເພື່ອເພີ່ມຂີດຄວາມສາມາດຂອງພວກເຂົາ ໃນດ້ານການຄຸ້ມຄອງ PIP ເທື່ອລະກ້າວ. ສຳລັບການຈັດຝຶກອົບຮົມຄັ້ງທຳອິດໃນໂຄງການ, ການຈັດຝຶກອົບຮົບພາກທີ I ໃນປີທີສອງຂອງໂຄງການ (ປີງົບປະມານ 2008/09) ໄດ້ຂະຫຍາຍກຸ່ມເປົ້າໝາຍຈາກ 3 ແຂວງຕົວຢ່າງ[4] ມາເປັນທົ່ວປະເທດ, ໝາຍເຖິງທຸກໆແຂວງ ແລະ ບັນດາກະຊວງ, ໂດຍມີຮູບແບບຂອງການຝຶກອົບຮົມທີ່ເອີ້ນວ່າ “ການຄວບຄຸມເອົາທຸກບັນຫາ”. ຕິດຕາມດ້ວຍການຝຶກອົບຮົມໃນຮູບແບບ “ການເລືອກເຟັ້ນ ແລະ ການຍົກລະດັບ,” ການຝຶກອົບຮົມພາກທີ II ໃນປີທີສາມຂອງໂຄງການ ໄດ້ຄັດເລືອກເອົາແຕ່ເນື້ອໃນລະອຽດທີ່ມີໃນປະຈຸບັນພ້ອມທັງສະເໜີແນະບັນດາເຄື່ອງມື ແລະ ຂັ້ນຕອນການຄຸ້ມຄອງ PIP ແບບໃໝ່. ສຳລັບການຝຶກອົບຮົມຂັ້ນສຸດທ້າຍ, ການຝຶກອົບຮົບພາກທີ III ໃນປີທີ 4 ຂອງໂຄງການ ຊຶ່ງມີຮູບແບບຂອງການຝຶກອົບຮົມທີ່ເອີ້ນວ່າ “ການຍົກລະດັບດ້ານຄຸນນະພາບ”, ຮູບແບບດັ່ງກ່າວ ແນໃສ່ການຍົກລະດັບຄຸນນະພາບດ້ານເຄື່ອງມື ແລະ ຂັ້ນຕອນ ຂອງການຄຸ້ມຄອງ ພ້ອມທັງບັນດາເຄື່ອງມືໃໝ່ໆ (ເບິ່ງຕາຕະລາງ 3).

ຜົນທີ່ໄດ້ຮັບກໍຄື, MPI-DOE ໃນນາມເປັນອົງການຄຸ້ມຄອງ, ໂດຍຮ່ວມມືກັບ, MPI-DOP, ແລະ MPI-DIC ສາມາດດຳເນີນການຈັດຝຶກອົບຮົບດ້ານການຄຸ້ມຄອງ PIP ໃຫ້ແກ່ອົງການກ່ຽວຂ້ອງອື່ນໆ ໄດ້ເປັນຢ່າງດີ. 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ສາມາດປະເມີນຜົນ ແລະ ຕິດຕາມໂຄງການ PIP ຜ່ານລະບົບ (SPAS) ຕາມປຶ້ມຄູ່ມື ແລະ ປຶ້ມແນະນຳ. ນອກນີ້, ພວກເຂົາ ຍັງສາມາດດຳເນີນການຝຶກອົບຮົມດ້ານການຄຸ້ມຄອງ PIP ໃຫ້ແຫ່ບັນດາພະແນກໃນແຂວງຂອງພວກເຂົາເອງໄດ້ອີກດ້ວຍ. ບັນດາພະແນກການໃນ 16 ແຂວງ ແລະ ນະຄອນຫຼວງວຽງຈັນ ສາມາດຂຽນບົດສະເໜີຂໍໂຄງການ ໂດຍຜ່ານແບບຟອມການຂໍໂຄງການ ທີ່ລະບຸໄວ້ໃນປຶ້ມຄູ່ມືໂຄງການ ແລະ ປຶ້ມແນະນຳ (ເບິ່ງຕາຕະລາງ 4).

[4] ແຂວງອຸດົມໄຊ, ຄຳມ່ວນ ແລະ ສາລະວັນ ຊຶ່ງເປັນແຂວງຕົວຢ່າງ ຫຼື ແຂວງທົດລອງຂອງໂຄງການ PCAP1 ຊຶ່ງໄດ້ພັດທະນານຳໃຊ້ເຄື່ອງມື ແລະ ຂັ້ນຕອນການຄຸ້ມຄອງ PIP ໃຫ້ດີກວ່າເກົ່າ.

ສຳລັບບັນດາກະຊວງໃນ 8 ກະຊວງຫຼັກ, ເປັນຕົ້ນແມ່ນ MOAF, MIC ແລະ MOIC ສາມາດປະເມີນ ແລະ ຕິດຕາມໂຄງການ PIP ໄດ້ໃນລະດັບໜຶ່ງ ຕາມປຶ້ມແນະນຳ ແລະ ຄູ່ມືໂຄງການ. 7 ກະຊວງ ສາມາດສະເໜີຂໍໂຄງການ PIP ໄດ້ໃນລະດັບໜຶ່ງ ໂດຍຜ່ານຮູບແບບການຂໍໂຄງການ ທີ່ລະບຸໄວ້ໃນປຶ້ມຄູ່ມືໂຄງການ ແລະ ປຶ້ມແນະນຳ (ເບິ່ງຕາຕະລາງ 4).

ຕາຕະລາງ 3 ການຈັດຕັ້ງປະຕິບັດ ການຝຶກອົບຮົມດ້ານການຄຸ້ມຄອງ PIP

| | ວັນທີ | ຮູບແບບ | ເປົ້າໝາຍ | ຈຸດປະສົງຂອງການຝຶກອົບຮົມ | ຫຼັກສູດການຝຶກອົບຮົມ |
|---|---|---|---|---|---|
| ປີທີສອງຂອງໂຄງການ | ພະຈິກ 2008-ມັງກອນ 2009 | <u>ການຄອບຄຸມເອົາທຸກໆບັນຫາ</u> | • DPI ແລະ ພະແນກ ຈາກ 13 ແຂວງ ແລະນະຄອນຫຼວງວຽງຈັນ<br>• ກົມແຜນການ ແລະ ກົມອື່ນໆ ຈາກ 34 ກະຊວງ/ອົງການຈັດຕັ້ງຂອງລັດຖະບານທີ່ກ່ຽວນ້ອງອື່ນໆ | • DPI ຂັ້ນແຂວງ ແລະ ພະແນກຈະສາມາດຮຽນຮູ້ວິທີການຂຽນບົດສະເໜີໂຄງການ ແລະ ຂັ້ນຕອນການປະເມີນຜົນໂຄງການແບບສົມບູນ/ປຽບ ທຽບ ທີ່ສ້າງຂຶ້ນໂດຍ MPI/PCAP. | 1. ວິທີການຂຽນບົດສະເໜີ ໂຄງການ PIP<br>2. ຂັ້ນຕອນການປະເມີນຜົໂຄງການແບບສົມບູນ/ປຽບທຽບ ໂດຍນຳໃຊ້ເຄື່ອງມື ແລະ ຮູບແບບ ທີ່ພັດທະນາໂດຍ MPI/ PCAP |
| ປີທີ 3 ຂອງໂຄງການ | ພະຈິກ 2009-ກຸມພາ 2010 | <u>ເລືອກເຟັ້ນ ແລະ ຍົກລະດັບ</u> | • DPI ແລະ ພະແນກ ຈາກ 16 ແຂວງ ແລະ ນະຄອນຫຼວງວຽງຈັນ<br>• ກົມແຜນການ ແລະ ກົມອື່ນໆ ຈາກ 41 ກະຊວງ/ອົງການກ່ຽວຂ້ອງອື່ນໆຂອງລັດ | • ແນະນຳເຄື່ອງມືໃໝ່ກ່ຽວກັບການຄຸ້ມຄອງ PIP ແລະ ປັບປຸງຂັ້ນຕອນທີ່ມີຢູ່ໃນປະຈຸບັນ | ຂັ້ນຕອນການຄຸ້ມຄອງ PIP<br>• ແນະນຳເຄືອງມືໃໝ່ກ່ຽວກັບການຄຸ້ມຄອງ PIP<br>1. ການຂຽນບົດລາຍງານກ່ຽວກັບການຊຳລະສະສາງໜີ້ສິນ<br>2. ການຄຸ້ມຄອງໂຄງການ PIP ໃນຂັ້ນເມືອງ<br>3. ການຄຸ້ມຄອງທຶນສົມ ODA<br>• ຄັດເລືອກຂັ້ນຕອນການຄຸ້ມຄອງ PIP<br>4. ການຂຽນບົດລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ<br>5. ການປະເມີນໂຄງການ ໂດຍນຳໃຊ້ SPAS ສຳລັບໂຄງການທີ່ກຳລັງຈັດຕັ້ງປະຕິບັດ<br>6. ການຄຸ້ມຄອງແຜນງານຂອງຂະແໜງການ<br>7. ການປະເມີນຜົນການປຽບທຽບ PIP |

| | | | | | |
|---|---|---|---|---|---|
| ບົດທີ 4 ຂອງໂຄງການ | ພະຈິກ 2010-ທັນວາ 2010 | ຍົກລະດັບດ້ານຄຸນນະພາບ | · 16 ແຂວງ ແລະ ນະຄອນຫຼວງວຽງຈັນ<br>· ກົມແຜນການໃນ 7 ກະຊວງຫຼັກ | 1. DPI ຂັ້ນແຂວງ ແລະ ພະນັກງານ ພາຍໃນກົມແຜນການຂອງກະຊວງ ເຂົ້າໃຈຂັ້ນຕອນການຂໍງົບປະມານ PIP ປະຈຳປີ ແລະ ຮູ້ຈັກວິທີໃຊ້ເຄື່ອງມືແຕ່ລະຢ່າງຂອງການຄຸ້ມຄອງ.<br>2. ພະນັກງານທີ່ກ່າວມາຂ້າງເທິງນັ້ນ ສາມາດອະທິບາຍວິທີການຄຸ້ມຄອງແຕ່ລະຢ່າງໃຫ້ແກ່ເຈົ້າຂອງໂຄງການ ແລະ ພະນັກງານຂັ້ນເມືອງ[5].<br>3. ພະນັກງານທີ່ກ່າວມາຂ້າງເທິງນັ້ນ ສະເໜີທິດທາງການນຳໃຊ້ແຜນງົບປະມານ PIP ປະຈຳປີ, ສ້າງຕາຕະລາງ ແລະ ກຳນົດງົບປະມານ ຕາມຄວາມຕ້ອງການຂອງອົງກອນຂອງພວກເຂົາ. | 1. ກົດໝາຍວ່າດ້ວຍການສົ່ງເສີມລົງທຶນ<br>2. ຂັ້ນຕອນການຂໍງົບປະມານ PIP ປະຈຳປີ<br>3. ການຄຸ້ມຄອງດ້ານການເງິນຂອງ PIP<br>4. ການສະເໜີຂໍໂຄງການ<br>5. ຂັ້ນຕອນການປະເມີນໂຄງການ<br>6. ການຄຸ້ມຄອງທຶນສົມທົບ (ODA-NCB)<br>7. ການຄຸ້ມຄອງແຜນງານ ແລະ ການປະເມີນແບບສົມທຽບ<br>[ສຳລັບຕ່າງແຂວງເທົ່ານັ້ນ]<br>· ການປະເມີນຜົນຂອງການປະເມີນ<br>· ການຄຸ້ມຄອງ PIP ຂັ້ນເມືອງ<br>[ສຳລັບກະຊວງເທົ່ານັ້ນ]<br>· ການປະເມີນໂຄງການ ໂດຍຜ່ານລະບົບ SPAS |
| | ທັນວາ 2010 ມັງກອນ 2011 | | · ພະແນກໃນ 16 ແຂວງ ແລະ ນະຄອນຫຼວງວຽງຈັນ | · ເຈົ້າຂອງໂຄງການ ເຂົ້າໃຈຂັ້ນຕອນການສ້າງແຜນງົບປະມານ PIP ປະຈຳປີ ພ້ອມທັງຂັ້ນຕອນຫຼັກໃນການຄຸ້ມຄອງ ແລະ ເຄື່ອງມືຕ່າງໆໃນການຄຸ້ມຄອງ PIP | 1. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ<br>2. ຂັ້ນຕອນການຂໍງົບປະມານປະຈຳປີຂອງ PIP<br>3. ການຂໍໂຄງການ PIP ແລະ ບົດລາຍງານຄັດຕິດທີ່ຈຳເປັນ<br>4. ການຄຸ້ມຄອງແຜນງານ ແລະ ການປະເມີນແບບປຽບທຽບ<br>5. ການຄຸ້ມຄອງ ODANCB |

5 ການອະທິບາຍໃຫ້ພະນັກງານຂັ້ນເມືອງ ບໍ່ໄດ້ລວມເຂົ້າໃນຈຸດປະສົງຂອງການຝຶກອົບຮົບຂອງພະນັກງານໃນກົມແຜນການຂອງກະຊວງ

## ຕາຕະລາງ 4 ຜົນສຳເລັດຂອງການບໍລິຫານຄວາມຮູ້ ແລະ ທັກສະດ້ານ PIP ໂດຍ MPI, ແຂວງ ແລະ ກະຊວງ

<table>
<tr><th rowspan="2"></th><th rowspan="2">MPI</th><th colspan="2">ຂັ້ນແຂວງ/ນະຄອນຫຼວງວຽງຈັນ</th><th colspan="2">ຂັ້ນສູນກາງກະຊວງ/ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງອື່ນໆ</th></tr>
<tr><th>DPI</th><th>ຂັ້ນພະແນກ (ເຈົ້າຂອງໂຄງການ)</th><th>ກົມແຜນການ</th><th>ຂັ້ນພະແນກ (ເຈົ້າຂອງ ໂຄງການ)</th></tr>
<tr>
<td>ຂີດຄວາມສາມາດຂອງບຸກຄົນ</td>
<td>
➢ ພະນັກງານໃນ MPI-DOE, DOP, DIC ໄດ້ຮັບການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP ດັ່ງນີ້:
<table>
<tr><th>ປີ</th><th>ຈຳນວນຄູຝຶກ</th></tr>
<tr><td>2</td><td>・DOE 14 ຄົນ<br>・DOP 1 ຄົນ<br>・DIC 0 ຄົນ</td></tr>
<tr><td>3</td><td>・DOE 14 ຄົນ<br>・DOP 2 ຄົນ<br>・DIC 2 ຄົນ</td></tr>
<tr><td>4</td><td>・DOE 16 ຄົນ<br>・DOP 3 ຄົນ<br>・DIC 2 ຄົນ</td></tr>
</table>
➢ 2 ຄົນຈາກ MPIDOOP ໄດ້ປະສານງານ ແລະ ປະເມີນຜົນການຝຶກອົບຮົມ.
</td>
<td>
➢ ພະນັກງານໃນ DPI 16 ແຂວງ ແລະ ນະຄອນຫຼວງວຽງຈັນ ສຳເລັດການຝຶກອົບຮົບດ້ານຄຸ້ມຄອງ PIP ຕາມປຶ້ມແນະນຳ ແລະ ຄູ່ມືການນຳໃຊ້ໂຄງການດັ່ງນີ້:
<table>
<tr><th>ປີ</th><th>ຈຳນວນຜູ້ເຂົ້າຮ່ວມ</th></tr>
<tr><td>2</td><td>・DPI ຂັ້ນແຂວງ:178 ຄົນ<br>・DPI ຂັ້ນເມືອງ: 20 ຄົນ<br>(13 ແຂວງ ແລະ ນະຄອນຫຼວງວຽງຈັນ)</td></tr>
<tr><td>3</td><td>204 ຄົນ<br>(16 ແຂວງ ແລະ ນະຄອນຫຼວງວຽງຈັນ)</td></tr>
<tr><td>4</td><td>103 ຄົນ<br>(16 ແຂວງ ແລະ ນະຄອນຫຼວງວຽງຈັນ)</td></tr>
<tr><td>ລວມທັງໝົດ</td><td>505 ຄົນ</td></tr>
</table>
➢ ພະນັກງານຈຳນວນທັງໝົດ 103 ຄົນ ຈາກ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ໄດ້ຮັບການຝຶກອົບຮົມເພື່ອເປັນຄູຝຶກດ້ານການຄຸ້ມຄອງ PIP.
</td>
<td>
➢ ພະນັກງານໃນພະແນກ ຂອງ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ສຳເລັດການຝຶກອົບຮົມດ້ານການຄຸ້ມຄອງ PIP ຕາມປຶ້ມຄູ່ມືຈັດຕັງປະຕິບັດໂຄງການດັ່ງນີ້:
<table>
<tr><th>ປີ</th><th>ຈຳນວນຜູ້ເຂົ້າຮ່ວມ</th></tr>
<tr><td>2</td><td>318 ຄົນ (13 ແຂວງ ແລະ ນະຄອນຫຼວງວຽງຈັນ)</td></tr>
<tr><td>3</td><td>558 ຄົນ (16 ແຂວງ ແລະ ນະຄອນຫຼວງວຽງຈັນ)</td></tr>
<tr><td>4</td><td>811 ຄົນ<br>(16 ແຂວງ ແລະ ນະຄອນຫຼວງວຽງຈັນ)</td></tr>
<tr><td>ລວມທັງໝົດ</td><td>1,687 ຄົນ</td></tr>
</table>
</td>
<td>
➢ ພະນັກງານຈາກກົມແຜນການ/ອົງ ການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງອື່ນໆສຳເລັດການຝຶກອົບຮົມດ້ານການຄຸ້ມຄອງ PIP ຕາມປຶ້ມແນະນຳ ແລະ ຄູ່ມືການຄຸ້ມຄອງໂຄງານດັ່ງນີ້:
<table>
<tr><th>ປີ</th><th>ຈຳນວນຜູ້ເຂົ້າຮ່ວມ</th></tr>
<tr><td>2</td><td>18 ຄົນ<br>(34 ອົງການ)</td></tr>
<tr><td>3</td><td>100 ຄົນ *<br>(41 ອົງການ)</td></tr>
<tr><td>4</td><td>35 ຄົນ<br>(7 ກະຊວງຫຼັກ)</td></tr>
<tr><td>ລວມທັງໝົດ</td><td>153 ຄົນ</td></tr>
</table>
*ລວມທັງເຈົ້າຂອງໂຄງການ PIP
</td>
<td>
➢ ພະນັກງານຂອງພະແນກໃນກະຊວງ/ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງອື່ນໆ ສ□າເລດການຝຶກອົບຮົມດ້ານການຄຸ້ມຄອງ PIP ຕາມປຶ້ມຄູ່ມື ແລະ ຄູ່ມືການນຳໃຊ້ໂຄງການດັ່ງນີ້:
<table>
<tr><th>ປີ</th><th>ຈຳນວນຜູ້ເຂົ້າຮ່ວມ</th></tr>
<tr><td>2</td><td>51 ຄົນ<br>(34 ອົງການ)</td></tr>
<tr><td>3</td><td></td></tr>
<tr><td>4</td><td></td></tr>
<tr><td>ລວມທັງໝົດ</td><td>51 ຄົນ</td></tr>
</table>
</td>
</tr>
</table>

| | | | | | |
|---|---|---|---|---|---|
| ຂີດຄວາມສາມາດຂອງອົງກອນ | ➢ DOE ເປັນຈຸດສູນກາງ, ໂດຍມີການຮ່ວມມືກັນລະຫວ່າງ DOE, DOP, ແລະ DIC ໃນ MPI ສາ ມາດຈັດການຝຶກອົບຮົມດ້ານການຄຸ້ມຄອງ PIP ໃຫ້ແກ່ພາກສ່ວນກ່ຽວ ຂ້ອງອື່ນໆ ໄດ້ເປັນຢ່າງດີ. | ➢ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ສາມາດປະເມີນ ແລະ ຕິດຕາມ ໂຄງການ PIP ຜ່ານລະບົບ SPAS ຕາມປຶ້ມຄູ່ມືການຈັດຕັ້ງປະຕິບັດໂຄງການ.<br>➢ 16 ແຂວງ ແລະ DPI ນະຄອນຫຼວງວຽງຈັນ ສາມາດຈັດຝຶກອົບຮົມດ້ານການຄຸ້ມຄອງ PIP ໃຫ້ແກ່ບັນດາພະແນກພາຍໃນແຂວງຂອງພວກເຂົາ. | ➢ ບັນດາພະແນກໃນ 16 ແຂວງ ແລະ ນະຄອນຫຼວງວຽງຈັນ ສາມາດຂຽນບົດສະເໜີຂໍໂຄງການ PIP ໂດຍນຳໃຊ້ຮູບແບບຂອງບົດສະເໜີໂຄງການທີ່ລະບຸໄວ້ໃນປຶ້ມຄູ່ມື ແລະ ຄູ່ມືການນຳໃຊ້ໂຄງການ | ➢ MOAF, MIC, ແລະ MOIC ໃນ 8 ກະຊວງຫຼັກ ສາມາດປະເມີນ ແລະ ຕິດຕາມໂຄງການ PIP, ໄດ້ໃນລະດັບໜຶ່ງ, ຕາມປຶ້ມຄູ່ມື ແລະ ຄູ່ມືການນຳໃຊ້ໂຄງການ | ➢ 7 ກະຊວງ ສາມາດສະເໜີຂໍໂຄງການ PIP ໃນລະດັບໜຶ່ງ ໂດຍນຳໃຊ້ຮູບແບບຂອງບົດສະເໜີໂຄງການ ທີ່ລະບຸໄວ້ໃນປຶ້ມຄູ່ມື ແລະ ຄູ່ມືການນຳໃຊ້ໂຄງການ. |

3.2 ຜົນໄດ້ຮັບ 2

(1) ຜົນສໍາເລັດໂດຍລວມຂອງຜົນໄດ້ຮັບ 2

ໃນຈໍານວນສາມຕົວຊີ້ວັດຂອງຜົນໄດ້ຮັບ 2 ທີ່ເປັນເປົ້າໝາຍ ແລະ ສາມາດຢັ້ງຢືນໄດ້, ຕົວຊີ້ວັດທໍາອິດແມ່ນ *"ຄູ່ມືການຄຸ້ມຄອງໂຄງການ PIP" ແລະ ປື້ມແນະນໍາ ໄດ້ຍົກລະດັບ ແລະ ພັດທະນາຂຶ້ນເພື່ອໃຫ້ກວມເອົາບັນຫາການບໍລິຫານ ແລະ ວາງແຜນງົບປະມານຂອງ PIP. ໄດ້ສໍາເລັດການອະນຸມັດດ້ານເນື້ອໃນຂອງຄູ່ມືໂຄງການ ແລະ ປື້ມແນະນໍາ ຊຶ່ງໄດ້ແຈກຢາຍໃຫ້ແກ່ພະແນກຈັດຕັ້ງ-ພະນັກງານ ໃນທຸກໆອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງອື່ນໆ;* ຄູ່ມືໂຄງການ ໄດ້ປັບປຸງຄືນໃໝ່ໃນ ເດືອນສິງຫາ 2010 ຊຶ່ງປະກອບມີບົດຮຽນເພີ່ມເຕີມກ່ຽວກັບການຄຸ້ມຄອງດ້ານການເງິນ ແລະ ການຈັດສັນງົບປະມານ. ສໍາລັບປື້ມຄູ່ມື ກໍໄດ້ປັບປຸງເຊັ່ນດຽວກັນໃນເດືອນສິງຫາ 2010 ແລະ ໄດ້ປັບປຸງຄືນໃໝ່ອີກເທື່ອໜຶ່ງໃນເດືອນສິງຫາ 2011 ຊຶ່ງໃນທີ່ນີ້ແມ່ນໝາຍເຖິງການຄຸ້ມຄອງທາງດ້ານການເງິນ ແລະ ການຈັດສັນງົບປະມານຂອງ PIP. ທັງຄູ່ມື ແລະ ປື້ມແນະນໍາໄດ້ເຜີຍແຜ່ໃຫ້ແກ່ຜູ້ເຂົ້າຮ່ວມສໍາມະນາ ແລະ ຝຶກອົບຮົມ ພ້ອມທັງພາກ ສ່ວນກ່ຽວຂ້ອງອື່ນໆ.

ຕົວຊີ້ວັດທີສອງ; *ພະນັກງານ MPI ຫຼາຍກວ່າ 2 ຄົນ ແລະ ພະນັກງານຈາກກົມແຜນການຂອງແຕ່ລະແຂວງ, ກະຊວງ ແລະ ອົງການກ່ຽວຂ້ອງອື່ນໆຂອງລັດ ຫຼາຍກວ່າ 5 ຄົນ ສາມາດຄຸ້ມຄອງ PIP ແລະ ສໍາເລັດການຝຶກອົບຮົບໃຫ້ແກ່ພະນັກງານຂັ້ນແຂວງ ແລະ ເມືອງ ໂດຍການນໍາໃຊ້ປື້ມແນະນໍາ ແລະ ຄູ່ມືໂຄງການ ທີ່ໄດ້ຮັບການຍົກລະດັບ ແລະ ປັບປຸງຄືນໃໝ່.* ມີພະນັກງານຈໍານວນຫຼາຍຈາກ MPI ແລະ DPIs ສາມາດເຂົ້າໃຈເຄື່ອງມືທີ່ພັດທະນາຂຶ້ນໃໝ່ກ່ຽວກັບການຄຸ້ມຄອງການເງິນ ໂດຍຜ່ານການຝຶກອົບຮົມ. ຄາດວ່າຈະໃຫ້ພວກເຂົາໝູນໃຊ້ຄວາມຮູ້ ແລະ ທັກສະໃໝ່ໆທີ່ໄດ້ຮຽນມາ ເຂົ້າໃນການຄຸ້ມຄອງໂຄງການ ໂດຍອີງໃສ່ຄູ່ມືການນໍາໃຊ້ໂຄງການ ເຖິງແມ່ນວ່າໂຄງການຈະສິ້ນສຸດລົງກໍຕາມ. ສໍາລັບ DPIs ໄດ້ຈັດການຝຶກອົບຮົມດັ່ງລຸ່ມນີ້:

1) ການຝຶກອົບຮົມດ້ານການຄຸ້ມຄອງການເງິນຂອງ PIP ໄດ້ຈັດຂຶ້ນເປັນຈໍານວນ 3 ຄັ້ງ ທີ່ນະຄອນຫຼວງວຽງຈັນ ໃນເດືອນມັງກອນ 2010. ໃນນີ້, ໄດ້ຈັດການຝຶກອົບຮົມພາຍໃນໃຫ້ແກ່ພະນັກງານຂອງ MPI ກ່ອນ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດຈໍານວນ 11 ຄົນ. ພ້ອມດຽວກັນ, ຍັງໄດ້ຈັດຝຶກອົບຮົມເພີ່ມເຕີມໃຫ້ແກ່ພະນັກງານອີກ 11 ຄົນ ໃນເດືອນມີນາ 2010. ນອກຈາກນີ້, ກໍໄດ້ຈັດຝຶກອົບຮົມໃຫ້ແກ່ພະນັກງານຂອງ MPI ອີກ 10 ຄົນ ເພື່ອເປັນຄູຝຶກ. ຕາຕະລາງ 5 ສະຫຼຸບກ່ຽວກັບການຈັດຝຶກອົບຮົມທັງໝົດ.

ຕະຕະລາງ 5 ສະຫຼຸບການຝຶກອົບຮົມດ້ານການຄຸ້ມຄອງການເງິນ

| ຫົວຂໍ້ການຝຶກອົບຮົມ | ໄລຍະເວລາ | ກຸ່ມເປົ້າໝາຍ | ຈຳນວນຜູ້ເຂົ້າຮ່ວມ |
|---|---|---|---|
| ການຝຶກອົບຮົມສຳລັບ DPI 1 | 14, 15 ມັງກອນ | DPIs ໃນຂັ້ນສູນກາງ | 20 |
| ການຝຶກອົບຮົມສຳລັບ DPI 2 | 19, 20 ມັງກອນ | DPIs ໃນແຂວງພາກໃຕ້ | 22 |
| ການຝຶກອົບຮົມສຳລັບ DPI 3 | 21, 22 ມັງກອນ | DPIs ໃນແຂວງພາກເໜືອ | 28 |

ກ) ການສຳມະນາກ່ຽວກັບການຄຸ້ມຄອງທາງດ້ານການເງິນ ແລະ ຂັ້ນຕອນຂອງ PIP

ການສຳມະນາໄດ້ຈັດຂຶ້ນໃນເດືອນພະຈິກ 2010 ໂດຍມີຜູ້ເຂົ້າຮ່ວມປະມານ 4 ເຖິງ 5 ຄົນ ຈາກແຕ່ລະແຂວງລວມທັງນະຄອນຫຼວງວຽງຈັນ. ນອກນີ້, ຍັງໄດ້ເຊື້ອເຊີນຜູ້ເຂົ້າຮ່ວມທີ່ບໍ່ແມ່ນແຕ່ພະນັກງານວິຊາການເທົ່ານັ້ນ, ແຕ່ຍັງເຊີນເອົາຫົວໜ້າກົມ ແລະ ຮອງຫົວໜ້າກົມອີກດ້ວຍ ພ້ອມທັງພາກສ່ວນກ່ຽວຂ້ອງຫຼັກ ເພື່ອໃຫ້ເຂົ້າໃຈກ່ຽວກັບວຽກງານຄຸ້ມຄອງດ້ານການເງິນ ແລະ ການຈັດສັນງົບປະມານ.

2) ການຝຶກອົບຮົມດ້ານການຄຸ້ມຄອງ PIP

ປັບປຸງເນື້ອໃນໃໝ່ກ່ຽວກັບການຄຸ້ມຄອງດ້ານການເງິນ ແລະ ການຈັດສັນງົບປະມານ ຈາກຊຸດຝຶກອົບຮົມການຄຸ້ມຄອງ PIP ໃນປີ 2010. ການຈັດຝຶກອົບຮົມໃນແຕ່ລະຄັ້ງ, ໄດ້ນຳສະເໜີກ່ຽວກັບຂັ້ນຕອນການສ້າງແຜນງົບປະມານ PIP ປະຈຳສົກປີງົບປະມານ 2011/12 ພ້ອມທັງສະເໜີຮູບແບບເຄື່ອງມືຂອງການການເງິນໃຫ້ແກ່ DPIs, ພະແນກຂອງແຕ່ລະແຂວງ ແລະ 7 ພະແນກຕົ້ນຕໍຂອງບັນດາກະຊວງ.

ຕົວຊີ້ວັດທີສາມ; *MPI ແລະ DPI ພັດທະນາ ແລະ ສ້າງຂັ້ນຕອນການປະເມີນງົບປະມານ, ຈຳກັດຈຳນວນໂຄງການ PIP ທີ່ນຳໃຊ້ງົບປະມານລັດ ແລະ ໂຄງການທຶນສົມທົບ ODA ໃຫ້ຢູ່ໃນຂອບຂອງແຜນງົບປະມານປະຈຳປີ ພ້ອມທັງຈັດສັນແຜນງົບປະມານທີ່ມີໄວ້ໃຫ້ສຳເລັດ ແລະ ນອນໃນງົບປະມານທີ່ຕັ້ງໄວ້;* ແຕ່ບໍ່ເປັນທີ່ຮັບຮູ້ເທົ່າທີ່ຄວນ. ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ພະນັກງານ DPI ເຂົ້າໃຈລະອຽດກ່ຽວກັບການນຳໃຊ້ເຄື່ອງມືດ້ານການຄຸ້ມຄອງການເງິນຂອງ PIP. ເຖິງຢ່າງໃດກໍຕາມ, ສິ່ງດັ່ງກ່າວບໍ່ໄດ້ໝາຍຄວາມວ່າ ບັນດາແຂວງ ຈະນຳໃຊ້ເຄື່ອງມືການຄຸ້ມຄອງການເງິນ ນັບແຕ່ນີ້ເປັນຕົ້ນໄປ. ເນື່ອງຈາກວ່າ ຍັງບໍ່ມີກົນໄກອັນໃດມາຮອງຮັບການນຳໃຊ້ເຄື່ອງມືດັ່ງກ່າວເຂົ້າໃນຂັ້ນຕອນການສ້າງແຜນງົບປະມານ, ຊຶ່ງ MPI ຍັງບໍ່ທັນອະນຸຍາດໃຫ້ນຳໃຊ້ ຫຼື ໃຫ້ຄຳແນະນຳໃດໆເທື່ອ.

ບາງແຂວງກໍມີຄວາມເປັນຫ່ວງເປັນໄຍກ່ຽວກັບການຫຼຸດງົບປະມານຂອງໂຄງການໃໝ່ລົງ. ໃນລະຫວ່າງການຝຶກອົບຮົມ, ພວກເຂົາ ໄດ້ສະແດງຄວາມເປັນຫ່ວງເປັນໄຍວ່າບັນດາແຂວງອື່ນໆ ອາດຈະບໍ່ສາມາດດຳເນີນກິດຈະກຳໃຫ້ສຳເລັດຕາມເປົ້າໝາຍທີ່ວາງໄວ້ ເນື່ອງຈາກໂຄງການໃໝ່ໄດ້ຫຼຸດງົບປະມານລົງ. ໃນນີ້, ກໍມີເຈົ້າແຂວງຈຳນວນໜຶ່ງ ເຫັນວ່າຄວນເພີ່ມໂຄງການ PIP ຂຶ້ນເພື່ອໃຫ້ລະບົບການເງິນຂອງໂຄງການມີຄວາມດຸ່ນດ່ຽງ ແລະ ມີສະຖຽນລະພາບ. ບັນຫາທີ່ກ່າວມານັ້ນ ເປັນບັນຫາຫຍຸ້ງຍາກທີ່ PCAP2 ບໍ່ສາມາດແກ້ໄຂໄດ້ ເນື່ອງຈາກວ່າເປັນບັນຫາທີ່ຕິດພັນກັບລະບົບການຕັດສິນໃຈພາຍໃນຕະຫຼອດເຖິງຂັ້ນແຂວງ ຊຶ່ງບໍ່ນອນຢູ່ໃນຂອບວຽກຂອງໂຄງການ.

(2) ການທົບທວນການຈັດຕັ້ງປະຕິບັດໂຄງການໂດຍລວມ

1) ບັນຫາ ແລະ ຂໍ້ສະເໜີແນະ

ບັນຫາຫຼັກຂອງການວາງແຜນງົບປະມານ PIP ໄດ້ລະບຸໄວ້ໃນປີທຳອິດຂອງໂຄງການ; DPIs ໄດ້ຮັບບົດສະເໜີໂຄງການຈາກ POs ພາຍໃນເວລາຈຳກັດ ແລະ ມີຈຳນວນຫຼາຍໂພດ ຊຶ່ງບໍ່ສາມາດຕອບສະໜອງຢ່າງພຽງພໍຕາມຄວາມຕ້ອງການດັ່ງກ່າວ. ສຳລັບວິທີແກ້ໄຂ, ໂຄງການໄດ້ສະເໜີໃຫ້ມີຂັ້ນຕອນການສ້າງແຜນງົບປະມານຂອງ PIP ທີ່ສົມເຫດສົມຜົນ.

- MPI ຄວນອອກບົດແນະນຳກ່ອນລ່ວງໜ້າ ກ່ຽວກັບການສ້າງແຜນງົບປະມານ PIP ສຳລັບສົກປີງົບປະມານ.
- ໃນບົດແນະນຳນັ້ນ ຄວນກຳນົດມື້ສຸດທ້າຍຂອງການສົ່ງບົດສະເໜີໂຄງການຈາກ POs ໄປເຖິງ DPIs.
- ບົດແນະນຳຄວນລະບຸເພດານສູງສຸດຂອງການຂໍງົບປະມານຈາກ DPIs.

ບັນຫາກ່ຽວກັບການຄຸ້ມຄອງການເງິນ ທີ່ໄດ້ຈາກການສຳພາດ ມີດັ່ງລຸ່ມນີ້:

- ບັນດາແຂວງທີ່ບໍ່ມີບັນຫາຫຍຸ້ງຍາກດ້ານການເງິນ; ຈຳກັດງົບປະມານຂອງໂຄງການທັງໝົດດ້ວຍວິທີຄັດເລືອກເອົາໂຄງການທີ່ເປັນບູລິມະສິດ. ໃນແຂວງດັ່ງກ່າວ, ໄດ້ກຳນົດເວລາຈ່າຍເງິນໃຫ້ແກ່ຜູ້ຮັບເໝົາກ່ອນ ແລະ ບໍ່ກວດກາຄືນພາຍຫຼັງທີ່ດຳເນີນໂຄງການ. ຜູ້ຮັບເໝົາບໍ່ສົນໃຈວ່າຈະຈ່າຍໂຄງການຈະຈ່າຍເງິນໃຫ້ຊ້າ ແລະ ກໍມີຜູ້ຮັບເໝົາຫຼາຍຄົນ ສະເໜີເຂົ້າມາຮ່ວມປະມູນ. ໃນທີ່ສຸດ, ຈຳນວນຜູ້ຮັບເໝົາກໍຈະຫຼຸດລົງ.
- ສຳລັບບັນດາແຂວງທີ່ມີຄວາມຫຍຸ້ງຍາກກ່ຽວກັບບັນຫາການເງິນ ມີແນວໂນ້ມວ່າຈະຮັບເອົາຫຼາຍໆໂຄງການເທົ່າທີ່ຈະເປັນໄປໄດ້. ແຂວງດັ່ງກ່າວ ໃຫ້ສັນຍາກັບຜູ້ຮັບເໝົາວ່າຈະຈ່າຍເງິນ ຕາມກຳນົດໝາຍທີ່ວາງໄວ້, ແຕ່ການຈ່າຍເງິນຕົວຈິງ ກໍມີຄວາມຫຼ້າຊ້າ ແລະ ບໍ່ເປັນໄປຕາມທີ່ກຳນົດໄວ້. ເນື່ອງຈາກວ່າຜູ້ຮັບເໝົາ ຢືມເງິນຈາກທະນາຄານເພື່ອນຳໃຊ້ເຂົ້າໃນໂຄງການ PIP, ສະນັ້ນ ເມື່ອມີການຈ່າຍເງິນຊ້າ ກໍຈະເຮັດໃຫ້ຜູ້ຮັບເໝົາຕ້ອງຮັບພາລະໃນການຈ່າຍດອກເບ້ຍເພີ່ມຂຶ້ນ. ດ້ວຍເຫດນັ້ນ, ຜູ້ຮັບເໝົາ ຈຶ່ງພະຍາຍາມເຮັດໃຫ້ລາຄາຕາມສັນຍາຮັບເໝົາແພງຂຶ້ນກວ່າເກົ່າ ເພື່ອໃຫ້ຄຸ້ມກັບການຈ່າຍດອກເບ້ຍເພີ່ມຂຶ້ນແບບບໍ່ຄາດຄິດ.

ໂຄງການໄດ້ພັດທະນາເຄື່ອງມືການຄຸ້ມຄອງດ້ານການເງິນ, ການຮຽນຮູ້ຈາກບັນດາແຂວງທີ່ປະສົບຜົນສຳເລັດ ກໍສາມາດນຳໃຊ້ກັບແຂວງທີ່ມີບັນຫາຫຍຸ້ງຍາກດ້ານການເງິນໄດ້ເຊັ່ນກັນ. ໂຄງການ ຍັງໄດ້ເຮັດການວິໄຈດ້ານການເງິນໃຫ້ແກ່ແຂວງທີ່ເປັນຕົວແບບທົດລອງຈຳນວນໜຶ່ງ ແລະ ປຶກສາຫາລືກັບບັນດາແຂວງກ່ຽວກັບຄວາມເປັນໄປໄດ້ໃນການປັບປຸງສະພາບການເງິນ ດ້ວຍການນຳໃຊ້ເຄື່ອງມືການຄຸ້ມຄອງການເງິນ.

2) ການພັດທະນາແຜນການຝຶກອົບຮົມ, ເນື້ອໃນ, ການຝຶກອົບຮົມໃຫ້ແກ່ອາຈານ ແລະ ການຈັດຝຶກອົບຮົມ

ດັ່ງທີ່ໄດ້ກ່າວໄວ້ໃນຂໍ້ 1), ໄດ້ມີການຈັດສຳມະນາ ແລະ ຝຶກອົບຮົມຂຶ້ນ. ນອກນີ້, ຍັງໄດ້ຈັດຝຶກອົບຮົມໃຫ້ແກ່ຄູຝຶກ ເພື່ອມາຝຶກອົບຮົມດ້ານການຄຸ້ມຄອງການເງິນ ອີກດ້ວຍ. ມີການປັບປຸງເນື້ອໃນຂອງການຝຶກອົບຮົມ ດັ່ງລຸ່ມນີ້:

- ✧ ພາກສະເໜີໂດຍລວມກ່ຽວກັບການຄຸ້ມຄອງການເງິນ PIP
- ✧ ການວິໄຈດ້ານການເງິນ PIP ແລະ ການວາງແຜນງົບປະມານໂດຍ DPI
- ✧ ທິດທາງໃນໄລຍະກາງຂອງການເງິນ PIP ໂດຍ DPI

ເນື້ອໃນຂອງການຝຶກອົບຮົມໃນຫົວຂໍ້ທຳອິດ ແລະ ທີສອງ ໄດ້ພັດທະນາຂຶ້ນເພື່ອການຈັດຝຶກອົບຮົມໃຫ້ແກ່ DPIs, ສຳລັບຫົວຂໍ້ທີໜຶ່ງ ແລະ ທີສາມ ໄດ້ນຳໃຊ້ເຂົ້າໃນການຝຶກອົບຮົມໃຫ້ແກ່ພະນັກງານ MPI.

3) ການພັດທະນາຄູ່ມືການນຳໃຊ້ໂຄງການ ແລະ ປຶ້ມແນະນຳ

ໄດ້ເພີ່ມຫົວຂໍ້ກ່ຽວກັບການຄຸ້ມຄອງທາງດ້ານການເງິນ ແລະ ການຈັດສັນງົບປະມານຂອງ PIP. ໄດ້ສ້າງປຶ້ມຄູ່ມືຂຶ້ນໃນປີ 2011 ຊຶ່ງກວມເອົາຫົວຂໍ້ກ່ຽວກັບການຄຸ້ມຄອງທາງດ້ານການເງິນ ແລະ ການຈັດສັນງົບປະມານ ເທົ່າທີ່ມີຄວາມຈຳເປັນ.

3.3 ຜົນໄດ້ຮັບ 3

(1) ຜົນສຳເລັດໂດຍລວມຂອງຜົນໄດ້ຮັບ 3

ຜົນໄດ້ຮັບ 3 ນີ້ ຄາດວ່າຈະສຳເລັດຕາມເປົ້າໝາຍພາຍໃນເວລາໂຄງການສິ້ນສຸດລົງ. ກົດໝາຍສົ່ງເສີມການລົງທຶນ ໄດ້ຮັບການອະນຸມັດຈາກສະພາແຫ່ງຊາດໃນເດືອນພະຈິກ 2009 ແລະ ມີຜົນບັງຄັບໃຊ້ນັບຈາກເດືອນທັນວາ 2009 ເປັນຕົ້ນມາ. ປຶ້ມກົດໝາຍດັ່ງກ່າວ ໄດ້ຮັບການພິມເຜີຍແຜ່ ແລະ ແຈກຢາຍໃຫ້ແກ່ເຂົ້າຮ່ວມສຳມະນາ ແລະ ຝຶກອົບຮົມ.

ປະຈຸບັນກຳລັງຮ່າງດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ເຖິງແມ່ນວ່າ ຈະມີຄວາມຫຼ້າຊ້າກ່ຽວກັບຂັ້ນຕອນໃນການຂໍອະນຸມັດ, ແຕ່ກໍຄາດວ່າຈະສຳເລັດນິຕິກຳດັ່ງກ່າວໄດ້ໂດຍໄວ. ໂຄງການ PCAP2 ຈະສືບຕໍ່ປຶກສາຫາລືກັບຄະນະກຳມະການຮ່າງນິຕິກຳໃນ MPI ເພື່ອເຮັດໃຫ້ເນື້ອໃນຂອງປຶ້ມຄູ່ມື ແລະ ຄູ່ມືການນຳໃຊ້ໂຄງການ ມີຄວາມສອດຄ່ອງກັບນິຕິກຳດັ່ງກ່າວ.

(2) ການທົບທວນການຈັດຕັ້ງປະຕິບັດ

ຈະໄດ້ສືບຕໍ່ສ້າງກິດຈະກໍາ ທີ່ກ່ຽວຂ້ອງກັບການສະໜັບສະໜູນກົດໝາຍ ສົ່ງເສີມການລົງທຶນຈົນກວ່າໂຄງການຈະໝົດອາຍຸ. PCAP2 ໄດ້ຊ່ວຍເຫຼືອດ້ານວິຊາການກ່ຽວກັບ ເນື້ອໃນຂອງກົດໝາຍ ແລະ ເພື່ອໃຫ້ແນ່ໃຈວ່າ ກົດໝາຍ ກັບປື້ມຄູ່ມື/ຄູ່ມືການນໍາໃຊ້ໂຄງການ ມີຄວາມສອດຄ່ອງກັນ.

ໃນເບື້ອງຕົ້ນ MPI ໄດ້ກະກຽມຮ່າງກົດໝາຍເພື່ອເຂົ້າຜ່ານສະພາແຫ່ງຊາດໃນເດືອນພະຈິກ 2008, ແຕ່ຮ່າງດັ່ງກ່າວບໍ່ສາມາດຜ່ານສະພາແຫ່ງຊາດໄດ້ ເນື່ອງຈາກສະມາຊິກບາງທ່ານເຂົ້າໃຈຜິດກ່ຽວກັບຈຸດປະສົງ ແລະ ທີ່ມາຂອງກົດໝາຍສະບັບໃໝ່. ພາຍຫຼັງ MPI ໄດ້ປັບປຸງບາງເນື້ອໃນ ແລະ ອະທິບາຍເພີ່ມເຕີມໃຫ້ແກ່ສະມາຊິກສະພາ, ກົດໝາຍດັ່ງກ່າວ ກໍໄດ້ຮັບການອະນຸມັດໃນເດືອນພະຈິກ 2009 ໂດຍມີປະທານປະເທດຮັບຮອງເອົາກົດໝາຍດັ່ງກ່າວ ໃນວັນທີ 26 ທັນວາ 2009. PCAP2 ໄດ້ຈັດພິມກົດໝາຍ ແລະ ແຈກຢາຍໃຫ້ແກ່ອົງການຂອງລັດທີ່ກ່ຽວຂ້ອງໃນເວລາຈັດຝຶກອົບຮົມດ້ານການຄຸ້ມຄອງ PIP.

MPI ໄດ້ສືບຕໍ່ສຶກສາກ່ຽວກັບການຮ່າງດໍາລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຊຶ່ງຈະໄດ້ກໍານົດລະອຽດຂອບການຄຸ້ມຄອງ PIP. ດໍາລັດດັ່ງກ່າວ ຄາດວ່າຈະລວມເອົາບັນຫາກ່ຽວກັບການຈັດສັນງົບປະມານ PIP ໃຫ້ແກ່ຂັ້ນແຂວງ ແລະ ອົງການຕ່າງໆຂອງລັດ. ໃນນີ້, ຮ່າງດໍາລັດ ອາດຈະໄດ້ລະບຸລະອຽດຕື່ມກ່ຽວກັບໜ້າທີ່ ແລະ ຂອບຄວາມຮັບຜິດຊອບສະເພາະໃນການຄຸ້ມຄອງ PIP ໃນຂັ້ນເມືອງ ແລະ ຂັ້ນແຂວງ.

ໃນຕົ້ນເດືອນສິງຫາ, ດໍາລັດ ຍັງຢູ່ໃນຂັ້ນຕອນການປຶກສາຫາລື ເພື່ອປັບປຸງເນື້ອໃນລະອຽດກັບ MPI. ຄາດວ່າ ດໍາລັດຈະສາມາດຮັບຮອງໂດຍນາຍົກລັດຖະມົນຕີໄດ້ ພາຍຫຼັງທີ່ມີການປັບປຸງລະອຽດຕື່ມ.

3.4 ຜົນໄດ້ຮັບ 4

ດັ່ງທີ່ໄດ້ລະບຸໄວ້ໃນບົດທີ 2.3 (4), ຜົນໄດ້ຮັບ 4 ປະກອບມີສາມ ອົງປະກອບຫຍ່ອຍ. ດັ່ງນັ້ນ, ຈະໄດ້ອະທິບາຍກ່ຽວກັບຜົນສໍາເລັດໂດຍລວມກ່ອນ, ຕິດຕາມດ້ວຍການອະທິບາຍລະອຽດ ກ່ຽວກັບສາມອົງປະກອບຫຍ່ອຍ.

(1) ຜົນສໍາເລັດໂດຍລວມຂອງຜົນໄດ້ຮັບ 4

PCAP2 ໄດ້ລວມເອົາສາມອົງປະກອບຫຍ່ອຍທີ່ຈໍາເປັນເຂົ້າໃນ ຜົນໄດ້ຮັບ 4; ປະກອບມີ: ບັນຫາການຄຸ້ມຄອງທຶນສົມທົບ ODA ໄປຄຽງຄູ່ກັບການນໍາໃຊ້ SPIS, ການຄຸ້ມຄອງໂຄງການ PIP ໃນຂັ້ນເມືອງ ແລະ ການຄຸ້ມຄອງແຜນງານຂອງຂະແໜງການ; ໄດ້ຄັດເລືອກຄູ່ມືການຄຸ້ມຄອງໂຄງການ PIP ສະບັບຫຼ້າສຸດ ແລະ ປື້ມແນະນໍາ 5 ຫົວ ໃຫ້ແກ່ອົງການທີ່ກ່ຽວຂ້ອງກັບການຄຸ້ມຄອງ PIP. MPI ໄດ້ອະນຸມັດຄູ່ມືການນໍາໃຊ້ໂຄງການ ແລະ ປື້ມແນະນໍາ ພ້ອມທັງແຈກຢາຍໃຫ້ແກ່ພະນັກງານກ່ຽວຂ້ອງ. ເນື່ອງຈາກມີ

ເອກະສານດັ່ງກ່າວ, ຈຶ່ງເຮັດໃຫ້ພະນັກງານ ສາມາດເຂົ້າໃຈລະອຽດກ່ຽວກັບຄຸນນະພາບຂອງ ການຄຸ້ມຄອງໂຄງການ PIP ແລະ ຍັງສາມາດຝຶກອົບຮົມໃຫ້ແກ່ອົງການກ່ຽວຂ້ອງອື່ນໆ ໄດ້ອີກດ້ວຍ.

ຈຳນວນພະນັກງານຂອງ MPI ທີ່ມີຄວາມສາມາດໃນການຈັດຝຶກອົບຮົມ ມີຈຳນວນເພີ່ມຂຶ້ນຫຼາຍກວ່າທີ່ຕັ້ງເປົ້າໄວ້ 20 ຄົນ, ແລະ ຈຳນວນພະນັກງານໃນ 16 ແຂວງ ແລະ ນະຄອນຫຼວງວຽງຈັນ ກໍເພີ່ມຂຶ້ນຫຼາຍກວ່າເປົ້າທີ່ຕັ້ງໄວ້ຈຳນວນ 5 ຄົນ. ເຖິງຢ່າງໃດກໍຕາມ, ເຖິງແມ່ນວ່າໄດ້ແຈກຢາຍຄູ່ມືການນຳໃຊ້ໂຄງການ ແລະ ປຶ້ມຄູ່ມື ໃຫ້ທຸກໆກະຊວງ ແລະ ອົງການອື່ນໆຂອງລັດ, ແຕ່ກະຊວງທີ່ໄດ້ຮັບການຝຶກອົບຮົມ ຍັງມີຈຳກັດພຽງແຕ່ 8 ກະຊວງເທົ່ານັ້ນ. ດັ່ງນັ້ນ, ຈຳນວນຂອງພະນັກງານທີ່ໄດ້ຮັບການຝຶກອົບຮົມໃນບັນດາກະຊວງ ຍັງບໍ່ສາມາດບັນລຸຕາມເປົ້າໝາຍ PDM. ສາເຫດແມ່ນຍ້ອນມາຈາກ ປະສິດທິພາບ ແລະ ປະສິດທິຜົນຂອງການຝຶກອົບຮົມ, ແຕ່ໃນຂະນະທີ່ມີຂໍ້ຈຳກັດກ່ຽວກັບກາລະໂອກາດຂອງການຈັດຝຶກອົບຮົມ, PCAP2 ແລະ MPI ກໍໄດ້ຄັດເລືອກເອົາບັນດາກະຊວງທີ່ມີຄວາມສາມາດໝູນໃຊ້ງົບປະມານປະຈຳປີຂອງ PIP ໄດ້ດີທີ່ສຸດ. ສະນັ້ນ, ຈຶ່ງເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ເພີ່ມຈຳນວນພະນັກງານ ທີ່ໄດ້ຜ່ານການຝຶກອົບຮົມ ໃຫ້ແກ່ກະຊວງ ແລະ ອົງການອື່ນໆຂອງລັດ ໂດຍຜ່ານຫຼັກສູດການຝຶກອົບຮົມໄລຍະຍາວແບບຍືນຍົງ ຊຶ່ງ MPI ຈະໄດ້ມີການວາງແຜນການ ແລະ ຈັດຕັ້ງປະຕິບັດພາຍຫຼັງໂຄງການ PCAP2 ສິ້ນສຸດລົງ.

(2) ການຄຸ້ມຄອງທຶນສິນທິບ ODA

ຕົວຊີ້ວັດທັງໝົດທີ່ກ່ຽວຂ້ອງກັບຫົວຂໍ້ຂອງການຄຸ້ມຄອງທຶນສິນທິບ ODA (ODA-NCB) ໄດ້ບັນລຸຜົນສຳເລັດໃນເວລາສິ້ນສຸດໂຄງການ PCAP2. ລາຍລະອຽດຂອງຜົນສຳເລັດແມ່ນສະແດງໃຫ້ເຫັນໃນຕາຕະລາງດັ່ງຕໍ່ໄປນີ້.

### ຕາຕະລາງ 6 ຜົນສຳເລັດຂອງການຄຸ້ມຄອງທຶນສົມທົບ ກັບໂຄງການ ODA

<table>
<tr><th>ຕົວຊີ້ວັດ</th><th>ຜົນສຳເລັດ</th></tr>
<tr><td>ປື້ມຄູ່ມື ແລະ ປື້ມແນະນຳຂອງໂຄງການໄດ້ຖືກຍົກລະດັບ ຫລື ສ້າງຂື້ນ ເພື່ອໃຫ້ລວມເອົາຫົວຂໍ້ການຄຸ້ມຄອງທຶນສົມທົບ ODA. ປື້ມຄູ່ມື ແລະ ປື້ມແນະນຳດັ່ງກ່າວ ຖືກອະນຸມັດ ແລະ ແຈກຢາຍ ໃຫ້ພະນັກງານທີ່ກ່ຽວຂ້ອງຂອງລັດທັງໝົດ.</td><td>ຮູບສະແດງວຽກ ODA-NCB, ຮູບແບບ SPIS ແລະ ຮູບສະແດງການປະເມີນຜົນແບບສົມທຽບທີ່ໄດ້ຮັບການແກ້ໄຂ ທີ່ສະທ້ອນໃຫ້ເຫັນບັນຫາຂອງການຄຸ້ມຄອງທຶນສົມທົບ ODA ແມ່ນໄດ້ຖືກສ້າງຂື້ນ, ແລະ ລວມເອົາຄຳເຫັນຂອງ MPI ເຂົ້າໃນຄູ່ມື ທີ່ໄດ້ຖືກປັບປຸງ ແລະ ປື້ມແນະນຳສະບັບທຳອິດ.<br><br>ຄູ່ມືນຳໃຊ້ທີ່ໄດ້ຮັບການປັບປຸງ ແລະ ປື້ມແນະນຳສະບັບທຳອິດນັ້ນ ໄດ້ຖືກແຈກຢາຍໃຫ້ພະນັກງານຂອງລັດທີ່ກ່ຽວຂ້ອງ ຜູ້ທີ່ໄດ້ຮັບການຝຶກອົບຮົມໃນເດືອນພະຈິກ ຫາ ທັນວາ 2010.<br><br>ປື້ມຄູ່ມືສະບັບທີສອງໄດ້ຖືກກະກຽມ ແລະ ແຈກຢາຍໃຫ້ແກ່ພະນັກ ງານລັດທີ່ກ່ຽວຂ້ອງ ຜູ້ທີ່ໄດ້ຮັບການຝຶກອົບຮົມໃນເດືອນພະຈິກ 2010 ຫາ ເດືອນມັງກອນ 2011.<br><br>ເອກະສານຝຶກອົບຮົມທີ່ມີເນື້ອໃນກ່ຽວຂ້ອງກັບການຄຸ້ມຄອງ ODA-NCB ໄດ້ຖືກສ້າງຂື້ນ ແລະ ຖືກນຳໃຊ້ເຂົ້າໃນການຝຶກອົບຮົມ.</td></tr>
<tr><td>43 ພະນັກງານຂອງ MPI ຫລາຍກ່ວາ 20 ຄົນ ແລະ ມີພະນັກງານຈາກກົມແຜນການຫລາຍກວ່າ 5 ຄົນ ໃນແຕ່ລະແຂວງ, ກະຊວງ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງຂອງລັດ ແມ່ນມີຄວາມສາມາດທັງ ຄຸ້ມຄອງ PIP ໃຫ້ສອດຄ່ອງກັບຄູ່ມືນຳໃຊ້ ແລະ ປື້ມຄູ່ມື ທີ່ໄດ້ຮັບການພັດທະນາຂື້ນໃໝ່ ຫລື ຖືກຍົກລະດັບ ແລະ ການຝຶກອົບຮົມຂອງພະນັກງານຂັ້ນແຂວງ ແລະ ຂັ້ນເມືອງທີ່ກ່ຽວຂ້ອງ.</td><td>1) ໃນທ້າຍເດືອນມັງກອນ 2011, ໄດ້ສຳເລັດການຈັດຝຶກອົບຮົມ. ຈຳນວນພະນັກງານທີ່ໄດ້ຮັບການຝຶກອົບຮົມໃນແຜນວຽກການຈັດຝຶກອົບຮົມແມ່ນໄດ້ລະບຸໃນຕາຕະລາງລຸ່ມນີ້.<br>2) ຄູ່ມືນຳໃຊ້, ປື້ມຄູ່ມື ແລະ ເອກະສານການຝຶກອົບຮົມ ໄດ້ຮັບການຍົກລະດັບກັບອົງປະກອບຍ່ອຍນີ້.<br>3) ຄວາມສາມາດຂອງພະນັກງານທີ່ໄດ້ຮັບການຝຶກອົບຮົມແມ່ນໄດ້ຖືກປະເມີນຜົນ ໂດຍການກວດສອບກ່ອນ ແລະ ຫລັງ ການປະເມີນຜົນຂອງການຈັດຝຶກອົບຮົມ. ນອກນັ້ນ, ພະນັກງານທີ່ໄດ້ຮັບການອົບຮົມ TOT ໄດ້ຈັດຕັ້ງປະຕິບັດຊຸດຝຶກອົບຮົມອື່ນໆໃຫ້ແກ່ພະນັກງານຂອງພະແນກການຂັ້ນແຂວງ ແລະ ເມືອງ.<br><br><u>ຈຳນວນຜູ້ໄດ້ຮັບການຝຶກອົບຮົມໂດຍຜ່ານແຜນວຽກຂອງການຝຶກອົບຮົມ 20102011</u><br><table><tr><th>ແຜນວຽກການຈັດຝຶກອົບຮົມ</th><th>ຈຳນວນພະນັກງານທີ່ໄດ້ຮັບການອົບຮົມ</th></tr><tr><td>TOT ສຳລັບ DPI</td><td>103</td></tr><tr><td>TOT ສຳລັບ ບັນດາກະຊວງ</td><td>35</td></tr><tr><td>ເຈົ້າຂອງໂຄງການຢູ່ບັນດາແຂວງ</td><td>811</td></tr><tr><td>ລວມທັງໝົດ</td><td>949</td></tr></table></td></tr>
</table>

ກິດຈະກຳທີ່ກ່ຽວຂ້ອງທັງໝົດໄດ້ຖືກເຮັດສຳເລັດ. ຕາຕະລາງຕໍ່ໄປນີ້ສັງລວມການບັນທຶກບັນດາກິດຈະກຳນັ້ນ.

ຕາຕະລາງ 7 ການບັນທຶກບັນດາກິດຈະກຳ

| ກິດຈະກຳ | ການບັນທຶກ |
|---|---|
| 1 ສຶກສາຂັ້ນຕອນຂອງການຄຸ້ມຄອງທຶນສົມທົບ ODA ທີ່ແຈກຢາຍພາຍໃນປະເທດ, ການຄຸ້ມຄອງ PIP ຂັ້ນເມືອງ, ແລະ ການຄຸ້ມຄອງແຜນວຽກຂອງຂະແໜງການ. | [ສຳເລັດ]<br>ທີມງານຂອງໂຄງການໄດ້ແລກປ່ຽນຄວາມຄິດເຫັນກັບພະນັກງານທີ່ຮັບຜິດຊອບ ODA ໃນກົມກອງທີ່ກ່ຽວຂ້ອງ ເພື່ອເປັນການລິເລີ່ມການສຶກສາຂັ້ນຕົ້ນ.<br><br>ໄດ້ວິໄຈກ່ຽວກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງກົມກ່ຽວຂ້ອງຕໍ່ກັບ ODA ໃນ MPI ແລະ ຂັ້ນຕອນການນຳໃຊ້ງົບປະມານຂອງ PIP/ODA ແລະ ການຍື່ນສະເໜີຂໍທຶນສົມທົບ<br><br>ໄດ້ລະບຸບັນຫາທີ່ມີຢູ່ກ່ຽວກັບຂັ້ນຕອນການນຳໃຊ້ງົບປະມານ ແລະ ໄດ້ວິໄຈສິ່ງຈຳເປັນຂອງມາດຕະຖານຕອບໂຕ້. |
| 2 ຢັ້ງຢືນຂັ້ນຕອນ ແລະ ຕາຕະລາງຂອງການຄຸ້ມຄອງທຶນສົມທົບ ODA, ການຄຸ້ມຄອງ PIP ຂັ້ນເມືອງ ແລະ ການຄຸ້ມຄອງແຜນງານຂະແໜງການ ໃຫ້ສອດຄ່ອງກັບຂັ້ນຕອນການກຳນົດງົບປະມານປະຈຳປີ ແລະ ປະຕິທິນ ຊຶ່ງເລີ່ມ ຈາກ ແຂວງ ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ. | [ສຳເລັດ]<br>ຂັ້ນຕອນການນຳໃຊ້ງົບປະມານທຶນສົມທົບກັບໂຄງການ ODA ແມ່ນໄດ້ຖືກຢັ້ງຢືນໃນແຂວງ ອຸດົມໄຊ, ຄຳມ່ວນ, ສາລະວັນ ແລະ ບໍລິຄຳໄຊ. |
| 3 ຍົກລະດັບ "ຄູ່ມືສຳລັບການຄຸ້ມຄອງໂຄງການ PIP" ແລະ "ຄູ່ມືນຳໃຊ້ສຳລັບການຄຸ້ມຄອງແຜນວຽກ IP" ໂດຍແນໃສ່ການຄຸ້ມຄອງທຶນສົມທົບ ODA ພາຍໃນປະເທດ, ການຄຸ້ມຄອງ PIP ຂັ້ນເມືອງ, ແລະ ການຄຸ້ມຄອງແຜນງານ. ພ້ອມນັ້ນ , ຍັງມີການສ້າງປຶ້ມຄູ່ມືກ່ຽວກັບບັນຫາເຫລົ່ານັ້ນ. | [ສຳເລັດ]<br>ຮູບສະແດງວຽກ SPIS, ຮູບແບບ ແລະ ຮູບສະແດງວຽກການປະເມີນຜົນແບບສົມທຽບທີ່ໄດ້ຮັບການແກ້ໄຂ ແມ່ນໄດ້ຖືກສ້າງຂຶ້ນ ແລະ ຖືກຮວມເຂົ້າໃນຄູ່ມືນຳໃຊ້ໂຄງການ ເພື່ອການປັບປຸງ.<br><br>ເນື້ອໃນຂອງຄູ່ມືນຳໃຊ້ດັ່ງກ່າວໄດ້ຖືກປັບປຸງ ບົນພື້ນຖານຂອງຜົນໄດ້ຮັບຂອງການປະເມີນຜົນການຈັດຝຶກອົບຮົມໃນໄລຍະທີສາມ.<br><br>ປຶ້ມແນະນຳນັ້ນແມ່ນໄດ້ຖືກກະກຽມໃນເດືອນສິງຫາ 2010. |
| 4 ຜະລິດ ແລະ ແຈກຢາຍ ປຶ້ມຄູ່ມື ແລະ ປຶ້ມແນະນຳໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງທັງໝົດ. | [ສຳເລັດ]<br>1) ຄູ່ມືໂຄງການໄດ້ຮັບການຍົກລະດັບໃນໄລຍະທີສອງ ແລະ ຕໍ່ມາໄດ້ຖືກປັບປຸງພາຍຫລັງການຈັດຝຶກອົບຮົມໃນໄລຍະທີສາມ.<br>2) ປຶ້ມແນະນຳນັ້ນແມ່ນໄດ້ຖືກກະກຽມໃນໄລຍະທີສາມ ແລະ ໄດ້ຖືກແຈກຢາຍໃຫ້ແກ່ຂະແໜງການທີ່ພົວພັນເຖິງການຄຸ້ມຄອງ PIP ໃນໄລຍະທີສີ່. |
| 5 ຊ່ວຍ MPI ໃນການສ້າງຫລັກສູດການຝຶກອົບຮົມ ແລະ ເອກະສານອົບຮົມ. | [ສຳເລັດ]<br>ເນື້ອໃນຂອງການຈັດຝຶກອົບຮົມຂອງປີງົບປະມານ 2009/10 ໄດ້ຖືກກະກຽມ ແລະ ຕໍ່ມາໄດ້ຮັບການແກ້ໄຂສຳລັບປີງົບປະມານ 2010/11 ພາຍໃຕ້ການປະສານສົມທົບລະຫວ່າງຄູຝຶກຈາກ MPI ແລະ ຊ່ຽວຊານ JICA. |

| ກິດຈະກຳ | ການບັນທຶກ |
|---|---|
| | ໄດ້ສ້າງຫລັກສູດການຈັດຝຶກອົບຮົມ, ເນື້ອໃນການອົບຮົມ ແລະ ຄູ່ມືການຈັດຝຶກອົບຮົມ. |
| 6 ຊ່ວຍ MPI ໃນການຈັດການຝຶກອົບຮົມ ແລະ ກອງປະຊຸມແບບປະຕິບັດການ ໃຫ້ແກ່ບັນດາແຂວງ ແລະ ກະຊວງທັງໝົດ (ຈັດຕັ້ງກິດຈະກຳນີ້ພ້ອມດຽວກັບ 26). | [ສຳເລັດ]<br>ຂັ້ນຕອນການຄຸ້ມຄອງທັງໝົດຂອງການຈັດຝຶກອົບຮົມ ໂດຍຜ່ານການກະກຽມ, ການຈັດຕັ້ງປະຕິບັດ ແລະ ການປະເມີນຜົນ ໄດ້ເຮັດແລ້ວໂດຍການຮ່ວມມືກັນລະຫວ່າງພະນັກງານຂອງຄູ່ຮ່ວມຢູ່ໃນ MPI ແລະ ຊ່ຽວຊານ JICA. |
| 7 ຊ່ວຍ MPI ໃນການຈັດ OJT ໃຫ້ແກ່ບັນດາແຂວງ ແລະ ກະຊວງທັງໝົດ. | [ສຳເລັດ]<br>ພະນັກງານຄູ່ຮ່ວມຢູ່ໃນ MPI ໄດ້ຈັດຕັ້ງ OJT ໂດຍມີການຊ່ວຍເຫລືອຈາກຊ່ຽວຊານ JICA ແລະ ພະນັກງານຂັ້ນທ້ອນຖິ່ນຂອງໂຄງການ PCAP2 ໃນທົ່ວປະເທດຈາກເດືອນມີນາ ຫາ ພຶດສະພາ 2010. |
| 9 ຊ່ວຍ MPI ທົບທວນຄືນຄູ່ມື ແລະ ປື້ມແນະນຳ ບົນພື້ນຖານຂອງຄຳຕິຊົມຈາກບັນດາກິດຈະກຳ. | [ສຳເລັດ]<br>ພະນັກງານຄູ່ຮ່ວມໃນ MPI ເຮັດວຽກຮ່ວມກັບຊ່ຽວຊານ JICA ໄດ້ປັບປຸງຄູ່ມືນຳໃຊ້ ແລະ ໄດ້ຍົກລະດັບປຶ້ມຄູ່ມື ບົນພື້ນຖານຄຳຄິດເຫັນຈາກບົດລາຍການການປະເມີນຜົນການຝຶກອົບຮົມໄລຍະທີສາມ. |

(3) ການຄຸ້ມຄອງ PIP ຂັ້ນເມືອງ

ຕົວຊີ້ວັດທັງໝົດທີ່ກ່ຽວຂ້ອງກັບຫົວຂໍ້ການຄຸ້ມຄອງ PIP ຂັ້ນເມືອງ ໄດ້ບັນລຸຜົນສຳເລັດໃນເວລາ ສິ້ນສຸດໂຄງການ PCAP2. ລາຍລະອຽດຂອງຜົນສຳເລັດໄດ້ສະແດງໃຫ້ເຫັນໃນຕາຕະລາງຕໍ່ໄປນີ້.

ຕາຕະລາງ 8 ຜົນສຳເລັດຂອງການຄຸ້ມຄອງ PIP ຂັ້ນເມືອງ

| ຕົວຊີ້ວັດ | ຜົນສຳເລັດ |
|---|---|
| 4-1 ຄູ່ມື ແລະ ປື້ມແນະນຳໄດ້ຖືກຍົກລະດັບ ຫລື ສ້າງຂື້ນ ເພື່ອໃຫ້ກວມຮວມເອົາການຄຸ້ມຄອງ PIP ຂັ້ນເມືອງ. ປື້ມຄູ່ມື ແລະ ປື້ມແນະນຳແມ່ນໄດ້ຖືກປັບປຸງ ແລະ ແຈກຢາຍໃຫ້ພະນັກງານຂອງລັດທີ່ກ່ຽວຂ້ອງທັງໝົດ. | ບົດສະເໜີໂຄງການ PIP ແລະ ຮູບແບບການປະເມີນໃໝ່ ໄດ້ຖືກສ້າງຂື້ນເພື່ອການຄຸ້ມຄອງ PIP ຂັ້ນເມືອງ, ແລະ ໄດ້ຖືກສະທ້ອນໃຫ້ເຫັນໃນຄູ່ມື ແລະ ປື້ມແນະນຳການຄຸ້ມຄອງ PIP ຂັ້ນເມືອງ. ໄດ້ນຳສະເໜີຫລາກຫລາຍວຽກປະຈຳວັນ ແລະ ຊັບພະຍາກອນ ສຳລັບ ການນຳໃຊ້ໂຄງການຂັ້ນເມືອງ ລວມມີ ກອງທຶນພາຍໃນ ແລະ ກອງທຶນຊ່ວຍເຫລືອລ້າ ສຳລັບ ການພັດທະນາເຂດຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ.<br><br>ໃນຊຸດຝຶກອົບຮົມ, ການສົນທະນາໄດ້ດຳເນີນໄປ ລະຫວ່າງພະນັກ ງານຂອງແຂວງ ກ່ຽວກັບວິທີການສະໜັບສະໜູນເມືອງໃນການບໍລິ ຫານຄຸ້ມຄອງ PIP, ຄືເປັນສ່ວນນຶ່ງຂອງການຈັດຝຶກອົບຮົມ. ຫລາກຫລາຍວຽກປະຈຳວັນສຳລັບການນຳໃຊ້ໂຄງການ PIP ໃນຂົງເຂດສະເພາະຍັງໄດ້ມີການປຶກສາຫາລື ໂດຍໃຫ້ໂອກາດໃນການສຶກສາລັກສະນະພິເສດຂອງເມືອງໃນແຕ່ ລະແຂວງ. |
| 4-3 ພະນັກງານຂອງ MPI ຫລາຍກວ່າ 20 ຄົນ ແລະ ພະນັກງານຂອງກົມແຜນການຫລາຍກວ່າ 5 ຄົນ ໃນ | 1) ໃນທ້າຍເດືອນມັງກອນ 2011, ການຈັດຝຶກອົບຮົມໄດ້ເຮັດສຳເລັດ. ຈຳນວນພະນັກງານທີ່ໄດ້ຮັບການຝຶກອົບຮົມໃນແຜນວຽກການຈັດຝຶກ |

<table>
<tr><th>ຕົວຊີ້ວັດ</th><th>ຜົນສຳເລັດ</th></tr>
<tr><td>ແຕ່ລະແຂວງແມ່ນມີຄວາມສາມາດທັງຄຸ້ມຄອງໂຄງການ PIP ໂດຍສອດຄ່ອງກັບຄູ່ມືນຳໃຊ້ ແລະ ປື້ມຄູ່ມືທີ່ໄດ້ຖືກສ້າງຂຶ້ນ ຫລື ຍົກລະດັບໃໝ່ໆ ແລະ ການຈັດຝຶກອົບຮົມໃຫ້ແກ່ພະນັກງານຂອງແຂວງ ແລະ ເມືອງ ທີ່ກ່ຽວຂ້ອງ.<br><br>(ພະນັກງານຂອງກະຊວງແມ່ນບໍ່ໄດ້ມີສ່ວນຮ່ວມໂດຍກົງໃນການຄຸ້ມຄອງ PIP ຂັ້ນເມືອງ)</td><td>ອົບຮົມແມ່ນໄດ້ລະບຸໃນຕາຕະລາງລຸ່ມນີ້.<br>2) ປື້ມຄູ່ມື, ປື້ມແນະນຳ ແລະ ເອກະສານອົບຮົມ ໄດ້ຮັບການຍົກລະດັບກັບອົງປະກອບຍ່ອຍນີ້.<br>3) ຄວາມສາມາດຂອງພະນັກງານທີ່ໄດ້ຮັບຈາກການຝຶກອົບຮົມໄດ້ຖືກປະເມີນຜົນໃຫ້ພຽງພໍໂດຍການປະເມີນຜົນກ່ອນ ແລະ ຫລັງການກວດສອບຂອງການຈັດຝຶກອົບຮົມ. ນອກນັ້ນ, ພະນັກງານທີ່ໄດ້ຮັບການຝຶກອົບຮົມ TOTໄດ້ຈັດຕັ້ງຊູດຝຶກອົບຮົມອື່ນໆໃຫ້ແກ່ພະນັກງານຂອງພະແນກການຂັ້ນແຂວງ ແລະ ເມືອງ.<br><br><u>ຈຳນວນຜູ້ທີ່ໄດ້ຮັບການຝຶກຝົນໂດຍຜ່ານແຜນວຽກການຈັດຝຶກອົບຮົມ 2010-2011</u><br><table><tr><th>ແຜນວຽກການຈັດຝຶກອົບຮົມ</th><th>ຈຳນວນພະນັກງານທີ່ຖືກອົບຮົມ</th></tr><tr><td>TOT ສຳລັບ DPI</td><td>103</td></tr><tr><td>ເຈົ້າຂອງໂຄງການໃນບັນດາແຂວງ</td><td>811</td></tr><tr><td>ລວມທັງໝົດ</td><td>914</td></tr></table></td></tr>
</table>

ກິດຈະກຳທີ່ກ່ຽວຂ້ອງທັງໝົດໄດ້ຖືກເຮັດສຳເລັດ. ຕາຕະລາງຕໍ່ໄປນີ້ສັງລວມບັນທຶກຂອງບັນດາກິດຈະກຳ.

ຕາຕະລາງ 9 ບັນທຶກຂອງກິດຈະກຳ

| ກິດຈະກຳ | ການບັນທຶກ |
|---|---|
| 1. ສຶກສາຂັ້ນຕອນຂອງການຄຸ້ມຄອງ ທຶນສິນທົບ ODA, ການຄຸ້ມຄອງ PIP ຂັ້ນເມືອງ, ແລະ ການຄຸ້ມຄອງແຜນງານຕາມຂະແໜງການ. | [ສຳເລັດ]<br>ທີມງານຂອງໂຄງການ ໄດ້ແລກປ່ຽນຂໍ້ຄິດເຫັນກັບ ພະນັກງານໃນຫ້ອງການວາງແຜນຂອງເມືອງຢູ່ທີ່ແຂວງອຸດົມໄຊ ແລະ ສາລະວັນ ສຳລັບ ການສຶກສາຂັ້ນຕົ້ນ.<br><br>ໄດ້ວິໄຈ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຂັ້ນແຂວງ (DPIs ແລະ ພະແນກຂະແໜງການ) ເຊັ່ນດຽວກັບ ຂັ້ນເມືອງ (ຫ້ອງການວາງແຜນຂອງເມືອງ ແລະ ຫ້ອງການຂະແໜງການຂັ້ນເມືອງ) ໃນຂັ້ນຕອນການນຳໃຊ້ງົບປະມານຂອງ PIP ປະຈຳປີ .<br><br>ໄດ້ລະບຸ ບັນຫາທີ່ມີຢູ່ກ່ຽວກັບຂັ້ນຕອນການນຳໃຊ້ງົບປະມານ PIP ປະຈຳປີ ແລະ ໄດ້ວິໄຈຄວາມຈຳເປັນຂອງການນຳໃຊ້ມາດຕະການຕອບໂຕ້. |
| 2. ຍັ້ງຢືນຂັ້ນຕອນ ແລະ ຕາຕະລາງຂອງການຄຸ້ມຄອງທຶນສິນທົບ ODA ພາຍໃນປະເທດ, ການຄຸ້ມຄອງ PIP ໃນຂັ້ນເມືອງ ແລະ ການຄຸ້ມຄອງແຜນງານໃຫ້ສອດຄ່ອງກັບຂັ້ນຕອນການກຳນົດງົບປະມານປະຈຳປີ ແລະ ປະຕິທິນ, ເລີ່ມຕົ້ນກັບແຂວງອຸດົມໄຊ, ຄຳມ່ວນ ແລະ ສາຣາວັນ. | [ສຳເລັດ]<br>ງົບປະມານປະຈຳປີຂອງ PIP ໃນປະຈຸບັນ ຂໍໃຫ້ມີຂັ້ນຕອນສຳລັບທຶນສິນທົບ ODA, ໂຄງການຂັ້ນແຂວງ, ໂຄງການກຸ່ມບ້ານພັດທະນາ, ແລະ ໂຄງການ PIP ອື່ນໆທີ່ກ່ຽວຂ້ອງກັບການພັດ ທະນາທ້ອງຖິ່ນ ແມ່ນໄດ້ຮັບການຍັ້ງຢືນໃນສາມແຂວງ ເຊັ່ນດຽວກັນກັບ ພາຍໃນລັດຖະບານຂັ້ນສູນກາງ. |

| ກິດຈະກຳ | ການບັນທຶກ |
|---|---|
| 3. ຍົກລະດັບ "ຄູ່ມືການຄຸ້ມຄອງໂຄງການ PIP" ແລະ "ຄູ່ມືການຄຸ້ມຄອງແຜນງານ PIP" ໂດຍແນໃສ່ການຄຸ້ມຄອງທຶນສົມທົບໂຄງການ ODA, ການຄຸ້ມຄອງ PIP ຂັ້ນເມືອງ, ແລະ ການຄຸ້ມຄອງແຜນງານຕາມຂະແໜງການ. ພ້ອມນັ້ນ, ມີການສ້າງປື້ມແນະນຳກ່ຽວກັບບັນຫາເຫລົ່ານີ້. | [ສຳເລັດ]<br>ການຄຸ້ມຄອງ PIP ຂັ້ນເມືອງ ໂດຍແນໃສ່ຮູບສະແດງວຽກ ຂຶ້ນກັບແຫລ່ງງົບປະມານສະເພາະ ຊຶ່ງໄດ້ອະທິບາຍຢູ່ໃນປື້ມຄູ່ມື ແລະ ປື້ມແນະນຳ<br><br>ຮູບແບບການລາຍງານຊຸດໃໝ່; ບົດສະເໜີໂຄງການ I6, II6 ບົດລາຍງານຄວາມຄືບໜ້າ ແລະ II6 SPAS ໄດ້ຖືກສ້າງຂຶ້ນ ແລະ ນຳເອົາຮວມເຂົ້າໃນຄູ່ມືນຳໃຊ້.<br><br>ເນື້ອໃນຂອງຄູ່ມືນຳໃຊ້ດັ່ງກ່າວໄດ້ຮັບການປັບປຸງ ບົນພື້ນຖານ ຂອງຜົນຂອງການໃຫ້ເຫດຜົນ ແລະ ການປະເມີນຜົນການຈັດຝຶກອົບຮົມ.<br><br>ປື້ມແນະນຳສະບັບທີນຶ່ງສຳລັບການຄຸ້ມຄອງ PIP ຂັ້ນເມືອງ ແມ່ນໄດ້ຮັບການກະກຽມໃນເດືອນສິງຫາ 2010. |
| 4. ສ້າງ ແລະ ແຈກຢາຍ ຄູ່ມື ແລະ ປື້ມແນະນຳ ໃຫ້ແກ່ອົງກອນທີ່ກ່ຽວຂ້ອງທັງໝົດ. | [ສຳເລັດ]<br>1) ຄູ່ມືໂຄງການໄດ້ຮັບການຍົກລະດັບໃນເດືອນສິງຫາ 2009 ແລະ ຕໍ່ມາໄດ້ຮັບການປັບປຸງຕື່ມອີກໃນເດືອນສິງຫາ 2010 ຊຶ່ງກາຍເປັນສະບັບປັບປຸງ.<br>2) ປື້ມແນະນຳສຳລັບການຄຸ້ມຄອງໂຄງການຂັ້ນເມືອງໄດ້ຖືກກະກຽມໃນເດືອນສິງຫາ 2010 ແລະ ໄດ້ຖືກດັດແກ້ໃນເດືອນສິງຫາ 2011. |
| 5. ຊ່ວຍ MPI ດ້ວຍການສ້າງຫລັກສູດການຝຶກອົບຮົມ ແລະ ເອກະສານອົບຮົມ. | [ສຳເລັດ]<br>ເນື້ອໃນຂອງການຝຶກອົບຮົມຂອງການອົບຮົມພາກ II (2009/10) ໄດ້ຮັບການກະກຽມ ແລະ ຕໍ່ມາໄດ້ຖືກດັດແກ້ ເພື່ອການຈັດຝຶກອົບຮົມພາກ III (2010/11) ໂດຍມີການຮ່ວມມືກັນລະຫວ່າງຄູຝຶກຂອງ MPI ແລະ ຊ່ຽວຊານ JICA.<br>ຫລັກສູດການຝຶກອົບຮົມ, ເນື້ອໃນການຝຶກອົບຮົມ ແລະ ຄູ່ມືການຝຶກອົບຮົມ ໄດ້ຮັບການພັດທະນາຂຶ້ນມາ. |
| 6. ຊ່ວຍ MPI ໃນການຈັດຝຶກອົບຮົມ ແລະ ການປະຊຸມໃນຮູບແບບການປະຕິບັດການ ສຳລັບ ບັນດາແຂວງ ແລະ ກະຊວງທັງໝົດ (ຈັດຕັ້ງກິດຈະກຳນີ້ຮ່ວມກັບ 26). | [ສຳເລັດ]<br>ຂັ້ນຕອນການຄຸ້ມຄອງທັງໝົດຂອງການຈັດຝຶກອົບຮົມ ໂດຍຜ່ານການກະກຽມ, ການຈັດຕັ້ງປະຕິບັດ ແລະ ການປະເມີນຜົນ ໄດ້ເຮັດສຳເລັດ ໂດຍມີການຮ່ວມມືກັນລະຫວ່າງພະນັກງານ ຄູ່ຮ່ວມພັດທະນາໃນ MPI ແລະ ຊ່ຽວຊານ JICA. |
| 7. ຊ່ວຍ MPI ຈັດ OJT ໃຫ້ແກ່ບັນດາແຂວງ ແລະ ກະຊວງທັງໝົດ. | [ສຳເລັດ]<br>ພະນັກງານຄູ່ຮ່ວມພັດທະນາໃນ MPI ໄດ້ຈັດຕັ້ງ OJT ທີ່ມີການຊ່ວຍເຫລືອຈາກຊ່ຽວຊານ JICA ແລະ ພະນັກງານທ້ອງຖິ່ນຂອງໂຄງການ PCAP2 ໃນທົ່ວປະເທດຈາກເດືອນມີນາ ຫາ ເມສາ 2010. |
| 9. ຊ່ວຍ MPI ດ້ວຍການດັດແກ້ປື້ມຄູ່ມື ແລະ ປື້ມແນະນຳບົນພື້ນຖານຂອງຄຳເຫັນຈາກບັນດາກິດຈະກຳ. | [ສຳເລັດ]<br>ພະນັກງານຄູ່ຮ່ວມພັດທະນາໃນ MPI ຮ່ວມກັບ ຊ່ຽວຊານ JICA ໄດ້ |

| ກິດຈະກຳ | ການບັນທຶກ |
| --- | --- |
|  | ປັບປຸງຄູ່ມືນຳໃຊ້ ແລະ ປຶ້ມຄູ່ມື ບົນພື້ນຖານຄຳຄິດເຫັນຂອງບົດລາຍງານການປະເມີນຜົນການຝຶກອົບຮົມພາກ III. |

(4) ການຄຸ້ມຄອງແຜນວຽກຂະແໜງການ

ຕົວຊີ້ວັດທີ່ກ່ຽວຂ້ອງກັບແຜນວຽກຂະແໜງການທັງໝົດໄດ້ບັນລຸຜົນສຳເລັດໃນເວລາທີ່ໂຄງການ PCAP2 ສິ້ນສຸດລົງ. ລາຍລະອຽດຂອງຜົນສຳເລັດໄດ້ສະແດງໃຫ້ເຫັນໃນຕາຕະລາງຕໍ່ໄປນີ້.

ຕາຕະລາງ 10 ຜົນສຳເລັດຂອງການຄຸ້ມຄອງແຜນວຽກຂະແໜງການ

<table>
<tr><th>ຕົວຊີ້ວັດ</th><th>ຜົນສຳເລັດ</th></tr>
<tr><td>4-2 ຄູ່ມືນຳໃຊ້ແຜນວຽກໄດ້ຮັບການຍົກລະດັບ, ປັບປຸງ ແລະ ແຈກຢາຍໃຫ້ແກ່ພະນັກງານລັດທີ່ກ່ຽວຂ້ອງກັບການຄຸ້ມຄອງ PIP ທັງໝົດ.</td><td>ຄູ່ມືນຳໃຊ້ແຜນວຽກໄດ້ຖືກດັດແກ້ໂດຍການລວມເອົາບັນດາກໍລະນີຂອງເຄື່ອງມືຂອງແຜນວຽກ ແລະ ສິ່ງທ້າທາຍໃນການຄຸ້ມຄອງແຜນວຽກຂະແໜງການ.</td></tr>
<tr><td>4-3 ພະນັກງານ MPI ຫລາຍກວ່າ 20 ຄົນ ແລະ ພະນັກງານຂອງພະແນກແຜນການໃນແຕ່ລະແຂວງ, ກະຊວງ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງອື່ນໆ ຫລາຍກວ່າ 5 ຄົນ ແມ່ນມີຂີດຄວາມສາມາດທັງທີ່ຈະຄຸ້ມຄອງ PIP ໃຫ້ສອດຄ່ອງກັບຄູ່ມືນຳໃຊ້ ແລະ ປຶ້ມຄູ່ມື ທີ່ໄດ້ຮັບການພັດທະນາ ຫລື ຍົກລະດັບໃໝ່. ການຝຶກອົບຮົມຂອງພະນັກງານທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງແມ່ນດຳເນີນໄປ.</td><td>1) ໃນທ້າຍເດືອນມັງກອນ 2011, ການຝຶກອົບຮົມໄດ້ເຮັດສຳເລັດ. ຈຳນວນພະນັກງານທີ່ໄດ້ຮັບການຝຶກອົບຮົມໃນແຜນວຽກການຝຶກອົບຮົມໄດ້ລະບຸໃນຕາຕະລາງລຸ່ມນີ້.<br>2) ຄູ່ມືນຳໃຊ້ ແລະ ເອກະສານອົບຮົມໄດ້ຮັບການຍົກລະດັບກັບອົງປະກອບຍ່ອຍນີ້.<br>3) ຂີດຄວາມສາມາດຂອງພະນັກງານທີ່ໄດ້ຮັບການຝຶກອົບຮົມໄດ້ຖືກປະເມີນຜົນເພື່ອໃຫ້ພຽງພໍກັບການປະເມີນຜົນການຝຶກອົບຮົມກ່ອນ ແລະ ຫລັງການກວດສອບ.<br>4) ພະນັກງານທີ່ໄດ້ຮັບການອົບຮົມ TOT ໄດ້ຈັດຕັ້ງການຝຶກອົບຮົມຊຸດອື່ນໆໃຫ້ແກ່ພະນັກງານຂອງພະແນກການຂັ້ນແຂວງ ແລະ ເມືອງ.<br><br>ຈຳນວນຜູ້ໄດ້ຮັບການອົບຮົມໂດຍຜ່ານແຜນວຽກການຝຶກອົບຮົມ 2010 2011
<table>
<tr><th>ແຜນວຽກການຝຶກອົບຮົມ</th><th>ຈຳນວນພະນັກງານທີ່ໄດ້ຮັບການອົບຮົມ</th></tr>
<tr><td>TOT ສຳລັບ DPI</td><td>103</td></tr>
<tr><td>TOT ສຳລັດ ບັນດາກະຊວງ</td><td>35</td></tr>
<tr><td>ເຈົ້າຂອງໂຄງການໃນບັນດາແຂວງ</td><td>811</td></tr>
<tr><td>ລວມທັງໝົດ</td><td>949</td></tr>
</table></td></tr>
</table>

ບັນດາກິດຈະກຳທັງໝົດເພື່ອບັນລຸການຄຸ້ມຄອງແຜນວຽກຂະແໜງການໄດ້ເຮັດສຳເລັດ. ຕາຕະ ລາງຕໍ່ໄປນີ້ສັງລວມການບັນທຶກບັນດາກິດຈະກຳ. ບັນດາຊຸດອົບຮົມໃນປີທີສອງ ແລະ ສາມ ໄດ້ເນັ້ນໃສ່ນຳສະເໜີກໍລະນີສຶກສາຂອງເຄື່ອງມືແຜນວຽກໃນສາມແຂວງເປົ້າຄຸ້ມຄອງ. ການຝຶກອົບຮົມປີທີສີ່ຕໍ່ມາໄດ້ເນັ້ນໜັກການໃຫ້ບົດຮຽນທີ່ເປັນປະໂຫຍດໃນການກະກຽມແຜນພັດທະນາຫ້າປີຕໍ່ໄປຢູ່ໃນອົງການຈັດຕັ້ງຂອງລັດທີ່

ກ່ຽວຂ້ອງ.

ຕາຕະລາງ 11 ການບັນທຶກບັນດາກິດຈະກຳ

| ກິດຈະກິດ | ການບັນທຶກ |
|---|---|
| 1. ສຶກສາຂັ້ນຕອນຂອງການຄຸ້ມຄອງທຶນສິນທິບ ODA, ການຄຸ້ມຄອງ PIP ຂັ້ນເມືອງ ແລະ ການຄຸ້ມຄອງແຜນງານຂອງຂະແໜງການ. | [ສຳເລັດ]<br>ແຜນພັດທະນາແຫ່ງຊາດຫ້າປີ, ແຜນພັດທະນາຮູບແບບຂະແໜງການ, ແຜນພັດທະນາຂະແໜງການກວ້າງສຳລັບ ສາມແຂວງເປົ້າຄວບຄຸມ, ແລະ ແຜນປະຕິບັດງານຂອງແຜນການແຫ່ງຊາດແມ່ນ ໄດ້ຮັບການວິໄຈ ເພື່ອສ້າງໂຄງຮ່າງ. |
| 2. ຍັ້ງຢືນຂັ້ນຕອນ ແລະ ຕາຕະລາງຂອງການຄຸ້ມຄອງທຶນສິນທິບ ODA , ການຄຸ້ມຄອງ PIP ຂັ້ນເມືອງ ແລະ ການຄຸ້ມຄອງແຜນງານຂອງຂະແໜງການ. ໂດຍສອດຄ່ອງກັບຂັ້ນຕອນການສ້າງງົບປະມານປະຈຳປີ ແລະ ປະຕິທິນ ຊຶ່ງເລີ່ມຈາກແຂວງອຸດົມໄຊ, ຄຳມ່ວນ, ແລະ ສາລະວັນ. | [ສຳເລັດ]<br>1) ການສຶກສາຂັ້ນຕົ້ນແມ່ນໄດ້ຖືກຈັດຕັ້ງເພື່ອໃຈ້ແຍກຮູບແບບຂະແໜງການ<br>2) ການວິໄຈໂຄງຮ່າງຂອງແຜນການ ພັດທະນາຫ້າປີໃນປະຈຸບັນຂອງຮູບແບບຂະແໜງການໃນສາມແຂວງເປົ້າຄວບຄຸມໄດ້ຮັບການຈັດຕັ້ງ.<br>3) ຕົວຢ່າງກໍລະນີສຶກສາຂອງເຄື່ອງມືແຜນວຽກຂອງຮູບແບບຂະແໜງການໃນສາມແຂວງເປົ້າຕິດຕາມໄດ້ຮັບການຈັດຕັ້ງ.<br>4) ບັນຫາກ່ຽວກັບແຜນພັດທະນາໄດ້ຖືກໃຈ້ແຍກໂດຍການວິໄຈທີ່ກ່າວມາຂ້າງເທິງນັ້ນ. |
| 3. ຍົກລະດັບ "ຄູ່ມືນຳຄຸ້ມຄອງໂຄງການ PIP" ແລະ "ຄູ່ມືການຄຸ້ມຄອງແຜນງານ PIP" ໂດຍແນໃສ່ການຄຸ້ມຄອງທຶນສິນທິບ ODA, ການຄຸ້ມຄອງ PIP ຂັ້ນເມືອງ, ແລະ ການຄຸ້ມຄອງແຜນງານຂອງຂະແໜງການ. ພ້ອມນັ້ນ, ຍັງສ້າງປຶ້ມຄູ່ມືກ່ຽວກັບບັນຫາເຫລົ່ານີ້. | [ສຳເລັດ]<br>1) ເຄື່ອງມືແຜນວຽກ ແລະ ສິ່ງທ້າທາຍໄດ້ຖືກລວມເຂົ້າໃນຄູ່ມືແຜນວຽກ ຄືດັ່ງທີ່ໄດ້ຮັບການດັດແກ້ໃນໄລຍະທີສອງ.<br>2) ຄູ່ມືນຳໃຊ້ໄດ້ຖືກປັບປຸງການຮ່ວມເອົາຜົນຂອງການປະເມີນຜົນການຝຶກອົບຮົມຈາກໄລຍະທີສາມ.<br>3) ປຶ້ມຄູ່ມືໄດ້ຮັບການກະກຽມໃນເດືອນສິງຫາ, 2010 ຂອງໄລຍະທີສາມ. |
| 4 ສ້າງແລະ ແຈກຢາຍຄູ່ມືນຳໃຊ້ ແລະ ປຶ້ມຄູ່ມືໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງທັງໝົດ (ຈັດຕັ້ງກິດຈະກຳນີ້ກັບ 24). | [ສຳເລັດ]<br>1) ຄູ່ມືນຳໃຊ້ແຜນວຽກໄດ້ຖືກຍົກລະດັບໃນໄລຍະທີສອງ, ແລະ ໄດ້ຖືກປັບປຸງພາຍຫລັງການຝຶກອົບຮົມໄລຍະທີສາມ.<br>2) ປຶ້ມຄູ່ມືໄດ້ຖືກກະກຽມ ແລະ ແຈກຢາຍໃນໄລຍະທີສາມ, ແລະ ຕໍ່ມາພວກມັນໄດ້ຖືກຍົກລະດັບ ແລະ ຖືກແຈກຢາຍພາຍຫລັງການຝຶກອົບຮົມຂອງໄລຍະທີສີ່. |
| 5 ຊ່ວຍ MPI ໂດຍການສ້າງຫລັກສູດການຝຶກອົບຮົມ ແລະ ເອກະສານອົບຮົມ (ຈັດຕັ້ງກິດຈະກຳນີ້ພ້ອມກັບ 25). | [ສຳເລັດ]<br>ຫລັກສູດການຝຶກອົບຮົມ, ເນື້ອໃນ ແລະ ຄູ່ມືການຝຶກອົບຮົມໄດ້ຖືກສ້າງຂຶ້ນໂດຍຜ່ານການປະສານງານລະຫວ່າງພະນັກງານຄູ່ຮ່ວມພັດທະນາຂອງ MPI ແລະ ຊ່ຽວຊານ. |
| 6 ຊ່ວຍ MPI ໂດຍການຈັດຝຶກອົບຮົມ ແລະ ກອງປະຊຸມແບບປະຕິບັດການສຳລັບບັນດາແຂວງ ແລະ ກະຊວງທັງໝົດ (ຈັດຕັ້ງກິດຈະກຳນີ້ຮ່ວມກັບ 26). | [ສຳເລັດ]<br>ຂັ້ນຕອນການຄຸ້ມຄອງການຝຶກອົບຮົມທັງໝົດ, ຫລື ເວົ້າອີກຢ່າງນຶ່ງວ່າການກະກຽມ, ການຈັດຕັ້ງປະຕິບັດ ແລະ ການປະເມີນຜົນ ໄດ້ຖືກແບ່ງປັນໂດຍພະນັກງານຄູ່ຮ່ວມພັດທະນາຂອງ MPI ແລະ ຊ່ຽວຊານ JICA. |
| 7 ຊ່ວຍ MPI ໂດຍການຈັດ OJT ໃຫ້ແກ່ບັນດາແຂວງ ແລະ | [ສຳເລັດ] |

| ກິດຈະກິດ | ການບັນທຶກ |
|---|---|
| ກະຊວງທັງໝົດ (ຈັດຕັ້ງກິດຈະກຳນີ້ຮ່ວມກັບ 27). | ພະນັກງານຄູ່ຮ່ວມພັດທະນາຈາກ MPI ໄດ້ຈັດຕັ້ງຊຸດ ຝຶກອົບຮົມຂອງ OJT ກັບຊ່ຽວຊານ JICA ແລະ ພະນັກງານທ້ອງຖິ່ນຈາກເດືອນມີນາ ຫາ ເມສາ 2010. |
| 8 ຊ່ວຍ MPI ຈັດການປະເມີນຜົນຕໍ່ສຳລັບໂຄງການ PIP ໄດ້ ປະເມີນ ແລະ ປະເມີນຜົນ, ແລະ ມີຕົວຊີ້ວັດການຕິດຕາມ ໃນແຜນວຽກຂະແໜງການ. | [ສຳເລັດ]<br>ການປະເມີນຜົນຕໍ່ໄດ້ຖືກດຳເນີນໃນທຸກໆປີນັບແຕ່ເດືອນກໍລະກົດ 2010. ຕົວຊີ້ວັດທີ່ຖືກຕິດຕາມໃນການປະເມີນຜົນທີ່ຖືກນຳໃຊ້ໃນການຝຶກອົບຮົມປີຕໍ່ໄປ. |
| 9 ຊ່ວຍ MPI ໂດຍການດັດແກ້ຄູ່ມືນຳໃຊ້ແລະ ປື້ມຄູ່ມື ບົນ ພື້ນຖານຂອງຄຳຄິດເຫັນຈາກກິດຈະກຳ 46 ແລະ 47 (ຈັດ ຕັ້ງກິດຈະກຳນີ້ຮ່ວມກັບ 29). | [ສຳເລັດ]<br>ພະນັກງານຄູ່ຮ່ວມພັດທະນາຈາກ MPI ໄດ້ປັບປຸງຄູ່ມືນຳໃຊ້ແຜນວຽກ ໂດຍໄດ້ຮັບການຊ່ວຍເຫລືອຈາກຊ່ຽວຊານ JICA ບົນພື້ນຖານຂອງຄຳຄິດເຫັນຈາກການສຶກສາປະເມີນຜົນການຝຶກອົບຮົມທີ່ຖືກດຳເນີນພາຍໃນໄລຍະທີສາມ. |

## 3.5 ການປະຊຸມຄະນະກຳມະການປະສານງານຮ່ວມ ແລະ ການສຳມະນາ

PCAP2 ໄດ້ດຳເນີນສອງກອງປະຊຸມພົບປະຂອງຄະນະກຳມະການປະສານງານຮ່ວມໃນທຸກໆປີ. ໂຄງການດັ່ງກ່າວຍັງໄດ້ດຳເນີນ ລາຍການປະຊຸມສຳມະນາໄລຍະກາງ ໃນຂອບເຂດທົ່ວປະເທດ ໃນລະ ຫວ່າງເດືອນພະຈິກ ຫາ ທັນວາ 2009 ເພື່ອອະທິບາຍຄວາມຄືບໜ້າຂອງໂຄງການ. ມັນວາງແຜນເພື່ອດຳເນີນການສຳມະນາຊຸດສຸດທ້າຍ ພາຍໃຕ້ຫົວຂໍ້ “ກອງປະຊຸມມ້ວນທ້າຍໂຄງການ PCAP2” ທີ່ຈັດຂຶ້ນໃນວັນທີ 24 ສິງຫາ 2011. ສອງບົດຍ່ອຍຕໍ່ໄປນີ້ອະທິບາຍລາຍລະອຽດຂອງກອງປະຊຸມ ແລະ ສຳມະນາຂອງ JCC.

### (1) ກອງປະຊຸມຄະນະກຳມະການປະສານງານຮ່ວມ (JCC)

PCAP2 ໄດ້ດຳເນີນກອງປະຊຸມ JCC ຫົກຄັ້ງ, ແລະ ກຳລັງວາງແຜນເພື່ອຈັດກອງປະຊຸມພົບປະຄັ້ງທີເຈັດ ແລະ ເປັນຄັ້ງສຸດທ້າຍໃນວັນທີ 24 ສິງຫາ 2011. ຕໍ່ໄປນີ້ແມ່ນຊີ້ໃຫ້ເຫັນເນື້ອໃນຂອງແຕ່ລະການ ພົບປະ ພ້ອມກັບ ແຜນການສຳເລັດການພົບປະຄັ້ງສຸດທ້າຍ.

< ກອງປະຊຸມພົບປະ JCC ຄັ້ງທີນຶ່ງ >

| |
|---|
| ວັນທີ: 21 ເມສາ 2008 |
| ສະຖານທີ່: ສູນການຝຶກອົບຮົມການຮ່ວມມືສາກົນ, ນະຄອນຫລວງວຽງຈັນ |
| ຜູ້ເຂົ້າຮ່ວມ: 37 ລວມມີ;<br>ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍວ່າການຂອງMPI<br>ທ່ານ. ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPIDOE<br>ທ່ານ. ກອຍຈິ ຕາເກັນ, ຮອງຜູ້ຕາງໜ້າຂອງອົງການ JICA ປະຈຳສປປ ລາວ<br>ສະມາຊິກ PCAP2 ຈາກ MPIDOE, MPIDOP ແລະ MPIDIC<br>ຜູ້ຕາງໜ້າຈາກແຂວງອຸດົມໄຊ, ຄຳມ່ວນ ແລະ ສາຣາວັນ |

ເນື້ອໃນຂອງກອງປະຊຸມ:

- ກ່າວເປີດໂດຍ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI ແລະ ຫົວໜ້າໂຄງການ PCAP2
- ການນຳສະເໜີກ່ຽວກັບຜົນໄດ້ຮັບຂອງໂຄງການ PCAP1 ແລະ ເນື້ອໃນຂອງ PCAP2 ໂດຍທ່ານ ອຸ່ນເຮືອນ ຈິດຕາພົງ, ຮອງຫົວໜ້າກົມຂອງ MPIDOP
- ການນຳສະໜີຂອງການດຳເນີນງານຂອງແຜນການຫ້າປີ ໂດຍທ່ານ. ພູຂົງ ບັນຍາວົງ, ຮອງຫົວໜ້າກົມຂອງ MPIDOE
- ພາກຖາມ&ຕອບ ເປັນປະທານໂດຍ ທ່ານ ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPIDOE
- ປິດກ່າວໂດຍທ່ານ. ກອຍຈິ ຕາກາຍ, ຮອງຜູ້ຕາງໜ້າອົງການ JICA ປະຈຳ ສປປ ລາວ

ການສະຫລຸບ ແລະ ບັນຫາທີ່ຕ້ອງຕິດຕາມ:

- ເປັນເອກະພາບກ່ຽວກັບເນື້ອໃນ ແລະ ກິດຈະກຳຂອງ PCAP2.
- ກອງປະຊຸມພົບປະຄັ້ງລິເລີ່ມໄດ້ເຊີນຜູ້ຕາງໜ້າຈາກບັນດາກະຊວງ ແລະ ຜູ້ໃຫ້ທຶນຊ່ວຍເຫລືອ ແມ່ນໄດ້ຈັດຂຶ້ນໃນພາກເຊົ້າ.

## < ກອງປະຊຸມພົບປະ JCC ຄັ້ງທີສອງ >

ວັນທີ: 10 ມີນາ 2009

ສະຖານທີ່: ຫ້ອງປະຊຸມຊັ້ນທີນຶ່ງຂອງ MPI

ຜູ້ເຂົ້າຮ່ວມ: 37 ລວມມີ;
ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI
ທ່ານ. ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPIDOE
ທ່ານ. ກອຍຈິ ຕາກາຍ, ຮອງຜູ້ຕາງໜ້າອົງການ JICA ປະຈຳສປປ ລາວ
ສະມາຊິກຂອງ PCAP2 ແລະ ພະນັກງານຄູ່ຮ່ວມພັດທະນາຈາກ MPIDOE, MPIDOP ແລະ MPIDIC
ຜູ້ຕາງໜ້າຈາກສະຖານທູດຍີ່ປຸ່ນ ເປັນຜູ້ສັງເກດການ

ເນື້ອໃນຂອງກອງປະຊຸມ:

- ກ່າວເປີດໂດຍ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI ແລະ ຫົວໜ້າໂຄງການ PCAP2
- ການຝຶກອົບຮົມກ່ຽວກັບການຄຸ້ມຄອງ PIP ທົ່ວປະເທດ ແລະ ຜົນຂອງ OJT, ໂດຍ ທ່ານ. ເພັດອຳພອນ ທອມບູນ,  MPI DOE
- ຄວາມຄືບໜ້າໃນການພັດທະນາຂອງຂັ້ນຕອນ ແລະ ວິທີການໃໝ່ສຳລັບການຄຸ້ມຄອງ PIP, ໂດຍທ່ານ. ອິຊິໂຣ ໂອກຸມຸຣາ, ຫົວໜ້າທີ່ປຶກສາຂອງໂຄງການ PCAP2
- ກິດຈະກຳທີ່ຈະມາເຖິງແລະ ຮ່າງເນື້ອໃນຂອງຄູ່ມືນຳໃຊ້ ແລະ ປຶ້ມຄູ່ມື, ໂດຍທ່ານ. ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPI DOE
- ປົດສະເໜີກ່ຽວກັບເປົ້າໝາຍຕົວຊີ້ວັດໂດຍລວມ ແລະ ຂອບເຂດຂອງມັນ, ໂດຍທ່ານ. ອິຈິໂຣ ໂອກູມູຣາ
- ພາກຖາມ&ຕອບ ນຳໂດຍ ດຣ. ບູນທະວີ ສີສຸພັນທອງ
- ປົດກ່າວໂດຍ ທ່ານ. ກອຍຈິ ຕາກາຍ, ຮອງຜູ້ຕາງໜ້າອົງການ JICA ປະຈຳສປປ ລາວ
- ການມອບລົດເມນ້ອຍຂອງອົງການ JICA
- ກ່າວປິດໂດຍ ດຣ. ບຸນທະວີ ສີສຸພັນທອງ

ການສະຫລຸດ ແລະ ບັນຫາທີ່ຕ້ອງໄດ້ຕິດຕາມ:

- ເປັນເອກະພາບຕໍ່ເນື້ອໃນ ແລະ ກິດຈະກຳຂອງໂຄງການ PCAP2.
- ລົດເມນ້ອຍຂອງ JICA ໄດ້ຖືກນຳສະເໜີຕໍ່ MPI ເພື່ອໃຫ້ນຳໃຊ້ເຂົ້າໃນການຝຶກອົບຮົມການຄຸ້ມຄອງ PIP ຢູ່ບັນດາແຂວງ.

## < ກອງປະຊຸມພົບປະ JCC ຄັ້ງທີສາມ >

ວັນທີ: 31 ສິງຫາ 2009

ສະຖານທີ່: ຫ້ອງປະຊຸມໂຮງແຮມໂນໂວແທວ

ຜູ້ເຂົ້າຮ່ວມ: 37 ລວມມີ;
ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI
ທ່ານ. ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPIDOE
ທ່ານ. ກອຍຈິ ຕາກາຍ, ຮອງຜູ້ຕາງໜ້າອົງການ JICA ປະຈຳສປປ ລາວ
ສະມາຊິກຂອງ PCAP2 ແລະ ພະນັກງານຄູ່ຮ່ວມພັດທະນາຈາກ MPIDOE, MPIDOP ແລະ MPIDIC
ຜູ້ຕາງໜ້າຈາກສະຖານທູດຍີ່ປຸ່ນ ເປັນຜູ້ສັງເກດການ

ເນື້ອໃນຂອງກອງປະຊຸມ:

- ກ່າວເປີດໂດຍ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI ແລະ ຫົວໜ້າໂຄງການ PCAP2
- ການນຳສະເໜີກ່ຽວກັບຄູ່ມືນຳໃຊ້ ແລະ ປື້ມຄູ່ມືໃໝ່, ໂດຍທ່ານ. ອິຊິໂຣ ໂອກຸມຸຣາ, ຫົວໜ້າທີ່ປຶກສາຂອງໂຄງການ PCAP2
- ການນຳສະເໜີກ່ຽວກັບການຝຶກອົບຮົມການຄຸ້ມຄອງ PIP ຄັ້ງທີສອງທົ່ວປະເທດ, ໂດຍ ທ່ານ. ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPIDOE
- ບົດກ່າວໂດຍທ່ານ. ກອຍຈິ ຕາກາຍ, ຮອງຜູ້ຕາງໜ້າອົງການ JICA ປະຈຳ ສປປ ລາວ
- ກ່າວປິດໂດຍ ດຣ. ບຸນທະວີ ສີສຸພັນທອງ

ການສະຫລຸບ ແລະ ບັນຫາທີ່ຕ້ອງໄດ້ຕິດຕາມ:

- ເປັນເອກະພາບກ່ຽວກັບຄູ່ມືນຳໃຊ້ PCAP2 ແລະ ທິດທາງຂອງປື້ມຄູ່ມື, ໄປພ້ອມກັບແຜນການສຳລັບການຝຶກອົບຮົມການຄຸ້ມຄອງ PIP ຄັ້ງທີສອງ ໃນຂອບເຂດທົ່ວປະເທດ.
- ດຣ. ບຸນທະວີ ໄດ້ປະກາດໃນບົດກ່າວເປີດ ແລະ ປິດວ່າ ບັນດາກິດຈະກຳຂອງໂຄງການ PCAP2 ແລະ ຜົນແມ່ນໄດ້ຖືກຢືນຢັນ ແລະ ອະນຸມັດ. ທ່ານໄດ້ສະແດງຄວາມຊົມເຊີຍຕໍ່ທີມ MPI-PCAP2 ທີ່ໄດ້ເຮັດສຳເລັດຄູ່ມືນຳໃຊ້ ທີ່ຮວມເອົາວິທີການ ແລະ ເຄື່ອງມືໃໝ່ ແລະ ທີ່ໄດ້ຮັບການຍົກລະດັບ ທີ່ຈະປັບປຸງການຄຸ້ມຄອງ PIP ອີກຕື່ມໃນອະນາຄົດ. ທ່ານຍັງໄດ້ໃຫ້ຂໍ້ສັງເກດຕໍ່ກັບຜົນການປະເມີນການຝຶກອົບຮົມ ແລະ ໄດ້ຊີ້ນຳໃຫ້ສືບຕໍ່ຮອບວຽນການຝຶກອົບຮົມ ຈົນຮອດຊຸດຝຶກອົບຮົມໃໝ່ໃນຂອບເຂດທົ່ວປະເທດ ທີ່ໄດ້ຖືກວາງແຜນໃຫ້ເລີ່ມຕົ້ນໃນເດືອນພະຈິກ 2009.
- ທ່ານ. ທາກາຊິມາໄດ້ຢັ້ງຢືນວິທີການ ແລະ ກິດຈະກຳທີ່ຖືກດຳເນີນຮ່ວມກັນໂດຍ PCAP2 ແລະ MPI, ແລະ ໄດ້ຂອບໃຈ MPI ສຳລັບ ຄວາມພະຍາຍາມເພື່ອບັນລຸຜົນການຝຶກອົບຮົມທົ່ວປະເທດ ຢ່າງປະສົບຜົນສຳເລັດ ໃນໄລຍະການກະກຽມກອງທຶນ PIP ປະຈຳສົກປີ 2008/2009. ທ່ານຄາດຫວັງວ່າ ຮ່າງຄູ່ມືນຳໃຊ້ ໄປພ້ອມກັບ ຊຸດຝຶກອົບຮົມໃໝ່ຈະຊ່ວຍພະນັກງານໃນແຂວງ ແລະ ກະຊວງຕື່ມອີກ ເພື່ອໃຫ້ມີການຄຸ້ມຄອງໂຄງການ PIP ໃຫ້ດີຂຶ້ນກວ່າເກົ່າ. ທ່ານໄດ້ເຫັນດີກັບວິທີການຂອງ PCAP2 ແລະ MPI ໃນຄວາມພະຍາຍາມຮວມເອົາກົມຈັດຕັ້ງ ແລະ ພະນັກງານ (MPI-DoOP), ໃນການຊອກຫາຄວາມຍືນຍົງ ແລະ ຄວາມເຂັ້ມແຂງຕື່ມອີກຂອງຂີດຄວາມສາມາດໃຫ້ແກ່ພະນັກງານໃນການຄຸ້ມຄອງໂຄງການ PIP.
- ບໍ່ມີຄຳເຫັນ ຫລື ຄຳຖາມ ຫລັກໃດທີ່ຖືກຍົກຂຶ້ນຈາກຜູ້ເຂົ້າຮ່ວມ, ແລະ ການພົບປະໄດ້ຈົບລົງໃນເວລາ 10:30 ໂມງ.

## < ກອງປະຊຸມພົບປະ JCC ຄັ້ງທີສີ່ >

ວັນທີ: 31 ມີນາ 2010

ສະຖານທີ່: ຫ້ອງປະຊຸມໂຮງແຮມລາວພລາຊາ

ຜູ້ເຂົ້າຮ່ວມ: 41 ລວມມີ;
ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI
ທ່ານ. ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPIDOE
ທ່ານ. ມາສາໂຕ ໂຕກາວາ, ຫົວໜ້າຜູ້ຕາງໜ້າອົງການ JICA ປະຈຳ ສປປ ລາວ
ຜູ້ຕາງໜ້າຈາກກະຊວງການເງິນ
ສະມາຊິກຂອງ PCAP2 ແລະ ພະນັກງານຄູ່ຮ່ວມພັດທະນາຈາກ MPI-DOE, MPI-DOP ແລະ MPI-DIC

ເນື້ອໃນຂອງການພົບປະ:

- ກ່າວເປີດໂດຍ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI ແລະ ຫົວໜ້າໂຄງການ PCAP2

- ການນຳສະເໜີຂອງກົດໝາຍການລົງທຶນຂອງລັດສະບັບໃໝ່, ໂດຍທ່ານ. ພູຊົງ ບັນນາວົງ, ຮອງຫົວໜ້າກົມຂອງ MPI-DOE
- ການນຳສະເໜີກ່ຽວກັບຜົນຂອງການຝຶກອົບຮົມການຄຸ້ມຄອງ PIP ຄັ້ງທີສອງທົ່ວປະເທດ, ໂດຍທ່ານ. ວິໄຊ ຊາວວັນນາ, ຫົວໜ້າກົມຂອງ MPI-DOE
- ການນຳສະເໜີຜົນຂອງການຝຶກອົບຮົມການຄຸ້ມຄອງດ້ານການເງິນຂອງໂຄງການ PIP, ໂດຍທ່ານ. ອຸ່ນເຮືອນ ຈິດຕາພອນ, ຮອງຫົວໜ້າພະແນກຂອງ MPI-DOP
- ການນຳສະເໜີກ່ຽວກັບການພັດທະນາວິທີການຄຸ້ມຄອງການແຈກຢາຍງົບປະມານ ODA ພາຍໃນປະເທດ, ໂດຍທ່ານ. ຄຳໄພ ວິໄລທົງ, ຮອງຫົວໜ້າພະແນກປະສິດທິຜົນຂອງທຶນຊ່ວຍເຫລືອລ້າ, MPI-DIC
- ການນຳສະເໜີກ່ຽວກັບການທົບທວນໄລຍະກາງ ແລະ ເຫດການທີ່ຈະມາເຖິງ ສຳລັບ ເດືອນເມສາສິງຫາ 2010, ໂດຍທ່ານ. ອິຊິໂຣ ໂອກູມູຣາ, ຫົວໜ້າທີ່ປຶກສາຂອງ PCAP2
- ບົດກ່າວໂດຍທ່ານ. ມາສາໂຕ ໂຕກາວາ, ຫົວໜ້າຫ້ອງການຜູ້ຕາງໜ້າອົງການ JICA ປະຈຳ ສປປ ລາວ
- ກ່າວປິດໂດຍທ່ານ. ວິໄຊ ຊາວວັນນາ

ການສະຫລຸບ ແລະ ບັນຫາທີ່ຕ້ອງໄດ້ຕິດຕາມ:

- ແບ່ງປັນຜົນກ່ຽວກັບຊຸດການຝຶກອົບຮົມ, ວິທີການຂອງການການແຈກຢາຍງົບປະມານ ODA ພາຍໃນປະເທດ ແລະ ແຜນກິດຈະກຳສຳລັບເດືອນເມສາສິງຫາ 2010.
- ດຣ. ບຸນທະວີ ໄດ້ປະກາດ, ໃນຂະນະແລກປ່ຽນຜົນສຳເລັດຂອງການປະກາດໃຊ້ກົດໝາຍການລົງທຶນຂອງລັດ, ໄດ້ເນັ້ນເຖິງຄວາມສຳຄັນຂອງການບັງຄັບໃຊ້ກົດໝາຍດັ່ງກ່າວ, ແລະ ຄາດຫວັງວ່າ MPI ແລະ PCAP2 ຮ່ວມກັນພະຍາຍາມໃນການເຜີຍແຜ່ ໄປພ້ອມໆກັບ ຂັ້ນຕອນ ແລະ ວິທີການທີ່ສະໜັບສະໜູນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ. ທ່ານໄດ້ສະຫລຸບໂດຍການຊົມເຊີຍການເຮັດວຽກໜັກຂອງ MPI ໃນໄລຍະຊຸດຝຶກອົບຮົມ, ແລະ ຂອບໃຈຫ້ອງການອົງການ JICA ປະຈຳ ສປປ ລາວ ແລະ ສະມາຊິກ PCAP2 ສຳລັບ ການສະໜັບສະໜູນຢ່າງແຂງແຮງຂອງພວກເຂົາ.
- ທ່ານ. ໂຕກາວາ ໄດ້ຢືນຢັນວິທີການ ແລະ ກິດຈະກຳທີ່ໄດ້ຈັດຕັ້ງຮ່ວມກັນໂດຍ PCAP2 ແລະ MPI, ແລະ ໄດ້ຂອບໃຈ MPI ສຳລັບ ການອຸທິດໃຫ້ໂຄງການດັ່ງກ່າວ. ທ່ານໄດ້ເຊື່ອໝັ້ນວ່າ ກົດໝາຍລົງທຶນຂອງລັດຈະຊ່ວຍໃຫ້ການຄຸ້ມຄອງໂຄງການ PIP ໄດ້ດີຂຶ້ນກວ່າເກົ່າ ໄດ້ປະກົດຜົນເປັນຈິງ, ແລະ ໃນຈຸດນີ້ PCAP2 ຈະສືບຕໍ່ໃຫ້ການສະໜັບສະໜູນເສີມສ້າງຂີດຄວາມສາມາດຂອງການຄຸ້ມຄອງ PIP ໃນ ສປປ ລາວ.
- ໃນບົດກ່າວປິດ, ທ່ານ. ວິໄຊ ຊາວວັນນາ ໄດ້ຢືນຢັນຜົນ ແລະ ກິດຈະກຳທີ່ຈະມາເຖິງຂອງໂຄງການ PCAP2. ໃນຂະນະທີ່ຊົມເຊີຍຄວາມພະຍາຍາມຂອງພະນັກງານຂອງ MPI ແລະ ໂຄງການ PCAP2, ລາວໄດ້ເລັ່ງໃຫ້ເສີມຂະຫຍາຍຄວາມພະຍາຍາມຂອງການຄຸ້ມຄອງ PIP ຕື່ມອີກ.
- ກອງປະຊຸມໄດ້ຈົບລົງໃນເວລາ 11:30 ໂມງ.

## < ກອງປະຊຸມພົບປະ JCC ຄັ້ງທີຫ້າ >

ວັນທີ: 26 ສິງຫາ 2010

ສະຖານທີ່: ສູນຝຶກອົບຮົມການຮ່ວມມືສາກົນ (ICTC)

ຜູ້ເຂົ້າຮ່ວມ: ລວມມີ;

ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI

ທ່ານ. ບຸນປອນ ສີສຸລາດ, ຫົວໜ້າກົມຂອງ MPIDOE

ທ່ານ. ໂຍຊິຮາຣູ ໂຍເນຢາມາ, ຜູ້ຕາງໜ້າອາວຸໂສຂອງຫ້ອງການ JICA ປະຈຳ ສປປ ລາວ

ຜູ້ຕາງໜ້າຈາກກະຊວງການເງິນ

ທ່ານ ນາງ. ອາເກມິ ອິຊິກາວາ ຈາກສະຖານທູດຍີ່ປຸ່ນ

ສະມາຊິກ PCAP2 ແລະ ພະນັກງານຄູ່ຮ່ວມພັດທະນາຈາກ MPIDOE, MPIDOP ແລະ MPIDIC

ເນື້ອໃນຂອງກອງປະຊຸມ:

- ກ່າວເປີດໂດຍ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI ແລະ ຫົວໜ້າໂຄງການ PCAP2
- ການນຳສະເໜີຜົນຂອງໂຄງການ PCAP2 ປີທີສາມ (ເດືອນຕຸລາ 2009 ຫາ ສິງຫາ 2010) ໂດຍທ່ານ. ບຸນປອນ ສີສຸລາດ, ຫົວໜ້າກົມຂອງ MPI-DOE ແລະ ຜູ້ບໍລິຫານໂຄງການ PCAP2
- ການນຳສະເໜີຜົນຂອງການປະເມີນຜົນຫລັງ 2010 ໂດຍທ່ານ. ລັມພັນ ພັນພົມສານາ, ຫົວໜ້າພະແນກຂະແໜງເສດຖະກິດ
- ການນຳສະເໜີຄູ່ມືນຳໃຊ້ ແລະ ປື້ມຄູ່ມືໃໝ່ ໂດຍ ທ່ານ. ວິລາພັນ ດວງທອງຄຳ, ຫົວໜ້າພະແນກບໍລິຫານແລະ ສັງລວມ
- ການນຳສະເໜີແຜນກິດຈະກຳສຳລັບໂຄງການ PCAP2 ປີທີສີ່ (ເດືອນຕຸລາ 2010 ຫາ ສິງຫາ 2011), ໂດຍທ່ານ. ບຸນປອນ ສີສຸລາດ
- ການນຳສະເໜີຜົນທີ່ຄາດຫວັງໄວ້ຂອງໂຄງການ PCAP2, ໂດຍທ່ານ. ອິຊິໂຣ ໂອກູມູຣາ, ຫົວໜ້າທີ່ປຶກສາຂອງ PCAP2
- ການນຳສະເໜີບາດກ້າວຕໍ່ໄປໃນການປັບປຸງການຄຸ້ມຄອງ PIP, ໂດຍທ່ານ. ບຸນປອນ ສີສຸລາດ
- ບົດກ່າວໂດຍ ທ່ານ. ໂຍຊິຮາຣູ ໂຍເນຍາມາ, ຜູ້ຕາງໜ້າອາວຸໂສຂອງຫ້ອງການ JICA ປະຈຳ ສປປ ລາວ
- ກ່າວປິດໂດຍ. ບຸນປອນ ສີສຸລາດ

ການສະຫລຸບ ແລະ ບັນຫາທີ່ຕ້ອງໄດ້ຕິດຕາມ:

- ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI ໄດ້ໃຫ້ຄຳແນະນຳໃນບົດກ່າວເປີດທີ່ວ່າ ການຈັດຕັ້ງປະຕິບັດໂຄງການໃນປະຈຸບັນແມ່ນລາບລື່ນ, ແລະ ຜົນໄດ້ຮັບເຊັ່ນ ການຈັດຝຶກອົບຮົມ ແລະ ຄູ່ມືນຳໃຊ້ ແມ່ນຖືກເບິ່ງວ່າມີຄຸນນະ ພາບສູງ. ທ່ານໄດ້ຮຽກຮ້ອງພະນັກງານ MPI ແລະ ພະນັກງານໂຄງການຢ່າງແຂງແຮງເພື່ອໃຫ້ນຳໃຊ້ຜົນໄດ້ຮັບເຫລົ່ານັ້ນໃຫ້ໄດ້ດີທີ່ສຸດ, ແລະ ຮັບປະກັນວ່າປະສິດທິພາບ ແລະ ປະສິດທິຜົນທີ່ແທ້ຈິງສາມາດເຫັນໄດ້ໃນໂຄງການ PIP ໃນປີຕໍ່ມາ. ທ່ານຍັງໄດ້ຊີ້ແນະໃຫ້ພະນັກງານ MPI ແລະ ພະນັກງານໂຄງການ ຮັບປະກັນວ່າ ລະບົບຄວາມຍືນຍົງແມ່ນໄດ້ຖືກສ້າງຂື້ນ, ເພື່ອວ່າ ໂຄງການ PIP ຈະກາຍເປັນຜົນສຳເລັດຕົ້ນຕໍຂອງເປົ້າໝາຍ NSEDP.
- ທ່ານ. ບຸນປອນ ສີສຸລາດ, ຫົວໜ້າກົມ MPI-DOE ໄດ້ມີຄຳເຫັນໃນເວລານຳສະເໜີວ່າ ຍັງສາມາດມີການປັບປຸງຕໍ່ໄປໄດ້ອີກ ແລະ ໄດ້ຮັບການເຜີຍແຜ່ໃນຮູບແບບຂອງຂັ້ນຕອນ ແລະ ວິທີການໃໝ່ ໃນຂັ້ນທີ່ຈະມາເຖິງ, ເຊັ່ນ; ການພັດທະນາຊັບພະຍາກອນມະນຸດ, ການສ້າງແຜນໄລຍະກາງຂອງ PIP, ການພັດທະນາການສິ້ນສຸດໂຄງການ ແລະ ມອບໂອນຂັ້ນຕອນ ແລະ ວິທີການຄຸ້ມຄອງທຶນສົມທົບໂຄງການ ODA ທີ່ຄົບຖ້ວນ. ລາວໄດ້ລາຍງານວ່າ MPI ກຳລັງຮ້ອງຂໍການຮ່ວມມືດ້ານເຕັກນິກຈາກ JICA ໂດຍຜ່ານຂັ້ນຕອນທາງການຂອງລັດຖະບານ.
- ທ່ານ.ໂຍຊິຮາຣູ ໂຍເນຢາມາ, ຜູ້ຕາງໜ້າອາວຸໂສຂອງຫ້ອງການ JICA ປະຈຳ ສປປ ລາວ ໄດ້ສະແດງຄວາມຍິນດີໃນຄວາມພະຍາຍາມຮ່ວມກັນລະຫວ່າງ MPI ແລະ PCAP2, ໂດຍມີການນຳທີ່ດີເລີດຈາກຜູ້ໂຄງການ. ລາວໄດ້ໃຫ້ຄຳເຫັນກ່ຽວກັບສິ່ງທ້າທາຍຕໍ່ກັບໂຄງການ PCAP2 ປີສຸດທ້າຍໂດຍຜ່ານຂັ້ນຕອນການສ້າງງົບປະມານ PIP ສົກປີ 2011/12, ໄປພ້ອມໆກັບ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມຄັ້ງທີເຈັດ 20112015 ທີ່ເໝາະສົມ.
- ໄດ້ມີບາງຄຳເຫັນທີ່ວ່າການຈັດຫາໂອກາດຕື່ມອີກເພື່ອໃຫ້ມີການແລກປ່ຽນປະສົບການຂອງໂຄງການລະຫວ່າບັນດາແຂວງ ແລະ ອົງການຈັດຕັ້ງຂອງລັດ, ການຈັດຫາລະບົບທີ່ຍືນຍົງລວມທັງວິທີການພັດທະນາຊັບພະຍາກອນມະນຸດແມ່ນຈຳເປັນ. ມັນໄດ້ມີຂໍ້ຮຽກຮ້ອງໃຫ້ໂຄງການຄວນພິຈາລະນາຈັດຝຶກອົບຮົມຢູ່ປະເທດທີສາມ ໃນບາງປະເທດເພື່ອນບ້ານ ເນື່ອງຈາກວ່າແຜນການຈັດຝຶກອົບຮົມໃນປີນີ້ຖືກຍົກເລີກໄປ. ຍັງມີຂໍ້ຮຽກຮ້ອງຕື່ມອີກ ໃຫ້ມີໂອກາດໄປຢ້ຽມຢາມສະຖາທີ່ຈັດຕັ້ງປະຕິບັດໂຄງການໃຫ້ຫລາຍຂື້ນ, ເນື່ອງຈາກວ່າ ໃນໄລຍະໂຄງການ PCAP2 ໂອກາດສ່ວນໃຫຍ່ແມ່ນເພື່ອໄປຢ້ຽມຢາມແຂວງເພື່ອຈັດຝຶກອົບຮົມ.
- ການພົບປະ JCC ໄດ້ປິດລົງໂດຍທ່ານ. ບຸນປອນ ສີສຸລາດ ໃນເວລາ 5:00 ໂມງແລງ.

< ກອງປະຊຸມພົບປະ JCC ຄັ້ງທີຫົກ >

| |
|---|
| ວັນທີ/ເວລາ: 25 ມີນາ 2011, 2:00 ໂມງແລງ ເຖິງ 4:00 ໂມງແລງ |

ສະຖານທີ່: ຫ້ອງປະຊຸມ MPI

ຜູ້ເຂົ້າຮ່ວມ: ລວມມີ;

ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍຂອງ MPI
ທ່ານ. ບຸນປອນ ສີສຸລາດ, ຫົວໜ້າກົມຂອງ MPI-DOE
ທ່ານ. ອາກິໂກ ໂຕມິຕາ, ຫົວໜ້າຜູ້ຕາງໜ້າຫ້ອງການ JICA ປະຈໍາ ສປປ ລາວ
ຜູ້ຕາງໜ້າຈາກກະຊວງການເງິນ
ທ່ານ ນາງ. ອາເກມິ ອິຊິກາວາ ຈາກສະຖານທູດຍີ່ປຸ່ນ
ສະມາຊິກ PCAP2 ແລະ ພະນັກງານຄູ່ຮ່ວມພັດທະນາຈາກ MPI-DOE, MPI-DOP ແລະ MPI-DIC

ເນື້ອໃນຂອງການພົບປະ:

- ກ່າວເປີດໂດຍ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍ MPI ແລະ ຫົວໜ້າໂຄງການ PCAP2
- ການນໍາສະເໜີຜົນຂອງການຝຶກອົບຮົມໃນທົ່ວປະເທດສົກປີ 2010/11 (ຝຶກອົບຮົມພາກ III) ໂດຍ ທ່ານ ນາງ. ສົມພັດ ສຸວັນນາວົງ, ຫົວໜ້າພະແນກສັງຄົມ, MPI-DOE
- ການນໍາສະເໜີກິດຈະກໍາທີ່ເຫລືອ ແລະ ລະດັບຜົນສໍາເລັດທີ່ຄາດຫວັງໄວ້ຂອງຜົນໄດ້ຮັບ ແລະ ເປົ້າໝາຍຂອງໂຄງການຈົນຮອດການສິ້ນສຸດຂອງໂຄງການ PCAP2 ໂດຍທ່ານ. ອິຊິໂຣ ໂອກູມູຣາດ, ຫົວໜ້າທີ່ປຶກສາຂອງໂຄງການ PCAP2
- ການນໍາສະເໜີຂອງຂັ້ນຕໍ່ໄປໃນການປັບປຸງການຄຸ້ມຄອງ PIP, ໂດຍທ່ານ. ບຸນປອນ ສີສຸລາດ
- ບົດກ່າວໂດຍທ່ານ. ມາສາໂຕ ໂຕກາວາ, ຫົວໜ້າຜູ້ຕາງໜ້າຫ້ອງການ JICA ປະຈໍາສປປ ລາວ
- ກ່າວປິດໂດຍທ່ານ. ບຸນປອນ ສີສຸລາດ

ການສະຫລຸບ ແລະ ບັນຫາທີ່ຕ້ອງໄດ້ຕິດຕາມ:

